# ທັດສະນະພື້ນຖານ

ຂອງ

## ພະນັກງານແລະພາລະກອນປະຕິວັດ

ສຳນັກພິມຈຳໜ່າຍ ສປປລ

1978

# ທັດສະນະພື້ນຖານ

ຂອງ

## ພະນັກງານແລະພາລະກອນປະຕິວັດ

ສຳນັກພິມຈຳໜ່າຍ ສປປລ

1978

# ຄຳນຳຫນ້າ

ທ່ານຜູ້ອ່ານ ແລະຜູ້ຮຽນຍ່ອມຮູ້ດີແລ້ວວ່າພວກເຮົາເຮັດການປະຕິວັດແມ່ນເພື່ອປົດປ່ຽຊາດ, ປົດປ່ຽປະຊາຊົນຜູ້ອອກແຮງງານທີ່ຖືກກົດຂີ່ຂູດຮີດ,ດັດແປງສັງຄົມເກົ່າ ແລະກ່ສ້າງສັງຄົມໃຫມ່ທີ່ບໍ່ມີຄົນຂູດຮີດຄົນ ການປະຕິວັດແມ່ນວຽກງານອັນໃຫ່ຽຍິ່ງຫນັກຫນາ. ດັ່ງນັ້ນພວກເຮົາແຕ່ລະຄົນຍາກປະກອບສ່ວນເຂົ້າໃນພາລະກິດຂອງຊາດໃຫ້ໄດ້ດີ, ພວກເຮົາຕ້ອງຮ່ຳຮຽນທິດສະດີປະຕິວັດຈິ່ງຈະເຮັດການປະຕິວັດໄດ້. ເພາະວ່າທິດສະດີນັ້ນຈະຊ່ວຍໃຫ້ພວກເຮົາຮັບຮູ້ກົດເກນຂະຫຽາຽຕົວ ຂອງສັງຄົມ ແລະ ກຳແຫນ້ນລັກສະນະຕໍ່ສູ້ຊົນຊັ້ນ. ພ້ອມກັນນັ້ນກ່ຈະຊ່ວຍໃຫ້ພວກເຮົາມີພື້ນຖານແນວຄິດ ເພື່ອຮັບຮູ້ແນວທາງນະໂຍບາຽ ຂອງການປະຕິວັດຍົກສູງລະດັບ ຄວາມຮູ້ສຶກຕື່ນຕົວໃຫ້ສູງຂື້ນ ສຳລັບຕອບສະຫນອງຄວາມຮຽກຮ້ອງຕ້ອງການຂອງການປະຕິວັດ. ສະນັ້ນພວກເຮົາຈິ່ງຄວນ

ເອົາໃຈໃສ່ອ່ານ ແລະ ຮຽນບັນດາທັດສະນະພື້ນຖານຂອງລັດທິມາກ—ເລ ນິນຄື: ທັດສະນະແຮງງານ, ທັດສະນະຊົນຊັ້ນແລະທັດສະນະມະຫາຊົນ. ເພື່ອໃຫ້ຮູ້ກຳແຫນ້ນແລະຫມູນໃຊ້ທິດສະດີປະຕິວັດໃຫ້ດີນັ້ນ, ພວກເຮົາ ຕ້ອງມີທັດສະນະປະຕິວັດ, ມີທັດສະນະປະຕິວັດ ຈິ່ງຈະສາມາດຕໍ່ສູ້ລົບ ລ້າງທັດສະນະອັນເກົ່າແກ່ຫລ້າຫລັງ ໃຫ້ເສື່ອມສູນໄປໄດ້. ເມື່ອໃດພວກ ເຮົາຮູ້ໄດ້ບົດບາດ ແລະ ຄຸນຄ່າຂອງແຮງງານ ແມ່ນອັນປະເສີດເລີດລ້ຳ ພວກເຮົາຈິ່ງຈະສ້າງທັດສະນະ ແຮງງານອັນຖືກຕ້ອງ ໃສ່ແນວຄິດຂອງ ຕົນໄດ້. ເມື່ອໃດພວກເຮົາຮູ້ໄດ້ຊົນຊັ້ນທີ່ບໍ່ລະບັກກັບຢູ່ໃນສັງຄົມພວກເຮົາ ຈິ່ງສ້າງໄດ້ຫລັກຫມັ້ນຊົນຊັ້ນປະຕິວັດ, ຮູ້ໄດ້ບົດບາດຂອງມະຫາຊົນທີ່ ເປັນຜູ້ສ້າງປະຫວັດສາດ ແລະ ເຮັດໃຫ້ສັງຄົມກ້າວຫນ້າຂະຫຍາຍຕົວ; ເມື່ອຮູ້ໄດ້ແນວນັ້ນເຮົາຈິ່ງຈະຮູ້ຮັກແພງປະຊາຊົນ ແລະ ຊົນຊັ້ນຜູ້ທີ່ອອກ ແຮງງານໄດ້.

ດັ່ງນັ້ນເຮົາຈິ່ງຂໍສະເຫນີໃຫ້ຜູ້ອ່ານ ແລະ ຜູ້ຮຽນປຶ້ມຫົວນີ້ຈົ່ງຄົ້ນ ຄວ້າໄຈ້ແຍກໃຫ້ເຫັນແຈ້ງລະຫວ່າງທັດສະນະອັນຖືກກັບອັນຜິດເພື່ອສົມ ທຽບໃສ່ແນວຄິດ ແລະການກະທຳຂອງຕົນ, ໃຫ້ຮູ້ວ່າແນວຄິດຂອງຕົນ

ພວມເປັນໄປຕາມທັດສະນະອັນໃດ. ເພື່ອດັດແປງແກ້ໄຂສິ່ງທີ່ຜິດແລະ ຂະຫຍາຍສົ່ງເສີມສິ່ງທີ່ຖືກ, ເຮັດໃຫ້ພວກເຮົາມີທັດສະນະພື້ນຖານນັບ ມື້ແຫນ້ນຫນາຂຶ້ນ ແລະ ອີງໃສ່ທັດສະນະອັນພື້ນຖານນີ້ເພື່ອຄົ້ນຄ້ວາຣ່ຳ ຣຽນນະໂຍບາຍແນວທາງຂອງການປະຕິວັດ, ຈຶ່ງຈະຍົກໄດ້ລະດັບການ ເມືອງແນວຄິດ,ຫລັກຫມັ້ນຊົນຊັ້ນແລະຄວາມສາມາດດ້ານວຽກງານຕົວ ຈິງຂຶ້ນເທື່ອລະກ້າວ ສົມກັບວ່າພວກເຮົາເປັນພະນັກງານ ພາລະກອນ ປະຕິວັດ.

ຈັນມີ—ດວງບຸດີ

ຕອນທີ່ໜຶ່ງ

# ທັດສະນະແຮງງານ

## I. ການອອກແຮງງານມີຂີດຂາດແລະມີຄຸນປະໂຫຍດແນວໃດ ?

### ໑. ການອອກແຮງງານແມ່ນຫຍັງ ?

ຕາມທຳມະດາຄົນເຮົາເຄີຍເຂົ້າໃຈກັນວ່າ : ການອອກແຮງງານແມ່ນໄປຂຸດດິນພັນໄມ້ ແລະ ເຮັດວຽກອັນໃດອັນໜຶ່ງ ທີ່ເປັນການເຄື່ອນໄຫວທຳມາຫາລ້ຽງຊີວິດຂອງຄົນ ຖ້າເຂົ້າໃຈເທົ່ານັ້ນແມ່ນບໍ່ພຽງພໍເທື່ອ, ເພາະມັນຈະເຂົ້າໃຈ ປົນ ເປ ລະ ຫວ່າງ ການ ອອກແຮງ ຂອງຄົນກັບການເຄື່ອນໄຫວ ຫາກິນຕາມທຳມະຊາດຂອງສັດ ແລະ ລະຫວ່າງ ຊົນຊັ້ນ ຜູ້ທີ່ ອອກແຮງງານ ກັບຊັ້ນຄົນ ທີ່ບໍ່ອອກແຮງງານ. ດັ່ງນັ້ນພວກເຮົາຕ້ອງຈຳແນກໃຫ້ເຫັນແຈ້ງຢ່າງຄັກແນ່ກ່ຽວກັບທາດແທ້ ແລະ ບົດບາດສຳຄັນຂອງການ ອອກແຮງງານໃນປະຫວັດສາດຂອງມະນຸດ. ຮັບຮູ້ໄດ້ທາດແທ້ຂອງບັນຫາພວກເຮົາ ຈຶ່ງຈະມີທັດສະນະທ່າ

ຫືອບັຖືກຕ້ອງຕໍ່ການອອກແຮງງານ.

ສິ່ງທີ່ເຮັດໃຫ້ເຮົາຈຳແນກໄດ້ ການແຕກຕ່າງກັນລະຫວ່າງການອອກແຮງງານຂອງຄົນ ກັບການເຄື່ອນໄຫວຕາມຄວາມຊຶ່ນເຄີງ ທຳມະຊາດຂອງສັດນັ້ນແມ່ນມີຈຸດພິເສດຕ່າງກັນດັ່ງລຸ່ມນີ້.

– ສັດເຄື່ອນໄຫວຊອກຫາກິນນັ້ນ ແມ່ນອີງຕາມຄວາມຊຶ່ນເຄີງ ຕາມທຳຊາດ ; ມັນບໍ່ໄດ້ມີຈຸດປະສົງ ແລະ ນຳໃຊ້ເຄື່ອງມືຄືຄົນເຮົາໄດ້. ເພາະສະນັ້ນຊີວິດຂອງສັດຈິ່ງແມ່ນຂຶ້ນກັບທຳມະຊາດຢ່າງສິ້ນເຊີງ ເພາະການເຄື່ອນໄຫວຂອງສັດບໍ່ມີເວລາໃດຈະປ່ຽນແປງຈັກເທື່ອ, ແຕ່ໃດໆມາສັດກໍ່ສືບເນື່ອງຕໍ່ໆກັນມາຕາມສາຍທຳມະຊາດເທົ່ານັ້ນ ຍົກຕົວຢ່າງຄື : ໄກ່ກໍ່ໃຊ້ແຕ່ຕີນຄັວດເຂ່ຍ, ສົບຕອດແຕ່ເກີດມາ ຈົນຮອດມື້ມັນຕາຍກໍ່ບໍ່ມີຫຍັງປ່ຽນແປງ, ສັດບາງຊະນິດເຮັດຮວງຮັງຈົນດີ ເພິ່ງແດດເພິ່ງຝົນໄດ້ ແຕ່ກໍ່ແມ່ນເຮັດ ຕາມຄວາມຊຶ່ນເຄີງຂອງທຳມະຊາດສັດ, ແຕ່ໃດມາກໍ່ຄືແຕ່ມື້ຕໍ່ໄປ ແມ່ນບໍ່ມີເວລາປ່ຽນແປງໄດ້, ໂຕຊ້າງໃຊ້ງວງງາ, ງົວຄວາຍໃຊ້ລີ້ນໃຊ້ແຂ້ວ ຫາກິນດ້ວຍອິນຊີທຳມະຊາດ, ບໍ່ວ່າສັດຊະນິດໃດແມ່ນບໍ່ຮູ້ປະດິດເຄື່ອງມື ແລະ

ນຳໃຊ້ເຄື່ອງມື. ສະນັ້ນມັນບໍ່ຫ່ອນຈະປຽບກັບການອອກແຮງງານຂອງຄົນໄດ້.

– ຄົນເຮົາອອກແຮງງານແມ່ນການເຄື່ອນໄຫວດ້ວຍການ ແລະ ມັນສະຫມອງໂດຍມີຈຸດປະສົງ ແລະ ມີເປົ້າໝາຍຂອງການອອກແຮງງານແຕ່ລະຊະນິດ : ເວົ້າປ່າງງ່າຍດາງແມ່ນຄົນເຮົາຮູ້ໃຊ້ຫົວຄິດປະດິດສ້າງຫາທຸກວິທີໃຫ້ໄດ້ຕາມຈຸດປະສົງຂອງຕົນ ໂດຍມີການກະຕວງລ່ວງຫນ້າມີແຜນການໄວ້ກ່ອນ ; ຍົກຕົວຢ່າງເຮົາເຮັດເຮືອນຫລັງຫນຶ່ງເຮົາກໍມີແນວຄິດວ່າຈະເຮັດເພື່ອຈຸດປະສົງຫຍັງ ຈະເຮັດແບບໃດຈະເຮັດເຮືອນດ້ວຍໄມ້ຫລືເຮືອນດິນກໍອີງໃສ່ບ່ອນມີໄມ້ມີດິນ. ນັ້ນແມ່ນເປົ້າຫມາຍຂອງການອອກແຮງງານ. ຕົວຢ່າງເຮົາເຮັດໄຮ່ເຮັດນາ ກໍມີແນວຄິດວ່າເຮັດເພື່ອຈຸດປະສົງຫຍັງເຮັດຫນ້ຽງເຮັດຫລາຍປານໃດ, ຈະຕ້ອງຊອກຫາບ່ອນມີປ່າເພື່ອຖາງໄຮ່, ບ່ອນດິນພຽງມີຫ້ວຍນ້ຳເພື່ອເຮັດນາ, ດິນພຽງປ່າໄມ້ຫ້ວຍນ້ຳນັ້ນແມ່ນເປົ້າຫມາຍອອກແຮງງານ ທີ່ແນໃສ່ຈຸດປະສົງ ທີ່ຈະແກ້ໄຂການອຶດປາກ, ນັ້ນແມ່ນຈຸດພິເສດທີ່ຕ່າງກັນກັບສັດອັນທີຫນຶ່ງ.

– ຈຸດພິເສດອັນທີສອງ ແມ່ນຄົນເຮົາຮູ້ປະດິດເຄື່ອງມື

ແລະ ນຳໃຊ້ເຄື່ອງມືເພື່ອອອກແຮງງານ. ເວົ້າເຖິງເຄື່ອງມື ແມ່ນມີຫລາຍຊະນິດ. ແຕ່ພວກເຮົາຄວນເຂົ້າໃຈນຳກັນ ວ່າວັດຖຸສິ່ງຂອງ ທີ່ຄົນເຮົາ ໃຊ້ເຮັດວຽກງານຜະລິດນັ້ນ ເອີ້ນວ່າເຄື່ອງມືການຜະລິດເຄື່ອງມື ສຳລັບອອກແຮງງານ ນັ້ນ ແມ່ນຄວາມຕ້ອງການທີ່ຈຳເປັນຂອງຄົນເຮົາ, ເພາະ ວ່າເຄື່ອງມື ແມ່ນສິ່ງຊ່ວຍໃຫ້ແຮງງານຂອງຄົນມີຄຸນະ ພາບສູງ ແລະ ມີຄວາມສະດວກໃນການຜະລິດດັດແປງ ທຳມະຊາດເພື່ອມາຮັບໃຊ້ ຊີວິດການເປັນຢູ່ ຂອງຄົນເຮົາ. ຖ້າໃຊ້ເຄື່ອງມືດີທັນສະໄໝ ຄຸນປະໂຫຍດ ຂອງແຮງງານ ກໍ່ໄດ້ຍົກສູງຂື້ນ, ວັດຖຸສິ່ງຂອງທີ່ຜະລິດອອກໃນສັງຄົມກໍ ອຸດົມສົມບູນ ຖ້າເຄື່ອງ ມືນັ້ນ ຫາກຫລ້າສະໄໝ ການຜະ ລິດກໍຊັກຊ້າ ແລະ ເຄື່ອງຂອງທີ່ຜະລິດອອກໃນສັງຄົມກໍມີ ໜ້ອຍແລະທັງເປືອງແຮງງານຂອງຄົນອີກຊ້ຳ ; ຕົວຢ່າງ : ຊາວນາໃຊ້ໄຖເອົາຄວາຍແກ່ ບໍ່ຫ່ອນແພ້ຜູ້ເອົາຈັກໄຖນາ ການທີ່ຄົນເຮົາຮູ້ໃຊ້ເຄື່ອງມື ເພື່ອອອກແຮງງານນັ້ນມັນໄດ້ ເຮັດໃຫ້ການຜະລິດກິດສ້າງຂອງຄົນເຮົານັບມື້ນັບຂະຫຍາຍ ຕົວ, ມີຄວາມສາມາດດັດແປງທຳມະຊາດໃຫ້ກາຍມາ ຮັບໃຊ້ຈຸດປະສົງຂອງຄົນຢ່າງກວ້າງຂວາງ.

ຢູ່ໃນບັນດາປະເທດ ສັງ ຄົມ ນິຍົມ, ຫລັງຈາກໄດ້ປົດ ປ່ຽ ປະ ຊາ ຊົນຜູ້ອອກແຮງງານແລ້ວ, ກຳລັງການຜະລິດໄດ້ຂະຫຍາຽຕົວຢ່າງເຂັ້ມແຂງ, ເຄື່ອງມືໃນການອອກແຮງງານແມ່ນທັນສະໄຫມ, ວັດຖຸທີ່ຜະລິດອອກໄດ້ຕອບສະຫນອງຄວາມຮຽກຮ້ອງຕ້ອງການໄດ້ຢ່າງເຫມາະສົມ. ດັ່ງນັ້ນການອອກແຮງງານຈຶ່ງໄດ້ລົດຜ່ອນ, ວັດຖຸທີ່ຈະຜະລິດອອກຊ້ຳພັດນັບມື້ນັບຂະຫຍາຍຕົວ, ຊີວິດການເປັນຢູ່ຂອງປະຊາຊົນບັນດາປະເທດດັ່ງກ່າວນັ້ນ ກໍນັບມື້ນັບອຸດົມສົມບູນຂຶ້ນໄປເລື້ອຍໆ.

ແຕ່ນາສັງເກດເບິ່ງເຄື່ອງມືທີ່ຄົນລາວເຮົາ ໃຊ້ທຸກມື້ນີ້ແມ່ນຍັງຫລ້າຫລັງທີ່ສຸດ. ສະນັ້ນຊີວິດການເປັນຢູ່ຂອງປະ ຊາ ຊົນ ຜູ້ ທີ່ ອອກແຮງງານບັນດາຊົນຊາດໃນປະເທດເຮົາຈຶ່ງທຸກຍາກຂາດເຂີນ. ສະພາບການເປັນແນວນັ້ນ ກໍແມ່ນຍ້ອນຈັກກະພັດ ແລະ ລູກມືຂອງມັນກົດຂີ່ຂູດຮີດຫນີບເຕັງກົດຫນ່ວງ ບໍ່ໃຫ້ພວກເຮົາຂະຫຍາຽຄວາມສາມາດໃນການຜະລິດຄິດສ້າງເຄື່ອງມືໄດ້.

ລວມ ຄວາມ ວ່າ ການອອກແຮງງານແມ່ນການເຄື່ອນໄຫວ ຂອງຄົນດ້ວຍກາຍ ແລະ ມັນສະຫນອງໂດຍມີຈຸດ

ປະສົງ ແລະ ມີເປົ້າຫມາຍອອກແຮງງານ, ຮູ້ປະດິດເຄື່ອງມືແລະນຳໃຊ້ເຄື່ອງມືໄປດັດແປງທຳມະຊາດ, ບັງຄັບໃຫ້ທຳມະຊາດມາຮັບໃຊ້ຊີວິດການເປັນຢູ່ຂອງຄົນ ໃຫ້ໄດ້ຕາມຈຸດປະສົງ ແລະ ຄວາມຕ້ອງການ. ນັ້ນແມ່ນຄວາມໝາຍແຫ່ງການອອກແຮງງານ. ອີງໃສ່ຄວາມຫມາຍນີ້ເບິ່ງໄດ້ສັດແມ່ນບໍ່ອອກແຮງງານ ແລະ ພວກເຮົາຄວນໃຊ້ຄວາມຫມາຍສອງປະການນີ້ ເພື່ອວັດແທກ ໃຫ້ເຫັນແຈ້ງຊົນຊັ້ນ ຜູ້ທີ່ອອກແຮງງານກັບຊັ້ນຄົນຜູ້ບໍ່ອອກແຮງງານເພື່ອເຮັດການຜະລິດ.

໖. ບົດບາດແລະຄຸນປະໂຫຍດສຳຄັນຂອງແຮງງານເພື່ອເຮັດການຜະລິດ.

— ອອກແຮງງານ ເພື່ອເຮັດການຜະລິດແມ່ນມີບົດບາດແລະຄຸນປະໂຫຍດອັນສຳຄັນຕໍ່ຄົນເຮົາ ແລະ ສັງຄົມມະນຸດ. ໃນເມື່ອຊີວິດຂອງຄົນເຮົາຈະຍືນຍົງຄົງຕົວຕະຫລອດໄປເຖິງມື້ເຖົ້າມື້ຕາຍຈະຕ້ອງ ມີກິນ ມີນຸ່ງ ມີເຄື່ອງໃຊ້ໄມ້ສອຍ, ແຕ່ເຄື່ອງກິນຂອງນຸ່ງ ແລະ ເຄື່ອງໃຊ້ໄມ້ສອຍ ນັ້ນບໍ່ແມ່ນມັນຫາກເກີດເອງຕາມທຳມະຊາດໄດ້ຫມົດທຸກອັນ, ມັນຕ້ອງແມ່ນແຮງງານຂອງຄົນນັ້ນເອງເປັນຜູ້ຜະລິດອອກໃຊ້ ອອກກິນ; ອອກຈາກແຮງງານຜະລິດອອກແລ້ວແມ່ນບໍ່ມີເຫບ

ພະດາອົງໃດ ຫລືສິ່ງສັກສິດອັນໃດ ຈະປັ້ນແຕ່ງເຄື່ອງໃຊ້ ຂອງກິນມາໃຫ້ຄົນໄດ້, ຕະຫລອດຮອດຊົນຊັ້ນຂູດຮີດ ເຂົາຮັ່ງມີສະຫນຸກສະຫນານນັ້ນ ກໍແມ່ນຍ້ອນແຮງງານ ຂອງຊົນຊັ້ນຖືກກົດຂີ່ຂູດຮີດເປັນຜູ້ຜະລິດອອກ, ເຂົາຈຶ່ງມີກິນມີນຸ່ງ; ຕົວຢ່າງຊົນຊັ້ນສັກດີນາບາງທືນບໍ່ໄດ້ຂູດຮີດກິນແຮງງານຂອງຜູ້ອື່ນເວລາໃດກໍແມ່ນເຂົາຕາຍເວລານັ້ນ.

– ສັງຄົມມະນຸດຈະກ້າວຫນ້າຂະຫຍາຍຕົວ ຈາກລະບອບນີ້ໄປຫາລະບອບໃຫມ່, ແຕ່ລະບອບອັນຫລ້າຫລັງໄປຫາອັນກ້າວຫນ້າ, ກໍແມ່ນຍ້ອນກຳລັງການຜະລິດກ້າວຫນ້າຂະຫຍາຍຕົວ, ສັງຄົມຈຶ່ງມີການປ່ຽນແປງກ້າວຫນ້າຂຶ້ນ, ເວົ້າເຖິງກຳລັງການຜະລິດນັ້ນມັນມີແຮງງານຂອງຄົນ, ມີເຄື່ອງມືແລະວັດຖຸທຳມະຊາດລວມເຂົ້າກັບເປັນກຳລັງການຜະລິດ. ແຕ່ ປັດໃຈ ສຳ ຄັນກ່ວາຫມູ່ ແມ່ນແຮງງານຂອງຄົນ. ເວລາໃດຫາກມີການພົວພັນອັນສອດຄ່ອງກັບ ກຳ ລັງ ການ ຜະລິດສັງຄົມກໍຂະຫຍາຍຕົວ. ແຕ່ການພົວພັນນັ້ນ ຫາກບໍ່ສອດຄ່ອງກຳລັງການຜະລິດມັນກໍຕໍ່ສູ້ທັບມ້າງໄປຫາການພົວພັນໃຫມ່ຄືປະຈຸບັນນີ້. ສັງຄົມມະນຸດໄດ້ຜັນປ່ຽນໄປເຖິງ 5 ລະບອບກໍແມ່ນຍ້ອນກຳລັງການ

ຜະລິດຂະຫຍາຍຕົວ ກາຍເປັນກົດະເກນຂະຫຍາຍຕົວຂອງສັງຄົມມະນຸດ.

ລວມຄວາມວ່າບົດບາດແລະຄຸນປະໂຫຽດສຳຄັນຂອງແຮງງານແມ່ນລ້ຽງດູຊີວິດຂອງມະນຸດ ແລະລ້ຽງດູສັງຄົມ, ທັງເປັນກົດເກນຂະຫຍາຽຕົວຂອງສັງຄົມ, ຈາກລະບອບອັນ ເກົ່າ ແກ່ ຫລ້າ ຫລັງ ໄປຫາລະບອບອັນກ້າວຫນ້າຈະເລີນຖາວອນ ຄືສັງຄົມນິຍົມອັນບໍ່ມີຊົນຊັ້ນ ບໍ່ມີຄົນຂູດຮີດຄົນ ເຊິ່ງແມ່ນ ຍອດປາຖະຫນາ ຂອງມວນມະນຸດໃນໂລກປະຈຸບັນ.

## ໔. ທັດສະນະແຮງງານຂອງການຜະລິດ

ແຮງງານແມ່ນມີບົດບາດ ແລະ ຄຸນປະໂຫຍດອັນປະເສີດເລີດລ້ຳ ຕໍ່ຄົນ ແລະ ສັງຄົມມະນຸດຄືດັ່ງກ່າວປູ່ຂ້າງເທິງ ນັ້ນ ແຕ່ ຢູ່ ໃນສັງຄົມທີ່ຍັງມີຊົນຊັ້ນປະປັກກັນນັ້ນສິດປະໂຫຍດແຕ່ລະຊົນຊັ້ນກໍມີອັນຕ່າງກັນ ແລະ ທັດສະນະການເບິ່ງ, ການຕີລາຄາແຮງງານແລະວາງທ່າທີຕໍ່ແຮງງານກໍມີອັນຕ່າງກັນເຊັ່ນ :

- ບັນດາຊົນຊັ້ນ ກົດຂີ່ຂູດຮີດ ແມ່ນ ພວກທີ່ບໍ່ ອອກ ແຮງງານ ແຕ່ ຊ້ຳພັດປາກສະຫນຸກ ສະຫນານ ຮັ່ງມີ ໂດຽບໍ່ມີການ

ສິ້ນສຸດ, ການຫລິ້ນກິນໃຊ້ຈ່າຽຟຸມເຟືອຍ; ຊີວິດຂອງເຂົາ ຍືນ ຍົງ ຄົງ ຕົວ ຢູ່ໄດ້ ຍ້ອນການກົດຂີ່ຂູດຮີດກິນແຮງງານ ຂອງປະຊາຊົນ ຂອງຜູ້ອອກແຮງງານ ດ້ວຍເຫດນັ້ນພວກ ມັນຈຶ່ງຊອກຫາທຸກເລ່ຫລ່ຽມເພື່ອພິກປີ້ນຄວາມຈິງແລະ ວິທີລົບລ້າງຄຸນປະໂຫຍດອັນເລີດລ້ຳຂອງແຮງງານ.

ກ) ພວກເຂົາຖືວ່າການອອກແຮງງານແມ່ນຕ່ຳຕ້ຽ ຍ້ອນມີກຳມີເວນ, ຊົ່ວຊ້າຫລ້າຫລັງ, ພວກເຂົາຖືວ່າມີ ແຕ່ນອນຖ້າກິນແຮງງານຂອງຜູ້ອື່ນນັ້ນແມ່ນຫລັກແຫລມ ມີກຽດສັກສີ, ດັ່ງ ນັ້ນ ພວກ ເຂົາຈຶ່ງປະຫມາດດູຖູກແຮງ ງານ ແລະ ບ່ອອກແຮງງານຂີ້ຄ້ານອ່ອນແອ, ເປັນຄົນຮັກ ເຮື້ອ ຫນັກ ແຜ່ນ ດິນ ກິນ ເຂົ້າ ເສັຽ ລ້າງ ພວກມັນບ່ໄດ້ເຮັດ ຫຍັງທີ່ມີຜົນໃຫ້ແກ່ຊາດ ໃຫ້ປະຊາຊົນຮູ້ແຕ່ວິທີຂູດຮີດກິນ ແຮງງານຂອງຜູ້ອື່ນ ບ່ມີເວລາໃດປ່ຽນແປງ, ຍິ່ງກ່ວານັ້ນ ພວກເຂົາຍັງຂັດຂວາງຫນ່ວງຫນ່ຽວ ຄວາມຈະເລີນກ້າວ ຫນ້າຂອງປະເທດຊາດ ແລະ ສັງຄົມ. ອັນຊົ່ວໄປກ່ວານັ້ນ ແມ່ນພວກເຂົາຍັງຍອມເປັນລຸກມື ໃຫ້ຈັກກະພັດເພື່ອກິນ ຄ່າຈ້າງລາງວັນແລ້ວປະຕິບັດກົນອຸບາຽກໍ່ສົງຄາມທຳລາຽ ຊາດ ທຳລາຽປະຊາຊົນຜູ້ອອກແຮງງານ. ພວກມັນແມ່ນ

ບໍ່ເຫັນຄຸນປະໂຫຍດຂອງແຮງງານ, ບໍ່ເຫັນຊາດ ບໍ່ເຫັນປະຊາຊົນຫຍັງຫມົດ, ເຫັນແຕ່ສ່ວນຕົວແລ້ວກົ້ມຫນ້າປະຕິບັດກົນອຸບາຍຂາຍຊາດ ເພື່ອຫາຄວາມລ້ຳລວຍຮັ່ງມີເທົ່ານັ້ນ.

ຂ) ພວກເຂົາຕັ້ງຫນ້າ ຫມິ່ນປະຫມາດດູຖູກປະຊາຊົນຜູ້ອອກແຮງງານ, ຢຽບ ຢ່ຳ ສິດເສລີພາບປະຊາທິປະໄຕ ຂອງປະຊາຊົນຜູ້ອອກແຮງງານຢ່າງປ່າເຖື່ອນ. ພວກເຂົາຖືວ່າປະຊາຊົນຜູ້ອອກແຮງງານ ເປັນຂ້ຽ ຂ້ານ້າໃຊ້ຂອງພວກເຂົາ, ຍົກຍໍພວກເຂົາເປັນຊົນຊັ້ນພິເສດບົ່ງໃຫ່ຽ, ຂົ້ນເຫັງຕົວະບົວະຫລອກລວງປະຊາຊົນຜູ້ອອກແຮງງານ ໂຄສະນາ ພົກປົ້ນຄວາມຈິງ ວ່າ ພວກເຂົາ ມີບຸນວາດສະຫນາ, ເປັນຜູ້ເກັ່ງກ້າສາມາດກ່ວາປະຊາຊົນ ຜູ້ອອກແຮງງານເຂົາຈຶ່ງຮັ່ງມີ, ສ່ວນປະຊາຊົນທຸກຍາກ ນັ້ນແມ່ນຍ້ອນມີບາບມີກຳໂງ່ຈ້າ. ອັນນີ້ແມ່ນກົນອຸບາຍປົດບັງໂທດກ່ຳອັນຊົ່ວຊ້າສາມານຂອງພວກເຂົາເຮັດໃຫ້ປະຊາຊົນຜູ້ອອກແຮງງານຫລົງເຊື່ອຢ່າງງົມງວາຍ. ນອກຈາກນັ້ນຊົນຊັ້ນຂູດຮີດຍັງຫາທຸກວິທີເພື່ອຍຶດຈ່ອງເອົາອຸປະກອນການຜະລິດເປັນກຳມະສິດສ່ວນຕົວ. ຊົນຊັ້ນອອກແຮງງານທີ່ຜະລິດອອກນັ້ນ

ຊ້ຳພັດບໍ່ໄດ້ເປັນເຈົ້າຂອງ, ນັ້ນແມ່ນໂທດກຳອັນປ່າເຖື່ອນທີ່ສຸດຕໍ່ຄຸນຄ່າຂອງແຣງງານ ສິ່ງຂອງທີ່ແຣງງານຜະລິດໄດ້ນັ້ນ ພວກມັນກໍກອບໂກຽເອົາໄປຊົມໃຊ້, ເມື່ອບໍ່ໄດ້ຕາມໃຈມັກຂອງເຂົາໆ ກໍຫາວິທີຈັບກຸມຄຸມຂັງຂ້າຕາຍປະຊາຊົນຜູ້ອອກແຣງງານ. ສ່ວນປະຊາຊົນຊາວໄຮ່ນາ, ກຳມະກອນເປັນຜູ້ອອກແຣງງານ ເຣັດຢ່າງລົ້ນບ່າເຫລືອແຣງຄ່ຳບໍ່ໄດ້ຢືນຄືນບໍ່ໄດ້ຢູ່ ຊ້ຳພັດທຸກຍາກຂາດເຂີນເຂົ້າຂາດແລງແກງຂາດຫມໍ້ເສື້ອຂາດຫນ້າຜ້າຂາດຫລັງ, ຍ້ອນພວກເຂົາກົດຂີ່ຂູດຣີດ, ເກັບເກນ, ປຸ້ນສະດົມປັບໃຫມໃສ່ໂທດກົດຂວາງບໍ່ໃຫ້ເຣັດສ້າງຕາມໃຈມັກ.

ພວກ ຂູດ ຣີດ ບໍ່ ໄດ້ ເຣັດຫຍັງ, ມີແຕ່ຂູດຣີດກິນແຣງງານຂອງຜູ້ອື່ນເທົ່ານັ້ນ; ເຂົ້າທີ່ພວກມັນກິນ, ເຣືອນຊານທີ່ພວກມັນຢູ່, ເຄື່ອງໃຊ້ແລະນຸ່ງຖືທັງຫມົດເຫລົ່ານັ້ນກໍແມ່ນມາຈາກແຣງງານກຳມະກອນ, ຊາວນາຜະລິດອອກ, ພວກເຂົາມີແຕ່ຫຸບຫອບກອບໂກຽເອົາແຣງງານຂອງເຂົາເຈົ້າມາໃຊ້ຈ່າຽຟຸ່ມເຟືອຍແລ້ວພັດຄຸຍໂມ້ ໂອ້ອວດວ່າໂຕເກັ່ງໂຕດີ. ຕົວຈິ່ງຖ້າຫາກບໍ່ມີແຣງງານຂອງປະຊາຊົນຜູ້ອອກແຣງງານ. ແມ່ນພວກມັນບໍ່ຄົງຕົວຢູ່ໄດ້ຢ່າງເດັດຂາດ

ອັນຮ້າຍແຮງກ່ວານັ້ນອີກ ແມ່ນພວກມັນ ໄດ້ແບ່ງແຍກຜູ້ທີ່ອອກແຮງງານໃຫ້ເປັນສອງປະເພດຄື : ດູດຶງຈອບອຸເອົາຜູ້ທີ່ອອກແຮງງານດ້ວຍມັນສະຫມອງ (ສົມມຸດຄືນັກວິທະຍາສາດເຕັກນິກ ຫລືນັກຄົນຄ້ວາແຜນຜັງ, ຜູ້ປະດິດຄິດແຕ່ງແຜນການພະລິດອື່ນໆ ດ້ວຍມັນສະຫມອງ) ຍົກບໍ່ເຂົາຂຶ້ນລະດັບໃດລະດັບຫນຶ່ງ ແລ້ວກົງກັນຂ້າມ ພັດດູຖູກຫມິ່ນປະຫມາດຜູ້ທີ່ອອກແຮງງານດ້ວຍຕີນມື. ມັນແບ່ງແຍກອອກຈາກແຮງງານດ້ວຍມັນສະຫມອງ, ຫາວ່າ "ແຮງງານດ້ວຍມັນສະຫມອງແມ່ນມີກຽດ, ອອກແຮງງານດ້ວຍຕີນມືແມ່ນຕ່ຳຕ້ອຍບໍ່ມີກຽດ, ເປັນຄົນຊົ່ວຊ້າຫລ້າຫລັງ". ມັນເວົ້າແນວນັ້ນແມ່ນເລ່ຫລ່ຽມອັນໂຫດຮ້າຍແລະອັນຕະລາຍທີ່ສຸດ,ເພື່ອແນ່ໃສ່ຮັບໃຊ້ແຜນການຂູດຮີດຂອງພວກເຂົາ. ເພາະວ່າເຮັດໃຫ້ຊົນຊັ້ນອອກແຮງງານດ້ວຍກັນແຕກແຍກກັນ. ເພື່ອແບ່ງກຳລັງແຮງບໍ່ໃຫ້ຊົນຊັ້ນອອກແຮງງານຕໍ່ສູ້ຕ້ານພວກມັນຄືນ.

ອັນທີ່ເວົ້າມາຂ້າງເທິງນີ້ ແມ່ນທັດສະນະແຮງງານຂອງພວກຊົນຊັ້ນຂູດຮີດ ເຊິ່ງເປັນການພິກປີ້ນຄວາມຈິງ. ອັນແນໃສ່ຈຸດປະສົງສ້າງແນວຄິດງົມງວາຍ ໃຫ້ແກ່ຊົນຊັ້ນ

ຜູ້ທີ່ອອກແຮງງານພວກເຮົາ, ເຮັດໃຫ້ຄົນເຮົາເກີດຄວາມຂີ້ຄ້ານມັກງ່າຍ, ອ່ອນແອ, ຂີ້ແບະແງະງອນແລ້ວມີແນວຄິດ ໂລບ ມາກ ໂລ ພາ ຟູມເຟືອຍ ເຫັນແກ່ຕົວ, ເຊື່ອຟັງແລະ ເຮັດຕາມທັດສະນະຂອງພວກຊົນຊັ້ນຂູດຮີດ ແລະກັບ ໄປ ເຊື່ອ ຖື ແລ້ວ ຍອມ ໃຫ້ເຂົາກົດຂີ່ຂູດຮີດຕາມໃຈມັກຂອງພວກເຂົາ.

ປະຈຸບັນນີ້. ໃນຖັນແຖວພະນັກງານ ແລະພະລາກອນຂອງພວກເຮົາ ຍັງຕິດແປດຮ່ອງຮອຍຂອງທັດສະນະຂູດຮີດ ຫນັກຫນ່ວງຢູ່; ເຖິງວ່າໄດ້ເຂົ້າຮ່ວມການປະຕິວັດແລະມີການເຝິກຝົນຫລໍ່ຫລອມມີຄວາມຮູ້ສຶກຕື່ນຕົວ ແລະມີທ່າທີຖືກຕ້ອງຕໍ່ແຮງງານ ກໍຄືຕໍ່ປະຊາຊົນຜູ້ອອກແຮງງານຫລາຍແລ້ວກໍຕາມມັນກໍຍັງມີພະນັກງານ ແລະ ພະລາກອນຈຳນວນຫນຶ່ງທີ່ຍັງຕິດຮ່ອງຮອຍ ຂອງຊົນຊັ້ນຂູດຮີດຫນັກຢູ່ຄື: ຂີ້ຄ້ານອອກແຮງງານ ດ້ວຍມັນສະຫມອງ, ຜູ້ເປັນນັກຮຽນບໍ່ຮູ້ດ້ານອອກແຮງງານດ້ວຍຕີນມື, ຍັງບໍ່ຖືກກັບທັດສະນະປະຕິວັດຂອງຊົນຊັ້ນກຳມະຊີບ.

ອັນຜິດພາດຮ້າງແຮງໄປກ່ວານັ້ນ ແມ່ນຍັງເກີດຫນັກສິດປະໂຫຍດສ່ວນຕົວລັກໂລບເຂົ້າສ່ວນລວມ ແລະ ຂອງ

ໝູ່ຄູ່ໄປໃຊ້ຈ່າຍຢ່າງຟູມເຟືອຍແລ້ວມີທ່າທີຂີ້ອວດຂີ້ຄຸຍ, ດູຖູກຫມິ່ນປະຫມາດປະຊາຊົນຜູ້ອອກແຮງງານ, ປາກກິນອີ່ມນຸ່ງອຸ່ນແຕ່ບໍ່ອອກແຮງຜະລິດ, ປາກມີຫລາຍແຕ່ບໍ່ປາກປະຢັດ, ບໍ່ຮູ້ຮັກແພງແຮງງານຂອງປະຊາຊົນ. ທ່າທີທັງຫມົດນີ້ ລ້ວນແຕ່ຜິດເຂວຕໍ່ທັດສະນະປະຕິວັດຂອງຊົນຊັ້ນກຳມະຊີບ ແລະ ຕ້ອງດັດແປງແກ້ໄຂ.

- ທັດສະນະແຮງງານຂອງພະນັກງານແລະພາລະກອນປະຕິວັດ.

ອີງໃສ່ທິດສະດີວິທະຍາສາດຂອງ ມາກ-ເລນິນ ເປັນພື້ນຖານແຫ່ງແນວຄິດ ເພື່ອຮັບປະກັນຄວາມຈິງແລະມີສິນທຳຕໍ່ມະນຸດ, ທິດສະດີປະຕິວັດໄດ້ຢັ້ງຢືນວ່າ: (ບົດບາດ ແລະ ຄຸນປະໂຫຍດຂອງແຮງງານແມ່ນອັນປະເສີດເລີດລ້ຳຕໍ່ຊີວິດຂອງຄົນແລະຕໍ່ການລ້ຽງດູສັງຄົມມະນຸດຄື :

໑. ແຮງງານສາມາດຜະລິດອອກທຸກສິ່ງວັດຖຸ ທີ່ຕ້ອງການຂອງຄົນແລະສັງຄົມມະນຸດ.

ການດຳລົງຊີວິດຂອງຄົນເຮົາ ແມ່ນແຕກຕ່າງກັນກັບສັດປານຟ້າກັບດິນ, ຄົນເຮົາໃຜຈະຢູ່ໃສກໍຕາມ, ຈະເຮັດຫຍັງກໍຕາມ, ກໍຕ້ອງມີເຂົ້າກິນ, ມີເຄື່ອງໃຊ້ ຂອງສຽ, ເຄື່ອງນຸ່ງຂອງຫົ່ມ, ມີເຮືອນຊານຢູ່ແລະອື່ນໆອີກຫລາຍຢ່າງ. ສິ່ງຂອງເຫລົ່ານັ້ນຈະເອົາມາແຕ່ໃສ ? ຄັນບໍ່ແມ່ນຜູ້

ອອກແຮງງານຜະລິດອອກກໍມີຂຶ້ນບໍ່ໄດ້. ບໍ່ມີໃຜ ຈະ ບັງບົບໄຫວ້ໃຫ້ມັນເກີດຂຶ້ນເອງໄດ້, ຄັນບໍ່ມີຜູ້ອອກແຮງງານເຮັດຂຶ້ນ. ກົງກັນຂ້າມຄັນຕັ້ງຫນ້າອອກແຮງງານເຮັດການຜະລິດ ມັນ ກໍຈະເກີດມີວັດຖຸສິ່ງຂອງທີ່ຕ້ອງການນັບມື້ຫລາຍ ຂຶ້ນ, ເຖິງວ່າວັດຖຸນັ້ນຈະຫລ້າຫລັງຫລືກ້າວຫນ້າທັນສະໄຫມກໍແມ່ນແຮງງານຜະລິດມັນອອກ.

ຕົວຢ່າງ : ມີຊາວໄຮ່ນາປູກເຂົ້າຈຶ່ງມີກິນ, ມີຜູ້ປູກຝ້າຍປູກປ່ານລ້ຽງມ້ອນປ້ອນຫລອກ, ຕ່ຳຫູກເຂັນໄຫມ ຈຶ່ງມີແຜ່ນແພນຸ່ງຫົ່ມ. ແຕ່ກ່ອນການດຳລົງຊີວິດຂອງຄົນແມ່ນງ່າງດາງທີ່ສຸດ, ກິນຫຍັງກໍໄດ້ນຸ່ງຫຍັງກໍເປັນ. ປະຈຸບັນນີ້ຄົນເຮົາຊ້ຳພັດຕ່າງ, ການກິນຢູ່ກໍຢາກກິນຫລາຍແນວທີ່ມັນແຊບ, ການນຸ່ງກໍຢາກນຸ່ງຫລາຍແນວທີ່ມັນງາມ, ການໄປມາກໍຢາກຂີ່ລົດຂີ່ຍົນ, ບ່ອນຢູ່ກໍຢາກຢູ່ເຮືອນຕຶກເຮືອນກໍ່, ການເວົ້າລົມກັນຕໍ່ປາກກໍຢາກໃຊ້ໂທລະເລກໂທລະສັບ, ວິທະຍຸກະຈາຍສຽງ ແລະ ອື່ນໆ ທີ່ຄົນສະໄຫມກ່ອນ ແມ່ນ ງຶດ ງໍ້ ອັດ ສະຈັນສິ່ງທັງຫມົດເຫລົ່ານັ້ນບໍ່ມີໃຜຈະນິລະມິດເອົາໄດ້ອອກ, ມີແຕ່ມັນເກີດອອກມາຈາກແຮງງານຂອງຄົນທັງນັ້ນ.

ບາງທີພວກເຮົາກໍເຫັນຄົນຈຳນວນໜຶ່ງ ທີ່ບໍ່ອອກແຮງງານແຕ່ພັດມີການກິນການນຸ່ງການໃຊ້ຈ່າຍຟຸ່ມເຟືອຍເຫລືອກິນເຫລືອໃຊ້ຢ່າງສະໜຸກສະໜານ, ອັນນັ້ນແມ່ນພ ກຂູດຣີດ. ສິ່ງຂອງທີ່ພວກມັນໃຊ້ຈ່າຍນັ້ນກໍບໍ່ແມ່ນຟ້າແຖນ ອິນ ພົມ ອົງ ໃດ ເອົາ ມາໃຫ້ມັນດອກ : ສິ່ງເຫລົ່ານັ້ນລ້ວນແຕ່ແມ່ນປະຊາຊົນ ຜູ້ ອອກ ແຮງ ງານ ຜະ ລິດ ອອກ, ພວກມັນບໍ່ອອກແຮງງານ ແຕ່ ມັນ ພັດ ຂູດ ຣີດແຮງງານຂອງຜູ້ອື່ນມາລ້ຽງຊີວິດຂອງມັນ. ດັ່ງນັ້ນຈຶ່ງເວົ້າໄດ້ວ່າ : ແຮງງານແມ່ນບໍ່ເກີດຂອງວັດຖຸສິ່ງຂອງ ທຸກສິ່ງທຸກຢ່າງທີ່ຮັບໃຊ້ຊີວິດການເປັນຢູ່ຂອງຄົນເຮົາ ແລະ ລ້ຽງດູສັງຄົມ, ຕົວຈິງດັ່ງກ່າວໄດ້ຢັ້ງຢືນ ຈະ ແຈ້ງ ວ່າ ຖ້າບໍ່ມີການອອກແຮງງານເຮັດການຜະລິດແມ່ນຊີວິດຂອງຄົນ ແລະ ສັງຄົມບໍ່ຍືນຍົງຄົງຕົວໄດ້ເປັນອັນຂາດ.

໖. ແຮງງານແມ່ນສິ່ງດັດແປງທຳມະຊາດ ແລະ ດັດແປງສັງຄົມ.

ຄົນເຮົາແມ່ນຕ່າງກັນກັບໂຕສັດ ດັ່ງໄດ້ກ່າວມາຂ້າງເທິງນັ້ນ. ເຖິງວ່າຈະຢູ່ແຜ່ນດິນຕອນໃດກໍຕາມ ຄົນເຮົາກໍ ອາດ ຈະ ເຮັດ ເຄື່ອງຂອງອອກໃຊ້ອອກກິນໄດ້ ; ຄົນເຮົາຫາລ້ຽງຊີວິດດ້ວຍຕົນເອງ, ແຕ່ທຳມະຊາດແມ່ນເງື່ອນໄຂ

ອຳນວຍໃຫ້ຊີວິດຂອງຄົນເຮົາ. ການອອກແຮງງານຂຸດຄົ້ນທຳມະຊາດນັ້ນ ແມ່ນການເອົາດິນດອນກາງມາເປັນໄຮ່ເປັນນາເພື່ອຮັບໃຊ້ການຜະລິດ, ເວົ້າລວມແລະຂະບວນການ ອອກແຮງງານຜະລິດຂອງຄົນເຮົາ ໃນຕົວຈິງກໍ່ແມ່ນດັດແປງທຳມະຊາດ ແລະບັງຄັບທຳມະຊາດໃຫ້ມາຮັບໃຊ້ສິດປະໂຫຍດຂອງຄົນຢ່າງບໍ່ມີຂອບເຂດ.

ຢູ່ເທິງແຜ່ນດິນລາວເຮົານີ້, ແຕ່ກ່ອນກໍ່ມີແຕ່ພູຜາປ່າດົງຮົກເຮື້ອຫວ່າງເປົ່າ ແຕ່ມາດຽວນີ້ຢູ່ໃສກໍ່ເກີດເປັນໄຮ່ເປັນນາອັນເຕັມໄປດ້ວຍຕົ້ນເຂົ້າອັນຂຽວງາມ, ມີສະຖານທີ່ຢູ່ເປັນບ້ານເປັນເມືອງສະອາດກ້ວາງຂວາງກໍ່ແມ່ນຍ້ອນແຮງງານດັດແປງທຳມະຊາດ, ແຕ່ກ່ອນຄົນເຮົາພຽງແຕ່ຮູ້ອີງໃສ່ຟ້າຝົນ,ຫ້ວຍນ້ຳລຳເຊຈຶ່ງເຮັດໄຮ່ເຮັດນາໄດ້, ດຽວນີ້ຄົນເຮົາພັດຮູ້ຂຸດເໝືອງປ້ານຝາຍບັງຄັບໃຫ້ນ້ຳມາເຂົ້ານາຮັບໃຊ້ຕາມຄວາມມັກຂອງຄົນ. ອັນນັ້ນຫມາຍຄວາມວ່າແຮງງານບໍ່ພຽງແຕ່ດັດແປງ ທຳມະຊາດເທົ່ານັ້ນ, ແຕ່ມັນຍັງດັດແປງສັງຄົມອີກດ້ວຍ, ຕັ້ງແຕ່ບ່ອນຫາກິນແລະເຮັດກິນໂດຍໃຊ້ເຄື່ອງມືປະຖົມບູຮານຄືເອົາໄມ້ຄ້ອນກ້ອນຫີນຝົນໃຫ້ແຫລມຄົມມາເຖິງບ່ອນໃຊ້ພ້ານົດ, ສຽມຂວານກ້າວ

ຂຶ້ນໄປເຄື່ອງຈັກເຄື່ອງບິນ ອັນທັນສະໄໝຄືປະຈຸບັນນີ້ກໍແມ່ນແຮງງານເປັນຜູ້ຜະລິດອອກ ; ມາເຖິງປະຈຸບັນນີ້ຢູ່ໃນປະເທດໃດກໍມີແຕ່ໃຊ້ເຄື່ອງຈັກແທນແຮງງານຂອງຄົນ, ມີຫໍໂຮງເຮືອນຊານວັດວາອາຣາມ; ມີຖະໜົນຫົນທາງເກີດຂຶ້ນຕາມຄວາມຕ້ອງການຂອງຄົນເຮົາ.

ເວົ້າລວມແລ້ວ ຍ້ອນມີການອອກແຮງງານດ້ວຍກາຍ ແລະ ມັນສະໝອງກຳລັງ ແລະຫົວຄິດປະດິດສ້າງຂອງຄົນເຮົາຈຶ່ງບໍ່ມີຂອບເຂດ; ຄົນເຮົາບໍ່ມີເວລາໃດຈະຢຸດຢັ້ງໃນການດັດແປງທຳມະຊາດ ແລະ ດັດແປງສັງຄົມອັນເຮັດໃຫ້ຊີວິດການເປັນຢູ່ຂອງຄົນເຮົາ ນັບມື້ນັບສີວິໄລກ້າວໜ້າຂຶ້ນ.

ຄ. ແຮງງານສາມາດດັດແປງກະໂຕຄົນເຮົາເອງອີກດ້ວຍ.

ຄົນເຮົາເກີດຂຶ້ນບົນແຜ່ນດິນບໍ່ແມ່ນຟ້າແຖນ, ອິນພົມປ່ອນລົງມາຄືສາ ສະ ໜາ ໄດ້ເວົ້າ ຫຼືເກີດມາຈາກໝາກນ້ຳເຕົ້າປຸງຄືຄວາມເວົ້າບູຮານ. ຄົນເຮົາແມ່ນເກີດມາຈາກສັດຊະນິດໜຶ່ງເຊິ່ງແມ່ນມະນຸດທະນີ, ໄດ້ກາຍມາເປັນຄົນແທ້ໃນເວລາດິນຟ້າອາກາດປ່ຽນແປງ.

ດັ່ງນັ້ນຄົນເຮົາແຕ່ກ່ອນແມ່ນບໍ່ຕ່າງຫຍັງກັບສັດ. ແຕ່

ບ້ອນການອອກແຮງງານ ທຳນາຫາກິນ ຈຶ່ງເຮັດໃຫ້ຮູບສິນທະນິນພັນ ແລະ ຫົວຄິດສະໝອງຜັນແຍກອອກຈາກສັດ ໃນເວລາສັດນັ້ນຮູ້ປະດິດເຄື່ອງມືແລະນຳໃຊ້ເຄື່ອງມື.ສະນັ້ນ ບ້ອນມີການອອກແຮງງານຈຶ່ງເຮັດໃຫ້ກະໂດຄົນເຮົາພ້ອມກັບການຜະລິດຢູ່ໃນສັງຄົມໄດ້ກ້າວໜ້າຂຶ້ນຢ່າງບໍ່ຢຸດຢັ້ງ.

– ແຮງງານຜະລິດອອກທຸກຢ່າງດ້ານວັດຖຸແລະຈິດໃຈຂອງສັງຄົມ. ຢູ່ເທິງນີ້ພວກເຮົາໄດ້ເວົ້າເຖິງແຮງງານຜະລິດອອກດ້ານວັດຖຸ, ແຕ່ຍັງບໍ່ທັນເວົ້າດ້ານຫົວຄິດສະໝອງ ແລະ ຈິດໃຈຂອງສັງຄົມ. ສິ່ງຕ່າງໆທາງດ້ານຈິດໃຈລວມກັບເຂົ້າເປັນວັດທະນະທຳ, ຕົວໜັງສື, ວິທະຍາສາດ, ວິຊາເຕັກນິກ, ສິລະປະວັນນະຄະດີ ແລະ ອື່ນໆອີກ ລ້ວນແຕ່ເກີດມາຈາກແຮງງານທີ່ເຮັດການຜະລິດ. ແຕ່ກ່ອນຄົນເຮົາບໍ່ທັນມີພາສາຄວາມເວົ້າ, ມີແຕ່ກົວກມື ວາດມື ງຶກຫົວ, ບ້ອນການອອກແຮງງານເຮັດການຜະລິດດ້ານວັດຖຸໄດ້ຫລາຍຂຶ້ນພາສາຄວາມເວົ້າຈຶ່ງມີໄປນຳຊື່ສຽງວັດຖຸນັ້ນ, ມີວັດຖຸສິ່ງຂອງຫລາຍຊ້ຳພັດຕ້ອງການຈົດຈື່, ເບື້ອງຕົ້ນກໍໃຊ້ການບັກໝາຍເທິງນາກໍກາຍມາເປັນຕົວໜັງສືຕົວອັກສອນ. ບ້ອນການຖອດຖອນບົດຮຽນໃນການອອກແຮງງານ

ດັດແປງທຳມະຊາດຈຶ່ງມີວິທະຍາສາດເຕັກນິກ, ສິລະປະ ວັນນະຄະດີນັ້ນມີແຮງງານຜະລິດຜົນ ແລະ ຕໍ່ສູ້ຈຶ່ງຜະລິດຄິດແຕ່ງຂຶ້ນໄດ້ ; ແຕ່ກ່ອນຄົນເຮົາກໍ່ແມ່ນໂງ່ຈ້າຫລ້າຫລັງ ຍ້ອນການອອກແຮງງານ ເຮັດການຜະລິດ ເຮັດໃຫ້ຊີວິດການເປັນຢູ່ນັ້ນນັບມື້ນັບດີຂຶ້ນ. ດັ່ງນັ້ນຄົນເຮົາຈຶ່ງມີຫົວຄິດປະດິດສ້າງ ແລະ ຄົ້ນຄ້ວາຮ່ຳຮຽນເຮັດໃຫ້ມັນສະຫມອງຂອງຄົນເຮົານັບມື້ນັບກ້າວຫນ້າຂະຫຍາຍຕົວ, ບົດຮຽນໃນການຜະລິດນັບມື້ນັບຮັ່ງມີຂຶ້ນ.

ການ ຮັບ ຮູ້ ກ່ຽວ ກັບວິທະຍາສາດກໍ່ຄ່ອຍໆກ້າວຂຶ້ນເປັນຂັ້ນໆ. ເຄື່ອງ ມື ໃນ ການ ຜະລິດກໍນັບມື້ນັບໄດ້ຮັບການດັດແປງໃຫ້ກ້າວຫນ້າ. ຄົນ ເຮົາ ໄດ້ຫັນແຕ່ບ່ອນຫລ້າຫລັງກ້າວຂຶ້ນ ມີລະດັບເຕັກນິກອັນກ້າວຫນ້າທັນສະໄຫມ, ມີວິທະຍາສາດກ້າວຫນ້າ. ປະດິດເຄື່ອງຈັກເຄື່ອງຍົນຄືລົດຍົນເຫາະ, ດາວ ທຽມ ແລະ ອື່ນໆ ຄື ດັ່ງ ພວກເຮົາໄດ້ຮູ້ໄດ້ເຫັນປະຈຸບັນ.

ເວົ້າລວມຖ້າບໍ່ມີການອອກແຮງງານ. ຮ່າງກາຍ ແລະ ຫົວ ຄິດ ສະ ຫມອງ ຂອງຄົນບໍ່ກ້າວຫນ້າຂະຫຍາຍຕົວໄດ້, ພາສາຄວາມເວົ້າຕົວຫນັງສື, ວິທະຍາສາດເຕັກນິກແລະ

ສີລະປະວັນນະຄະດີກໍມີຂຶ້ນບໍ່ໄດ້. ສິ່ງທັງຫມົດທີ່ກ່າວມາ ນັ້ນແມ່ນທິດສະດີວິທະຍາສາດຂອງ ມາກ-ເລນິນ ທີ່ໄດ້ ຢັ້ງຢືນຄວາມຈິງ ກ່ຽວກັບບົດບາດແລະຄຸນປະໂຫຍດຂອງ ແຮງງານທີ່ເຮັດການຜະລິດ.

ສະຫລຸບ ຄວາມ ວ່າ ທັດສະ ນະ ແຮງງານຂອງພວກ ເຮົາແມ່ນນັບຖືບົດບາດ ແລະ ຄຸນປະໂຫຍດຂອງແຮງງານ ທີ່ເປັນອັນປະເສີດເລີດລ້າທີ່ສຸດ, ເພາະວ່າແຮງງານແມ່ນ ບ່ເກີດ ຂອງມະນຸດ ແລະສັງຄົມ ເປັນບໍ່ເກີດທຸກສິ່ງວັດຖຸ ແລະ ຈິດໃຈຂອງສັງຄົມ. ຊີວິດຂອງຄົນ ແລະ ສັງຄົມຈະ ຍືນຍົງຄົງຕົວ ຫລື ກ້າວ ຫນ້າ ຂະຫຍາຍຕົວແຕ່ອັນຫລ້າ ຫລັງໄປຫາອັນກ້າວຫນ້າທັນສະໄຫມ ກໍແມ່ນຍ້ອນມີການ ອອກແຮງງານທີ່ເຮັດການຜະລິດ.

**ມ. ຮຽນທັດສະນະແຮງງານແລ້ວພະນັກງານ ແລະ ພາລະກອນ**

**ເຮົາຕ້ອງສ້າງທັດສະນະແຮງງານອັນຖືກຕ້ອງແນວໃດ ?**

– ພວກເຮົາໄດ້ຮູ້ບົດບາດ ແລະຄຸນປະໂຫຍດຂອງການ ອອກແຮງງານເພື່ອເຮັດການຜະລິດວ່າມັນປະເສີດເລີດລ້າ ທີ່ສຸດ ພ້ອມທັງໄດ້ຈຳແນກໃຫ້ເຫັນແຈ້ງທັດສະນະທີ່ຜິດ ພາດຂອງບັນດາຊົນຊັ້ນຂູດຮີດຕໍ່ແຮງງານຜະລິດນັ້ນແລ້ວ

ເວລານີ້ວຽກງານປະຕິວັດຮຽກຮ້ອງໃຫ້ພະນັກງານ ແລະ ພາລະກອນເຮົາສ້າງຕົນເອງໃຫ້ມີທັດສະນະແຮງງານດ້ວຽກາຽແລະມັນສະໝອງຢ່າງຖືກຕ້ອງ. ພວກເຮົາຕ້ອງຢຶດຖື ແລະສົ່ງເສີມທ່າທີ ແລະ ແນວຄິດປະຕິວັດແລະແກ້ໄຂທ່າທີ ແລະ ແນວ ຄິດທີ່ບໍ່ຖືກຕ້ອງຕາມທັດສະນະແຮງງານດັ່ງລຸ່ມນີ້ :

໑. ຕ້ອງສ້າງຕົນເອງໃຫ້ມີການອອກແຮງງານດ້ວຽກາຽ ແລະ ມັນສະໝອງ.

ຕ້ອງ ຖືການ ອອກ ແຮງ ງານ ເປັນສິ່ງປະເສີດເລີດລ້ຳ ແລະ ຖືວ່າການອອກແຮງງານແມ່ນ ມີ ກຽດ. ພວກເຮົາຕ້ອງຫ້າວຫັນເບີກບານກ້າວກຶງ ເຂັ້ມແຂງໃນການອອກແຮງງານ. ເຮັດທຸກວຽກງານຂອງການປະຕິວັດ, ສະແດງໃຫ້ເຫັນນ້ຳໃຈຮັບຜິດຊອບຕໍ່ໜ້າທີ່ວິຊາສະເພາະຂອງໃຜມັນຢ່າງແທ້ຈິງ, ອອກແຮງເຮັດວຽກເພີ່ມພູນພະລິດຜົນ ແລະ ຕໍ່ສູ້ໃຫ້ໄດ້ຜົນດີ, ທັງໃຊ້ຫົວຄິດປະດິດສ້າງໃຫ້ນັບມື້ນັບກ້າວໜ້າ ໂດຽບໍ່ມີການຈຳແນກວ່າ ການອອກແຮງງານດ້ວຽກາຽ ແລະ ມັນສະໝອງ, ບໍ່ຈຳແນກວ່າວຽກນີ້ຕ່ຳວຽກນັ້ນສູງ, ຕ້ອງຖືວ່າວຽກໃດກໍ່ມີກຽດຄືກັນ. ສິ່ງສຳຄັນແມ່ນເຮັດຫລ້ອນວຽກຂອງຊາດ ແລະ ປະຊາຊົນທີ່ໄດ້ມອບ

ໝາງໃຫ້ນັ້ນຫລືບໍ່. ບໍ່ວ່າວຽກອັນໃດຊາດແລະການປະຕິວັດ ມອບໃຫ້ຖ້າເຮັດຫລ້ອນແລ້ວ ແມ່ນມີກຽດສະຫງ່າງາມທີ່ສຸດ.

໒. ຕ້ອງຮັກແພງແຮງງານແລະຮັກແພງປະຊາຊົນຜູ້ອອກແຮງງານ.

ປະ ຊາ ຊົນຜູ້ອອກແຮງງານແມ່ນກ້ອນຫີນອັນປະເສີດຂອງສັງຄົມມະນຸດຮັກແພງປະຊາຊົນຜູ້ອອກແຮງງານນັ້ນແມ່ນຮັກຫອມເລືອດເນື້ອເຫື່ອໄຄ ແລະຊັບສົມບັດ ແລະວັດຖຸສິ່ງຂອງທຸກຢ່າງຂອງປະຊາຊົນ; ແຕ່ລະຄົນພວກເຮົາຕ້ອງຖືວ່າແຮງງານແລະ ວັດຖຸສິ່ງຂອງເຫລົ່ານັ້ນແມ່ນຂອງຕົນເອງແມ່ນໜ້າທີ່ຂອງຕົນເອງ ຕ້ອງຮັກສາເບິ່ງແຍງໃຫ້ດີເຖິງຈະແມ່ນຂອງສ່ວນລວມ ຫລືຂອງທີ່ຢຶດໄດ້ມາຈາກສັດຕູ, ມັນຈະ ແມ່ນ ເຮັດ ດ້ວຍ ຕົນ ເອງ ຫລື ປະເທດເພື່ອນບ້ານຊ່ວຍເຫລືອກໍ່ຕາມ ມັນກໍລ້ວນແຕ່ແມ່ນເລືອດເນື້ອເຫື່ອແຮງຂອງປະຊາຊົນຜູ້ທີ່ອອກແຮງງານດ້ວຍກັນທັງນັ້ນຜະລິດອອກ;ດັ່ງນັ້ນພວກເຮົາຈຶ່ງຕ້ອງມີການປະຢັດຮັກແພງ ແລະປົກປັກຮັກສາສິ່ງຂອງຕ່າງໆ ນັ້ນໃຫ້ດີ, ການໃຊ້ຈ່າຍຕ້ອງໃຫ້ຖືກຕາມຫລັກການ:ແລະຫນ້າທີ່ຂອງມັນ, ຕ້ອງໃຊ້ສິ່ງຂອງແຕ່ລະອັນໃຫ້ຫມົດຄຸນຄ່າຂອງມັນ.

ຕ້ອງຫລີກເວັ້ນການຟຸມເຟືອຍ ; ການອອກແຮງງານຕ້ອງຄຽງຄູ່ກັບການປະຢັດ; ຕ້ອງຊອກທຸກວິທີເພື່ອເຮັດບໍ່ໃຫ້ສິ້ນເປືອງເຫື່ອແຮງແລະຊັບສິນບັວຂອງປະຊາຊົນ.

ພວກເຮົາເຂົ້າໃຈຕື່ມອີກວ່າເຮົາເອງກໍ່ຄືຊາວໄຮ່ນາ, ກຳມະກອນ ແລະ ປະຊາຊົນຜູ້ອອກແຮງງານອື່ນລ້ວນແຕ່ໄດ້ຮັບຄວາມເຈັບແສບຈາກການກົດຂີ່ຂູດຮີດ ຂອງພວກຈັກກະພັດ ແລະ ສັກດີນາ. ພວກ ເຮົາ ແມ່ນ ຊົນ ຊັ້ນທີ່ອອກແຮງງານດ້ວຍກັນເຫັນອົກເຫັນໃຈກັນ ຊ່ວຍເຫລືອກັນດ້ວຍຄວາມຈິງໃຈ.

ໃນ ປະ ຈຸ ບັນນີ້ຊາວອອກແຮງງານພວກເຮົາ ໃນທົ່ວໂລກພວມສາມັກຄີກັບເຂົ້າຕໍ່ສູ້ສັດຕູລວມ ເຊິ່ງແມ່ນຈັກກະພັດ ອາ ເມ ລິ ກາ ເປັນ ຫົວໂປ່. ບັນດາເພື່ອນມິດປະເທດຕ່າງໆ ພວມໄດ້ສະແດງຄວາມສາມັກຄີກັບພວກເຮົາ ໃນການຊ່ວຍເຫລືອເຮົາທາງດ້ານວັດຖຸ ແລະ ຈິດໃຈ. ສ່ວນຝ່າຍເຮົານີ້ສາມັກຄີກັບເຂົາເຈົ້າກໍ່ແມ່ນສະແດງອອກປູ່ບ່ອນຮັກແພງວັດຖຸສິ່ງຂອງຊ່ວຍເຫລືອຂອງເພື່ອນບ້ານ ແລະຕັ້ງ ຫນ້າ ເຮັດ ວຽກງານດ້ວຍນ້ຳໃຈຮັບຜິດຊອບ, ຕໍ່ສູ້ສັດຕູຈົນເຖິງທີ່ສຸດເພື່ອປົດປ່ອຍຊາດ, ປົດປ່ອຍຊົນຊັ້ນ ແລະ ປົດ

ປ່ຽ ແຮງ ງານ ຂອງ ຊົນ ຊັ້ນ ຢ່າງສົມບູນ, ຈຶ່ງຈະຕອບສະຫນອງ ຄວາມ ສາ ມັກ ຄີ ຊ່ວຍເຫລືອທຸກຢ່າງຂອງເພື່ອນບ້ານໄດ້.

ມີ. ປາກສ້າງທັດສະນະແຮງງານໃຫ້ໄດ້ດີ, ຕ້ອງຝຶກຝົນຕົນເອງໃຫ້ມີການດຳລົງຊີວິດຢ່າງປອດໃສຂາວສະອາດ :

ທາດແທ້ຂອງຊົນຊັ້ນຜູ້ອອກແຮງງານ ແມ່ນຊື່ສັດສຸດຈະລິດ, ມີນ້ຳໃຈກ້ວາງຂວາງ, ຮັກແພງໝູ່ເພື່ອນຊົນຊັ້ນດຽວກັນ, ບໍ່ຂູດຮີດກິນແຮງງານຂອງຜູ້ອື່ນ, ລ້ຽງຊີວິດຂອງຕົນດ້ວຍຄວາມເປັນທຳ.

ດັ່ງນັ້ນພວກເຮົາແມ່ນພະນັກງານ ແລະ ພາລະກອນຜູ້ ເຮັດ ການ ປະ ຕິວັດທີ່ຢືນຢູ່ໃນຝ່າຍປະຊາຊົນຜູ້ອອກແຮງງານ ຕ້ອງ ສະແດງຄວາມຈົ່ງຮັກພັກດີຊື່ສັດສຸດຈະລິດຮັກແພງປະຊາຊົນແລະຮັກແພງແຮງງານຂອງຊົນຊັ້ນ. ການຊື່ສັດສຸດຈະລິດຮັກແພງແຮງງານນັ້ນ ຕ້ອງສະແດງອອກໃນການດຳລົງຊີວິດຂອງຕົນ,ບໍ່ລັກໂລບໂລພາ,ບໍ່ສໍ້ລາດບັງຫລວງ,ບໍ່ບໍຕົນຂົ່ມເພິ່ນ,ການກິນຢູ່ນຸ່ງຫົ່ມແມ່ນກິນເທົ່າໄດ້ໃຊ້ເທົ່າຕົນມີ, ເຮັດໃຫ້ມັນຖືກ ກັບສະພາບການເສດຖະກິດຂອງ ຊາດ ແລະ ຂອງ ຕົນ ເອງ ທີ່ ຫາ ໄດ້ແລະເຮັດໃຫ້ມັນເຫມາະ ກັບ ຊີ ວິດ ການ ເປັນຢູ່ຂອງປະຊາຊົນຜູ້ອອກແຮງ

ງານ, ຫລີກເວັ້ນການດຳລົງຊີວິດແບບເຈົ້ານາຍອາດຍາ ທີ່ຊອກກິນແຕ່ແຮງງານຂອງຜູ້ອື່ນ.

ຕ້ອງຕ້ານຢ່າງເດັດຂາດທຸກແນວຄິດແລະການກະທຳ ທີ່ຜິດພາດເຊັ່ນ : ຂີ້ຄ້ານອອກແຮງງານດ້ວຍກາຍ ແລະນັບ ສະຫນອງ, ບໍ່ຮັບຜິດຊອບຕໍ່ຫນ້າທີ່ວຽກງານທີ່ຊາດ ແລະ ປະຊາຊົນມອບຫມາຍໃຫ້ເຮັດ, ໂລບມາກໂລພາ, ຂີ້ລັກສໍ້ ເອົາຂອງສ່ວນລວມຂອງຫມູ່ຄູ່ຫລືຂອງປະຊາຊົນ, ຕ້ອງ ຕ້ານແນວຄິດຊອບໃຊ້ຈ່າຍຟຸ່ມເຟືອຍ ຄ້າຂາຍຫາລາຍໄດ້ ສ່ວນຕົວ, ຂູດຮີດຫມູ່ແລະປະຊາຊົນ, ຕ້ານແນວຄິດອວດ ຖຸຍດູຖູກຫມິ່ນປະຫມາດປະຊາຊົນຜູ້ອອກແຮງງານ.

ສະຫລຸບຄວາມວ່າ ການອອກແຮງງານເຮັດການຜະ ລິດ ແມ່ນມີບົດບາດ ແລະ ຄຸນປະໂຫຍດອັນສຳຄັນ ແລະ ຍິ່ງໃຫຍ່ທີ່ສຸດໃຫ້ແກ່ຄົນເຮົາ ແລະ ສັງຄົມມະນຸດ, ມັນ ເປັນສິ່ງຈຳເປັນໃນຊີວິດການເປັນຢູ່ຂອງຄົນເຮົາ; ເພາະ ແຮງ ງານ ເປັນ ບໍ່ເກີດຂອງວັດຖຸສິ່ງຂອງທຸກສິ່ງທຸກຢ່າງ ທີ່ຄົນເຮົາຕ້ອງການຕາມຄວາມປາຖະຫນາ ຂອງແຕ່ລະ ຄົນ ແລະ ທັງເປັນສິ່ງຕັດສິນຊີ້ຂາດໃນການດຳລົງຄົງຕົວ ຂອງຄົນ ແລະ ຂອງສັງຄົມມະນຸດອີກດ້ວຍ. ພວກເຮົາ

ເປັນລູກຮັກຫລານແພງ ຂອງປະຊາຊົນຜູ້ອອກແຮງງານ ພວກເຮົາພວມດຳເນີນການຕໍ່ສູ້ປະຕິວັດ ເພື່ອຮັບໃຊ້ສິດຜົນປະໂຫຍດຂອງປະຊາຊົນຜູ້ອອກແຮງງານ; ດັ່ງນັ້ນທຸກເມື່ອທຸກເວລາ ພວກເຮົາຕ້ອງສ້າງຕົນເອງ ໃຫ້ມີທັດສະນະແຮງງານອັນຖືກຕ້ອງ.

ມີແຕ່ຢູ່ພາງໃຕ້ລະບອບການປະຕິວັດເທົ່ານັ້ນແຮງງານ ແລະຊົນຊັ້ນຜູ້ທີ່ອອກແຮງງານຈຶ່ງໄດ້ຮັບຄວາມນັບຖື. ມີແຕ່ ເຮັດ ການ ປະ ຕິ ວັດ ຢູ່ ພາງ ໃຕ້ ການ ນຳພາຂອງພັກມາກ-ເລນິນ ອັນແທ້ຈິງເທົ່ານັ້ນ ຈຶ່ງປົດປ່ງໄດ້ຊົນຊັ້ນຜູ້ທີ່ອອກແຮງງານ, ນຳຊີວິດອັນອົບອຸ່ນ ແລະ ສະຫນຸກສະຫນານ ມາໃຫ້ປະຊາຊົນຜູ້ອອກແຮງງານໄດ້. ຄົນຜູ້ໃດຮູ້ຮັກການອອກແຮງງານ, ຮູ້ຮັກແພງຜູ້ອອກແຮງງານ ແລະຮູ້ຮັກແພງຜົນຜະລິດ ຂອງແຮງງານຈຶ່ງສົມຄວນ ຈັດເຂົ້າຢູ່ໃນຊົນຊັ້ນຜູ້ອອກແຮງງານ.

ຕອນທີ່ ໖.

# ທັດສະນະຊົນຊັ້ນ

## ຊົນຊັ້ນແລະການຕໍ່ສູ້ຊົນຊັ້ນ

ພວກເຮົາພວມຢູ່ໃນສະໄຫມສັງຄົມທີ່ມີຊົນຊັ້ນ ແລະ ມີການຕໍ່ສູ້ຊົນຊັ້ນ, ຍິ່ງກ່ວານັ້ນ, ການປະຕິວັດໃນທົ່ວປະເທດເຮົາ ພວມດຳເນີນໄປຢ່າງດຸເດືອດພາຍໃຕ້ການນຳພາຂອງພັກ, ແມ່ນເປັນການຕໍ່ສູ້ຊົນຊັ້ນອັນຍາວນານລຳບາກ.

ສະນັ້ນຈຸດປະສົງໃນການຮຽນບົດນີ້ ແມ່ນເຮັດໃຫ້ພວກເຮົາມີທັດສະນະ ແລະ ຫລັກຫມັ້ນຊົນຊັ້ນຢ່າງຖືກຕ້ອງ ເພື່ອໃຫ້ມີບ່ອນຢືນສັງເກດ ຕີລາຄາບັນຫາທີ່ເກີດຂຶ້ນໃນສັງຄົມສະໄຫມປະຈຸບັນ, ພ້ອມກັນນັ້ນກໍເພື່ອວາງທ່າທີ ແລະ ທັດສະນະອັນຖືກຕ້ອງ ຕໍ່ການປະຕິວັດຂອງພວກເຮົາ.

## ໆ. ຊົນຊັ້ນແລະບໍ່ເກີດຂອງຊົນຊັ້ນ

໑. ຊົນຊັ້ນແມ່ນຫຍັງ ?

ຊົນຊັ້ນບໍ່ແມ່ນຄົນຈຳນວນນຶ່ງ ກັບຄົນຈຳນວນນັ້ນບວກເຂົ້າກັນແລ້ວ ເອີ້ນວ່າຊົນຊັ້ນໄດ້. ຊົນຊັ້ນນັ້ນແມ່ນຄົນທີ່ມີຄວາມແປກຕ່າງກັນ ໃນດ້ານຈຸດພິເສດດັ່ງລຸ່ມນີ້ :

ກ) ຈຸດພິເສດທີ່ຫນຶ່ງ, ແມ່ນແຕກຕ່າງກັນກ່ຽວກັບກຳມະສິດປົດຖືອຸປະກອນການຜະລິດຂອງສັງຄົມ :

ອຸປະກອນການຜະລິດນັ້ນຫມາຍເຖິງດິນນາ, ງົວຄວາຍ ໂຮງຈັກ, ບໍ່ແຮ່, ຖະຫນົນຫົນທາງ, ແມ່ນ້ຳລຳເຊ, ລົດລາພາຫານະຕ່າງໆ ທີ່ຢູ່ໃນສັງຄົມ. ໃນສັງຄົມທີ່ມີຊົນຊັ້ນ, ອຸປະກອນການຜະລິດເຫລົ່ານັ້ນເວລາໃດກໍ່ຂຶ້ນກັບກຳມະ ສິດ ຂອງ ຄົນ ສ່ວນຫນ້ອຍໃນສັງຄົມຄື : ຊົນຊັ້ນນາຍທຶນ, ສັກດີນາ ແລະ ຊົນຊັ້ນຂູດຮີດກົດອຳນາດອື່ນໆ. ມະຫາຊົນຜູ້ອອກແຮງງານສ່ວນຫລວງຫລາຍ ແມ່ນບໍ່ມີອຸປະກອນການຜະລິດຫລືຖ້າມີກໍ່ຫນ້ອຍທີ່ສຸດ.

ຕົວຢ່າງ : ໃນສັງຄົມສັກດີນາເຈົ້າທີ່ດິນເຊິ່ງແມ່ນຄົນຈຳນວນຫນ້ອຍໃນສັງຄົມ, ແຕ່ຊ້ຳພັດປົດເອົາດິນນາ, ປ່າໄມ້, ຫ້ວຍຮ່ອງຫນອງປາເປັນຈຳນວນຫລວງ, ເປັນຕົ້ນ

ແມ່ນງົວຄວາຍ, ປ່າດົງ, ແມ່ນ້ຳລຳເຊ, ສິ່ງຂອງເຫລົ່ານັ້ນລ້ວນແຕ່ແມ່ນອຸປະກອນການຜະລິດ ອັນຕົ້ນຕໍຂອງສັງຄົມສັກດີນາ. ສ່ວນຊາວໄຮ່ນາໃນທົ່ວປະເທດມີຈຳນວນຮອດ 85% (ແປດສິບຫ້າສ່ວນຮ້ອຍ) ຊ້ຳພັດບໍ່ໄດ້ເປັນເຈົ້າຂອງ, ມີອຸປະກອນພຽງເລັກນ້ອຍເທົ່ານັ້ນ. ຖ້າຄິດສະເລ່ຍແລ້ວຈຳນວນດິນນາ ແລະ ງົວຄວາຍທີ່ຂຶ້ນກັບ ຊາວນາຜູ້ຫນຶ່ງປຽບໃສ່ເຈົ້າທີ່ດິນຜູ້ຫນຶ່ງ ແມ່ນລື່ນກັນຮອດ 30 ເທົ່າ, ມີບາງບ່ອນລື່ນຮອດ 100 ເທົ່າ.

ໃນສັງຄົມນາຍທຶນ, ບັນຫານີ້ແຫ່ງເຫັນແຈ້ງ. ຊົນຊັ້ນເຈົ້າທຶນແມ່ນຄົນກຸ່ມນ້ອຍຫນຶ່ງ, ແຕ່ເບິ່ງແລ້ວບັນດາໂຮງຈັກ, ບໍ່ແຮ່, ລົດລາງ, ຍົນເຫາະ, ກຳປັ່ນ, ລ້ວນແຕ່ຢູ່ໃນກຳມືຂອງພວກມັນຫມົດກ້ຽງ. ສ່ວນກຳມະກອນແລະຜູ້ອອກແຮງງານອື່ນໆ ເຊິ່ງແມ່ນຈຳນວນຄົນສ່ວນຫລາຍໃນປະເທດແມ່ນບໍ່ມີຫຍັງຢູ່ໃນກຳມືຂອງຕົນ.

ການແປກຕ່າງກັນ ກ່ຽວກັບກຳມະສິດຍຶດຖືອຸປະກອນການຜະລິດນີ້ແມ່ນການແປກຕ່າງກັນອັນພື້ນຖານ, ມັນເປັນສິ່ງຕັດສິນໃຫ້ແກ່ຄວາມແປກຕ່າງກັນ ລະຫວ່າງຊົນຊັ້ນ. ສະນັ້ນການແປກຕ່າງກັນນີ້ແມ່ນຈຸດພິເສດ ອັນ

ພື້ນຖານຂອງຊົນຊັ້ນຫລືເວົ້າອີກຢ່າງໜຶ່ງກໍແມ່ນພື້ນຖານເພື່ອຜັນແບກບັນດາຊົນຊັ້ນຢູ່ໃນສັງຄົມທີ່ມີຊົນຊັ້ນປໍລະປັກກັນ.

ຂ). ຈຸດພິເສດທີ່ສອງ : ແມ່ນການແຕກຕ່າງກັນກ່ຽວກັບຖານະໃນສັງຄົມ.

ໃນສັງຄົມທີ່ມີຊົນຊັ້ນ ບໍ່ວ່າສັງຄົມສະໄຫມໃດກໍ່ແມ່ນມີສອງຊົນຊັ້ນປໍລະປັກກັນເປັນພື້ນຖານ. ຕົວຢ່າງ : ສັງຄົມສັກດີນາແມ່ນຊົນຊັ້ນ ສັກດີນາເຈົ້າທີ່ດິນແລະ ຊົນຊັ້ນຊາວໄຮ່ນາເປັນຊົນຊັ້ນພື້ນຖານທີ່ເປັນປໍລະປັກກັນ.ສອງຊົນຊັ້ນນີ້ມີການພົວພັນກັນແລະເປັນປໍລະປັກກັນ, ຍ້ອນວ່າຊົນຊັ້ນສັກດີນາເປັນຊົນຊັ້ນປົກຄອງສັງຄົມ,ສ່ວນຊົນຊັ້ນຊາວໄຮ່ນາເປັນຊົນຊັ້ນທີ່ ຖືກປົກຄອງ.

ແຕ່ການແປກຕ່າງກັນກ່ຽວກັບຖານະໃນສັງຄົມນີ້ແມ່ນເນື່ອງມາຈາກການແປກຕ່າງກັນດ້ານການຢຶດຖືກໍາມະສິດກ່ຽວກັບອຸປະກອນການຜະລິດເປັນສິ່ງຕັດສິນ : ຖ້າຊົນຊັ້ນໃດ ຫາກຢຶດຖືກໍາມະສິດກ່ຽວກັບອຸປະກອນການຜະລິດໃນສັງຄົມໄດ້ຫລາຍແມ່ນຊົນຊັ້ນນັ້ນເປັນຜູ້ປົກຄອງ, ຊົນຊັ້ນໃດຫາກ ຢຶດ ຖືກ່ຽວ ກັບອຸປະກອນໄດ້ຫນ້ອຍຫລືວ່າບໍ່ມີ, ແມ່ນເປັນຊົນຊັ້ນຖືກປົກຄອງ, ເພາະສະນັ້ນພື້ນຖານວັດຖຸຂອງ

ສິດອຳນາດປົກຄອງສັງຄົມຈຶ່ງແມ່ນຢູ່ນຳການປົດຖືກຳມະສິດກ່ຽວກັບອຸປະກອນການຜະລິດ. ບັນດາຊົນຊັ້ນຂູດຮີດອີງໃສ່ສິດປົດຖືນັ້ນເພື່ອບັງຄັບໃຫ້ບັນດາຊົນຊັ້ນອື່ນໆ ຂຶ້ນກັບສິດປົກຄອງຂອງຕົນ.

ຄ). ຈຸດພິເສດທີ່ສາມ : ແມ່ນແປກຕ່າງກັນກ່ຽວກັບບົດບາດສາຍໃຍຈັດຕັ້ງການອອກແຮງງານຂອງສັງຄົມ.

ຜ່ານຂະບວນການຜະລິດວັດຖຸສິ່ງຂອງອອກ, ສັງຄົມໃດ ກໍ ມີ ຮູບ ຮ່າງສາຍໃຍຈັດຕັ້ງການອອກແຮງງານປະກົດຂຶ້ນອັນແນ່ນອນ. ໃນສາຍໃຍການຈັດຕັ້ງແຮງງານຂອງສັງຄົມທີ່ມີ ຊົນຊັ້ນປໍລະປັກກັນນັ້ນ, ຊົນຊັ້ນບັນຊາການຜະລິດ ແລະ ຄຸ້ມຄອງເສດຖະກິດ ແມ່ນຊົນຊັ້ນຂູດຮີດທີ່ກຳອຳນາດປົກຄອງ : ສ່ວນຜູ້ອອກແຮງງານທັງໝົດແມ່ນເປັນຜູ້ປະຕິບັດ, ເປັນຜູ້ ອອກແຮງງານຜະລິດໂດຍກົງ, ແມ່ນຜູ້ຖືກຂູດຮີດແຮງງານ.

ບັນຫາບົດບາດ ຂອງສາຍໃຍຈັດຕັ້ງ ການອອກແຮງງານຂອງສັງຄົມນີ້ ກໍ່ຂຶ້ນກັບກຳມະສິດປົດຖືກ່ຽວກັບອຸປະກອນການຜະລິດຢູ່ໃນກຳມືກໍແມ່ນຊົນຊັ້ນນັ້ນ ບໍ່ອອກ ແຮງງານແຕ່ຊ້ຳພັດໄດ້ກຳສິດຄຸ້ມຄອງເສດຖະກິດແລະບໍລິຫານ

ວຽກງານຂອງຊາດ. ຊົນຊັ້ນໃດບໍ່ມີສິດຍຶດຖືອຸປະກອນການຜະລິດບໍ່ມີສິດປົກຄອງ ແລະບໍ່ມີສິດບໍລິຫານເສດຖະກິດກໍ່ຕ້ອງເປັນຜູ້ປະຕິບັດຕາມເທົ່ານັ້ນ.

໗). ຈຸດພິເສດທີສີ່ : ແມ່ນແປກຕ່າງກັນກ່ຽວກັບການຮັບຜົນລາຍໄດ້ດ້ານວັດຖຸສິ່ງຂອງທີ່ສັງຄົມຜະລິດອອກ.

ທຸກຄົນທຸກຊົນຊັ້ນຢູ່ໃນສັງຄົມ ໃຜກໍ່ລ້ວນແຕ່ຕ້ອງຮັບເອົາ ລາຍ ໄດ້ ດ້ານ ວັດຖຸສິ່ງຂອງທີ່ສັງຄົມຜະລິດອອກເພື່ອຊົມໃຊ້. ແຕ່ບັນຫາລາຍໄດ້ຫລາຍຫລືຫນ້ອຍ ແລະ ລາຍໄດ້ດ້ວຍ ວິ ທີ ໃດ ນັ້ນ ແມ່ນບ່ອນພວກເຮົາ ຈະໄດ້ໄຈ້ແຍກລະຫວ່າງບັນດາຊົນຊັ້ນຢູ່ໃນສັງຄົມທີ່ມີຊົນຊັ້ນປໍລະປັກກັນ.

ລາຍໄດ້ດ້ານວັດຖຸ ເພື່ອໃຊ້ຈ່າຍຂອງບັນດາຊົນຊັ້ນນັ້ນກໍ່ຂຶ້ນກັບການຍຶດຖືກຳມະສິດກ່ຽວກັບອຸປະກອນການຜະລິດ. ຊົນ ຊັ້ນ ຂູດ ຮີດ ຍຶດຖືກຳມະສິດກ່ຽວກັບອຸປະກອນການຜະລິດ. ສະ ນັ້ນ ວັດ ຖຸ ສິ່ງຂອງທີ່ຜະລິດອອກໄດ້ສ່ວນຫລາຍແມ່ນຕົກຢູ່ໃນກຳມືຂອງພວກມັນ. ວັດຖຸສິ່ງຂອງທີ່ມັນໄດ້ຮັບ ນັ້ນ ລ້ວນ ແຕ່ ແມ່ນເອົາມາຈາກການຂູດຮີດແຮງງານຂອງບັນດາຊົນຊັ້ນອື່ນ; ສ່ວນຊົນຊັ້ນທີ່ຖືກກົດຂີ່ຂູດຮີດທີ່ບໍ່ມີອຸປະກອນການຜະລິດນັ້ນແມ່ນໄດ້ຮັບການຊົມໃຊ້ພຽງແຕ່

ເລັກນ້ຽ. ບໍ່ສົມກັບຄ່າແຮງງານຂອງຕົນຊ້ຳ.

ເພາະສະນັ້ນ, ຢູ່ໃນສັງຄົມທີ່ມີຊົນຊັ້ນປໍລະປັກກັນນັ້ນ, ຊົນຊັ້ນຂູດຣີດອັນມີຈຳນວນນ້ຽໆຢູ່ໃນສັງຄົມແຕ່ຫາກເວລາໃດກໍເປັນຊົນຊັ້ນຮັ່ງມີ; ສ່ວນບັນດາຊົນຊັ້ນທີ່ຖືກຂູດຣີດອັນມີຈຳນວນຫລາຍຢູ່ໃນສັງຄົມ ຊ້ຳພັດໄດ້ຮັບຄວາມທຸກຍາກຂາດເຂີນ.

ດັ່ງນັ້ນ, ມັນຈຶ່ງຊີ້ໃຫ້ເຮົາເຫັນຢ່າງຈະແຈ້ງວ່າຊົນຊັ້ນຂູດຣີດແມ່ນຊົນຊັ້ນທີ່ນັ່ງລ້າກິນດາຍ ແລະ ດຳລົງຊີວິດດ້ວຍການຂູດຣີດຜູ້ອື່ນ. ພວກເຮົາຕ້ອງກຳໃຫ້ແໜ້ນ4 ຈຸດພິເສດນີ້ ເພື່ອ ເອົາ ໄປ ຈຳ ແນກ ໃຫ້ເຫັນແຈ້ງຊົນຊັ້ນຢູ່ໃນສັງຄົມລາວເຮົາ, ແຕ່ ຕ້ອງ ເອົາ ຈຸດພິເສດທີ່ໜຶ່ງກ່ຽວກັບການຢຶດຖືອຸປະກອນການຜະລິດ ເປັນຈຸດພິເສດພື້ນຖານທີ່ຕັດສິນຊົນຊັ້ນ. ຜ່ານການໄຈ້ແຍກ 4 ຈຸດພິເສດນີ້ພວກເຮົາໄດ້ເຫັນແຈ້ງວ່າ ສະພາບການອັນບໍ່ຍຸດຕິທຳໃນສັງຄົມທີ່ມີຊົນຊັ້ນປໍລະປັກ, ພ້ອມກັນນັ້ນກໍໄດ້ເຫັນທາດແທ້ຂອງແຕ່ລະຊົນຊັ້ນເປັນແນວໃດ ? ແມ່ນໃຜເປັນມິດແມ່ນໃຜເປັນສັດຕູຂອງການປະຕິວັດພວກເຮົາ.

ການແປກຕ່າງກັນອັນພື້ນຖານລະຫວ່າງ ບັນດາຊົນ

ຊັ້ນໃນສັງຄົມທີ່ມີຊົນຊັ້ນປໍລະປັກ ແມ່ນຕ່າງກັນດ້ານກຳມະສິດຢຶດຖືອຸປະກອນການຜະລິດ. ເມື່ອເປັນແນວນັ້ນການແປກຕ່າງກັນນັ້ນໄດ້ປະກົດ ຕົວ ຂຶ້ນຢູ່ໃນປະຫວັດສາດເປັນແນວໃດພວກເຮົາຈະໄດ້ຄົ້ນຄ້ວາ ບໍ່ເກີດຂອງ ຊົນຊັ້ນດັ່ງລຸ່ມນີ້:

໒. ບໍ່ເກີດຂອງຊົນຊັ້ນແມ່ນມາຈາກໃສ ? ເຮັດແນວໃດຊົນຊັ້ນຈຶ່ງຈະດັບສູນໄດ້.

ສະໄຫມສັງຄົມມະນຸດ ຍັງເປັນສະໄຫມສັງຄົມປະຖົມບູຮານນັ້ນກິນເວລາຍາວນານ ຕັ້ງຫລາຍຫມື່ນປີ, ສະໄຫມນັ້ນແມ່ນສະໄຫມສັງຄົມບໍ່ມີຊົນ ຊັ້ນບໍ່ມີຄົນຂູດຮີດຄົນ, ບໍ່ມີຜູ້ທຸກ ແລະ ຜູ້ຮັ່ງ. ແຕ່ພາຍຫລັງທີ່ລະບອບປະຖົມບູຮານເສື່ອມສູນໄປ, ລະບອບຂ້າທາດໄດ້ເກີດຂຶ້ນມາແທນ. ໃນລະບອບຂ້າທາດນີ້ສັງຄົມໄດ້ມີຊົນຊັ້ນປໍລະປັກກັນ ແລະ ແຕ່ນັ້ນມາການຕໍ່ສູ້ຊົນຊັ້ນກໍໄດ້ສະ ແດງ ອອກ ຢ່າງ ບໍ່ ຢຸດ ຢັ້ງ. ເມື່ອເປັນດັ່ງນັ້ນ, ຕັ້ງແຕ່ມີຊົນຊັ້ນໄດ້ເກີດຂຶ້ນມາເຖິງປະຈຸບັນນີ້ເປັນເວລາປະມານ 6000 ກ່ວາປີເທົ່ານັ້ນ. ປຽບໃສ່ປະຫວັດສາດທັງຫມົດຂອງສັງຄົມມະນຸດແລ້ວ, ສັງຄົມທີ່ມີຊົນຊັ້ນນັ້ນກິນເວລາສັ້ນທີ່ສຸດ.

– ແຕ່ວ່າພວກສັກດີນາ, ນາຍທຶນແລະສາສະໜາພັດ
ເວົ້າວ່າ: "ເມື່ອມີຄົນຢູ່ໃນໜ່ວຍໂລກແລ້ວກໍ່ມີຜູ້ຮັ່ງຜູ້ທຸກ
ແລະໄດ້ມີການແບ່ງປັນເປັນຊົນຊັ້ນແຕ່ໃດມາ" ຄວາມເວົ້າ
ອັນ ນັ້ນ ເວົ້າ ວ່າ ເລື່ອງເຫລົ່າ ນັ້ນເກີດມາຕາມກົດເກນຂອງ
ທຳມະຊາດ. ມັນຫາກເກີດເປັນແນວນັ້ນ. ພວກເຂົາເວົ້າ
ອີກວ່າ "ການແບ່ງປັນຊົນຊັ້ນແມ່ນຍ້ອນຟ້າແຖນ, ອິນພົມ
ປັ້ນແຕ່ງ ລົງ ມາ, ຜູ້ ທຸກແມ່ນທຸກຍ້ອນມີບາບກຳ, ຜູ້ຮັ່ງ
ແມ່ນຮັ່ງຍ້ອນມີບຸນວາດສະໜາ ແລະ ການມີຊົນຊັ້ນນັ້ນ
ແມ່ນຍືນຍົງຄົງຕົວຕະຫລອດໄປ".

ຄວາມເວົ້າໃຈ້ແຍກຄືແນວນັ້ນ ຖ້າບໍ່ແມ່ນໂງ່ຈ້າ, ບໍ່
ແມ່ນ ບິດ ເບືອນ ຄວາມຈິງ, ເພື່ອແນ່ໃສ່ຈຸດປະສົງປິດຫູ
ບັງຕາປະຊາຊົນ, ປິດບັງບໍ່ເກີດແຫ່ງຄວາມທຸກຍາກລຳ
ບາກຂອງມະຫາຊົນຜູ້ອອກແຮງງານເທົ່ານັ້ນ.

– ຄວາມຈິງແທ້ ເມື່ອພວກເຮົາອີງໃສ່ທິດສະດີອັນຖືກ
ຕາມວິທະຍາສາດຂອງລັດທິມາກ–ເລນິນທີ່ໄດ້ຢັ້ງຢືນບັນ
ຫາຊົນຊັ້ນຢ່າງຖືກຕ້ອງຄື :ຊົນຊັ້ນແມ່ນປະກົດຕົວອອກໃນ
ປະຫວັດສາດອັນໃດອັນໜຶ່ງ, ຊົນຊັ້ນນັ້ນໄດ້ປະກົດຕົວຂຶ້ນ
ໃນສະໄໝສັງຄົມທີ່ເລີ່ມມີລະ ບອບ ກຳ ມະ ສິດ ສ່ວນ ຕົວ

ແລະ ມັນຈະເສື່ອມສູນໄປໃນໄລຍະປະຫວັດສາດອັນໃດອັນໜຶ່ງ ຢ່າງແນ່ນອນ, ເມື່ອລະບອບກຳມະສິດສ່ວນຕົວຫາກໄດ້ຖືກລົບລ້າງ.

ດັ່ງນັ້ນ, ຊົນຊັ້ນເກີດຂຶ້ນຍ້ອນມີສາເຫດຂອງມັນ, ສາເຫດນັ້ນແມ່ນຍ້ອນຢູ່ໃນສັງຄົມມະນຸດ ; ມັນບໍ່ແມ່ນເທວະດາຟ້າແຖນປັ້ນແຕ່ງຄືດັ່ງຊົນຊັ້ນຂູດຣີດອະທິບາຍນັ້ນດອກ ຜ່ານຂະບວນເຄື່ອນໄຫວຂອງຄົນຢູ່ໃນສັງຄົມ,ຮູບຮ່າງຂອງຊົນຊັ້ນຈຶ່ງໄດ້ປະກົດຕົວຂຶ້ນໃນສັງຄົມມະນຸດ ຕາມກົດເກນຕົວຈິງດັ່ງລຸ່ມນີ້.

– ຜ່ານຕັ້ງຫລາຍໝື່ນປີມາ, ໃນເມື່ອຄົນເຮົາຍັງຢູ່ໃນສະໄໝປະຖົມບູຮານນັ້ນ ການດຳລົງຊີວິດແມ່ນພ້ອມກັນເຮັດພ້ອມກັນຊົມໃຊ້, ການພົວພັນລະຫວ່າງຄົນກັບຄົນແມ່ນພົວພັນກັນແບບສະເໝີພາບ, ນັ້ນແມ່ນສັງຄົມທີ່ຍັງບໍ່ທັນມີຊົນຊັ້ນ, ບໍ່ທັນມີແນວຄິດວ່າຂອງເຈົ້າຂອງຂ້ຽ ເປັນຫຍັງຈຶ່ງເປັນແນວນັ້ນ? ມັນບໍ່ແມ່ນວ່າຟ້າແຖນປັ້ນແຕ່ງອອກມາແລະກໍບໍ່ແມ່ນຍ້ອນຄວາມມັກຂອງມະນຸດຜູ້ໃດ. ມັນຕັ້ງແມ່ນຍ້ອນການຜະລິດຂອງສັງຄົມນັ້ນຍັງຕ່ຳຕ້ຽ, ລະດັບຂອງຄົນຍັງຫລ້າຫລັງ, ລະບອບກຳມະສິດ

ສ່ວນຕົວບັງບໍ່ທັນເກີດຂຶ້ນ. ການຜະລິດເວລານັ້ນຕ່ຳຕ້ອຍເຖິງຂັ້ນ ຫາເຊົ້າກິນເຊົ້າ ຫາແລງກິນແລງ ຫາບໍ່ໄດ້ກໍບໍ່ໄດ້ກິນເທົ່ານັ້ນ. ສ່ວນການນຸ່ງຖືກໍມີແຕ່ເປືອກໄມ້ ຫລືໜັງສັດ; ເພາະຄົນເວລານັ້ນບໍ່ທັນຮູ້ເຂັນຝ້າຍຕ່ຳຫູກ, ບໍ່ທັນຮູ້ປູກຝັງລ້ຽງສັດທັງໆທັງໝົດ. ມີແຕ່ເກັບໝາກໄມ້, ໄລ່ຈັບສັດມາກິນລ້ຽງຊີບເທົ່ານັ້ນ . ມະນຸດເວລານັ້ນ ຊີວິດການເປັນຢູ່ແນ່ນຂຶ້ນກັບທຳມະຊາດຢ່າງສິ້ນເຊີງ. ເຖິງວ່າການຜະລິດຂະຫຍາຍຕົວຊັກຊ້າແນວນັ້ນກໍຕາມຜ່ານເວລາຍາວນານ ກໍ່ໄດ້ກ້າວໜ້າຂຶ້ນເປັນຂັ້ນໆ. ເຖິງທ້າຍສະໄໝສັງຄົມປະຖົມບູຮານ ,ການຜະລິດໄດ້ມີຄວາມກ້າວໜ້າ ຢ່າງກະໂດດຂັ້ນຂຶ້ນຢູ່ໃນສັງຄົມຄື : ຮູ້ຈັກປະດິດເຄື່ອງມືດ້ວຍໂລຫະທາດ, ເຖິງວ່າເຄື່ອງມືນັ້ນ ຍັງຫລ້າຫລັງຢູ່ກໍຕາມ , ຖ້າປຽບໃສ່ເຄື່ອງມືທີ່ເຮັດດ້ວຍໄມ້ ດ້ວຍຫີນ ມັນກໍກ້າວໜ້າກວ່າ , ສະມັດຖະພາບຂອງການຜະລິດ ກໍສູງກວ່າເກົ່າ , ຄຸນນະພາບຂອງແຮງງານກໍໄດ້ເພີ້ມຂຶ້ນ , ການຜະລິດ ເຄື່ອງໃຊ້ ຂອງກິນກໍເພີ້ມຂຶ້ນຫລາຍເທົ່າ; ແຕ່ກ່ອນ ເຮັດໄດ້ໜ້ອຍກໍປັນກັນກິນ,ຕໍ່ມາຫາໄດ້ຫລາຍຊ້ຳພັດເກີດຄວາມຕ້ອງການສູງຂຶ້ນ. ການຜະລິດຢູ່ໃນສັງຄົມ ນອກຈາກມີກິນມີໃຊ້ແລ້ວຍັງມີອັນ

ສະສົມໄວ້ສ່ວນໃດສ່ວນໜຶ່ງ, ຈຶ່ງເຮັດໃຫ້ມີຄວາມສາມາດປົດບາງເອົາໝາກຜົນຂອງການຜະລິດໄດ້ສ່ວນໃດສ່ວນໜຶ່ງ.

ຕົວຈິງ ຂອງສະພາບການ ດ້ານການຜະລິດນັ້ນ ໄດ້ອຳນວຍ ໃຫ້ຄົນສະໄໝບູຮານ ທຳມາຫາກິນ ໂດຍໃຜລາວ ໄດ້; ຍ້ອນຕົວຈິງມີແບບນັ້ນ ຈຶ່ງເຮັດໃຫ້ເຂົາເຈົ້າເຫັນວ່າ ບໍ່ຕ້ອງເຮັດລວມກິນລວມຄືແຕ່ກ່ອນອີກ. ອັນນີ້ກໍແມ່ນການສ້າງເງື່ອນໄຂ ແຕ່ຍັງບໍ່ທັນແມ່ນສາຍເຫດ ທີ່ພາໃຫ້ເກີດຊົນຊັ້ນເທື່ອ.

ເມື່ອເຂົາເຈົ້າປະລະເຮັດລວມກິນລວມແລ້ວ ເຂົາເຈົ້າກໍປ່ຽນເຮັດກິນສ່ວນຕົວ ແຕ່ລະຄອບຄົວ. ການຫັນປ່ຽນວິທີເຮັດກິນແບບນີ້ ໄດ້ເຮັດໃຫ້ລະບອບສ່ວນຕົວ ເກີດຂຶ້ນ ແລະເກີດມີຜູ້ທຸກຜູ້ຮັ່ງຂຶ້ນ, ເພາະວ່າຄອບຄົວໃດມີແຮງງານຜະລິດແລະ ຢູ່ບ່ອນດິນຟ້າອາກາດດີກໍຮັ່ງມີຂຶ້ນ, ຄອບຄົວໃດຫາກຖືກເຈັບເປັນຜະລິດບໍ່ໄດ້ ຫລືຢູ່ບ່ອນດິນຟ້າອາກາດບໍ່ດີກໍທຸກຈົນລົງ: ດັ່ງນັ້ນຜູ້ຮັ່ງມີຈຶ່ງໄດ້ກຳສິດຢຶດຖືອຸປະກອນການຜະລິດເປັນກຳມະສິດສ່ວນຕົວ ແລະ ກຳສິດປົກຄອງຂອງສັງຄົມຊູດຮີດຜູ້ທີ່ບໍ່ມີອຸປະກອນ ແລະບໍ່ມີສິດປົກຄອງສັງຄົມ.

ລວມຄວາມວ່າ ຊົນຊັ້ນເກີດຂຶ້ນ ຍ້ອນສາຽເຫດທີ່ມີລະບອບຢຶດຖື ອຸປະກອນການຜະລິດ ເປັນກຳມະສິດ ສ່ວນຕົວ ສາຽເຫດນີ້ພາໃຫ້ເກີດມີຊົນຊັ້ນໃນທ້າຽສັງຄົມປະຖົມບູຮານ ຕໍ່ໃສ່ສັງຄົມຂ້າທາດ, ສັງຄົມທີ່ມີຊົນຊັ້ນ ປໍລະປັກກັນ ໄດ້ຜ່ານໄປເຖິງ 3 ລະບອບຄືສັງຄົມຂ້າທາດ, ສັງຄົມສັກດີນາ ແລະສັງຄົມນາຽທຶນ. ດັ່ງນັ້ນຈຶ່ງເວົ້າໄດ້ວ່າຊົນຊັ້ນເກີດຂຶ້ນ ແລະ ມີລັດທຳອິດໃນປະຫວັດສາດ ທີ່ແມ່ນລັດຂອງເຈົ້າທາດອັນເປັນເຄື່ອງມືຂອງຊົນຊັ້ນເຈົ້າທາດ ເພື່ອປາບປາມ ແລະກົດຂີ່ຂູດຮີດຂ້າທາດ. ເມື່ອເປັນແນວນັ້ນ, ຊົນຊັ້ນບໍ່ແມ່ນເກີດຂຶ້ນຢ່າງບັງເອີນ ຫລືຟ້າແຖນແຕ່ງຕັ້ງລົງມາ, ແຕ່ຫາກມີສາຽເຫດຂອງມັນ. ສາຽເຫດນັ້ນແມ່ນເກີດມາຈາກພື້ນຖານການຜະລິດຂອງສັງຄົມ, ຍ້ອນມີລະບອບຢຶດຖືກຳມະສິດສ່ວນຕົວຈຶ່ງເກີດມີຊົນຊັ້ນ.

### ເຮັດແນວໃດຊົນຊັ້ນປໍລະປັກກັນ ຢູ່ໃນສັງຄົມ ຈຶ່ງຈະດັບສຸນລົງໄດ້.

ພວກເຮົາຊອກຮູ້ ສາຽເຫດຕົ້ນຕໍ ທີ່ເປັນບໍ່ເກີດຂອງຊົນຊັ້ນນັ້ນ, ກໍເພື່ອແນ່ໃສ່ເຮັດໃຫ້ຊົນຊັ້ນດັບສູນລົງໃນປະຫວັດສາດອັນແນ່ນອນ. ເພາະວ່າກົດເກນທີ່ພາໃຫ້ຊົນຊັ້ນເກີດຂຶ້ນບໍ່ແມ່ນຄົງຕົວຕະຫລອດໄປ ມັນມີເກີດຂຶ້ນແລະມີດັບສູນ

ລົງ. ແຕ່ພວກເຮົາຄວນເອົາໃຈໃສ່ ບາງຈຸດສຳຄັນດັ່ງລຸ່ມນີ້:

ກ) ພວກເຮົາຮູ້ແລ້ວວ່າ ຊົນຊັ້ນເກີດຂຶ້ນຍ້ອນລະບອບປຶດຖືກຳມະສິດສ່ວນຕົວປະກົດອອກແນວນັ້ນ. ເວລາໃດລະບອບນີ້ຫາກຍັງຄົງຕົວຢູ່. ຊົນຊັ້ນກໍຄົງຕົວຢູ່ຄືກັນແລະສະພາບການຄົນຂູດຮີດຄົນກໍຍັງຄົງມີຢູ່ສະເໝີ.

ຂ) ຈຸດໝາຍແລະອຸດົມຄະຕິຂອງພວກເຮົາແມ່ນຕໍ່ສູ້ເພື່ອເຮັດໃຫ້ສັງຄົມບໍ່ມີຊົນຊັ້ນ, ບໍ່ມີຄົນຂູດຮີດຄົນ. ຢາກເຮັດໄດ້ແນວນັ້ນກ່ອນອື່ນໝົດ ແມ່ນຕ້ອງຕໍ່ສູ້ລົບລ້າງລະບອບປຶດຖືກຳ ມະສິດສ່ວນຕົວ ກ່ຽວກັບອຸປະກອນ ການຜະລິດໃນສັງຄົມ, ເຮັດໃຫ້ອຸປະກອນການຜະລິດນັ້ນ ກາຍເປັນຂອງປວງຊົນລວມໝູ່ຢ່າງຕະຫລອດການ ແລະສ້າງພື້ນຖານການຜະລິດໃຫ້ກ້າວໜ້າ ທັນສະໄໝເຮັດໃຫ້ວັດຖຸສິ່ງຂອງທີ່ຜະລິດອອກຢູ່ໃນສັງຄົມພໍກິນພໍໃຊ້ອຸດົມສົມບູນ, ບໍ່ໃຫ້ມີຜູ້ທຸກ, ຜູ້ຮັ່ງເກີດຂຶ້ນ ; ການພົວພັນລະຫວ່າງຄົນກັບຄົນແມ່ນພົວພັນແບບສະເໝີພາບ. ເຮັດໄດ້ແນວນັ້ນຈິ່ງຈະດັບສູນຊົນຊັ້ນໄດ້ຢ່າງສິ້ນເຊີງ.

ດັ່ງນັ້ນ ພາລະກິດປະຕິວັດຂອງພວກເຮົາ ທີ່ຢູ່ພາຍໃຕ້ການນຳພາຈະກ້າວຂຶ້ນໄປເທື່ອລະກ້າວ, ຈົນເຖິງເວລາໃດ

ໃນສັງຄົມບໍ່ມີຊົນຊັ້ນ, ບໍ່ມີຄົນຂູດຮີດຄົນແລ້ວໃນເວລານັ້ນຈຶ່ງຈະສຳເຫລັດຫນ້າທີ່.

## ໔. ການຕໍ່ສູ້ຊົນຊັ້ນ ແມ່ນກົດເກນອັນຈຳເປັນຂອງສັງຄົມ ທີ່ມີຊົນຊັ້ນ

1. ເປັນຫຍັງຈຶ່ງມີການຕໍ່ສູ້ຊົນຊັ້ນຢູ່ໃນສັງຄົມ?

ຫລັກທິດສະດີວ່າດ້ວຍຊົນຊັ້ນ ແລະ ການຕໍ່ສູ້ຊົນຊັ້ນ ແມ່ນຫລັກທິດສະດີປະຕິວັດທີ່ສຳຄັນທີ່ສຸດ. ມັນໄດ້ແຊກຊອດເຂົ້າໃນ ແຕ່ລະບັນຫາ ທິດສະດີອື່ນໆ ຂອງລັດທິມາກ-ເລນິນທັງຫມົດ. ມັນໄດ້ຊີ້ໃຫ້ຊົນຊັ້ນ ກຳມະຊີບ ແລະ ຜູ້ທີ່ຖືກກົດຂີ່ຂູດຮີດທັງຫມົດ ເຫັນແຈ້ງເສັ້ນທາງເດີນເພື່ອປົດປ່ອຍຕົນເອງ ແລະ ກໍ່ສ້າງຊີວິດອັນອິ່ມຫນຳສຳລານ. ທິດສະດີນີ້, ມັນແມ່ນພື້ນຖານເພື່ອໃຫ້ພວກເຮົາຈຳແນກໄດ້ມິດແລະສັດຕູ. ຈາກນັ້ນພວກເຮົາຈຶ່ງຈະຮູ້ວາງແນວທາງຍຸດທະສາດ, ຍຸດໂທບາຍຂອງການປະຕິວັດໄດ້.

ການຕໍ່ສູ້ກູ້ຊາດຕ້ານອາເມລິກາ ຂອງພວກເຮົາປະຈຸບັນນີ້ ກໍແມ່ນການຕໍ່ສູ້ຊົນຊັ້ນ ທີ່ດຸເດືອດເຄັ່ງຮ້ອນທີ່ສຸດ ເພາະສະນັ້ນແນວຄິດ, ທັດສະນະ ແລະຫລັກຫມັ້ນຂອງ

ທິດສະດີກ່ຽວກັບຊົນຊັ້ນ ແລະ ການຕໍ່ສູ້ຊົນຊັ້ນ ຂອງລັດທິມາກ-ເລນິນຈຶ່ງເປັນອາວຸດອັນແຫລມຄົມ ແລະ ເປັນແນວຄິດຊີ້ນຳທຸກການກະທຳ ຂອງພວກເຮົາຜູ້ເຮັດການປະຕິວັດ.

ກ່ອນອື່ນຫມົດທິດສະດີຊົນຊັ້ນ ແລະການຕໍ່ສູ້ຊົນຊັ້ນໄດ້ຈຳແນກໃຫ້ພວກເຮົາເຫັນທາດແທ້ຂອງສັງຄົມ ທີ່ມີຊົນຊັ້ນປໍລະປັກກັນ. ພວກເຮົາເຖິງມີຊີວິດແລະພວມດຳລົງຊີວິດຢູ່ໃນສັງຄົມທີ່ມີຊົນຊັ້ນ. ເພາະສະນັ້ນສະພາບການອັນບໍ່ຍຸດຕິທຳລະຫວ່າງຄົນຕໍ່ຄົນ ຈຶ່ງສະແດງອອກຕໍ່ຫນ້າພວກເຮົາຢູ່ເລື້ອຍໆຄື: ບາງຈຳພວກມີເຂົ້າເຕັມສາງ, ແຕ່ຂະນະດຽວກັນນັ້ນບໍ່ຈັກວ່າເທົ່າໃດຄົນ ອຶດເຂົ້າຢາກເກືອ; ບາງຈຳພວກເວລາໃດ ກໍກິນອີ່ມນຸ່ງອຸ່ນດຳລົງຊີວິດຢ່າງເຫລືອເຟືອ, ມີຫໍເຮືອນຢູ່ອັນກ້ວາງຂວາງ, ໃນຂະນະດຽວກັນນັ້ນບໍ່ຈັກວ່າເທົ່າໃດບໍ່ມີເຮືອນຢູ່, ບໍ່ມີເຂົ້າກິນເຮັດຊີລົ້ມຊີດາງຫລັງສູ້ຟ້າຫນ້າສູ້ແດດແຕ່ກໍຍັງຕົກທຸກໄດ້ຍາກເຂົ້າຂາດແລງແກງຂາດຫມໍ້ ເສື້ອຂາດຫນ້າຜ້າຂາດຫລັງຕະຫລອດຊີວິດ; ບາງຈຳພວກມີສິດກົດຂີ່ຂົ່ມເຫັງເຕັງຄໍ່ຜູ້ອື່ນ, ໃນເວລາດຽວກັນນັ້ນບໍ່ຈັກວ່າເທົ່າໃດຄົນມີຊີວິດຢູ່ຢ່າງ

ຕ່ຳຕ້ຽແລະຖືກຈັບກຸມຄຸມຂັງ ຍ້ອນວ່າ ບໍ່ມີສິດທັງໆໝົດ ນັບທັງສິດເປັນພົນລະເມືອງກໍບໍ່ມີອີກຊ້ຳ; ໃນເວລານູ້ໃດກໍ ປາກຢູ່ດີມີສຸກ , ຊ້ຳພັດມີຄົນຈຳນວນໜຶ່ງ ກໍ່ໂທດກ່ຳຂຶ້ນ ອັນເຕັມໄປດ້ວຍຄວາມລົ້ມຕາຍເສຽຫາຍ ຍ້ອນໜາກແຕກ ໜາກໂບມ ຂອງເຂົາຖິ້ມໃສ່ໂດຍບໍ່ມີຄວາມສົງສານ ເຖິງຊີ ວິດຂອງມະນຸດຢູ່ໃນສັງຄົມ ; ຄວາມເວົ້າຂອງເຂົາວ່າຊ່ວຍ ເຫລືອເບິ່ງແຍງ ແຕ່ການກະທຳພັດດູຖູກປາບປາມທໍລະ ມານຢ່າງປ່າເຖື່ອນ . ດັ່ງນັ້ນພວກເຮົາຈິ່ງເຫັນແຈ້ງວ່າບໍ່ ເກີດຂອງຄວາມບໍ່ຍຸດຕິທຳແມ່ນມາຈາກໃສແທ້ ? ພວກ ເຮົາອາດຈະຕອບໄດ້ໂລດວ່າ : ເຫດການທີ່ພາໃຫ້ເກີດ ຄວາມບໍ່ຍຸດຕິທຳນັ້ນແມ່ນມາຈາກຊົນຊັ້ນຂູດຣີດ ຜູ້ກຳອຳ ນາດນັ້ນເອງ.

ແຕ່ວ່າ ພຽງແຕ່ຕອບເທົ່ານັ້ນ ກໍຍັງບໍ່ທັນແກ້ໄຂໄດ້ບໍ່ ເກີດແລະທາດແທ້ຂອງມັນ.ທິດສະດີກ່ຽວກັບຊົນຊັ້ນແລະ ການຕໍ່ສູ້ຊົນຊັ້ນ ຂອງລັດທິມາກ – ເລນິນແມ່ນ ທວນໄຟ ເບື້ອງທາງໃຫ້ພວກເຮົາເຫັນແຈ້ງ ທາດແທ້ ແລະ ບໍ່ເກີດ ຂອງສະພາບການອັນບໍ່ຍຸດຕິທຳນັ້ນ ແລະ ຍັງຊີ້ໃຫ້ພວກ ເຮົາເຫັນເສັ້ນທາງອັນທີ່ຖືກຕ້ອງເພື່ອລົບລ້າງຄວາມບໍ່ຍຸດ

ຕິທຳນັ້ນຢ່າງຕະຫລອດການ.

ທຸກລະພາບການທີ່ຄົນຂູດຮີດຄົນ ຢູ່ໃນສັງຄົມແມ່ນການຂູດຮີດຊົນຊັ້ນໃນສັງຄົມທີ່ມີຊົນຊັ້ນປໍລະປັກກັນເພາະບໍ່ມີໃຜຈະຢືນຢູ່ນອກຊົນຊັ້ນໃດຊົນຊັ້ນໜຶ່ງໄດ້.ບັນດາຊົນຊັ້ນຂູດຮີດທັງໝົດນັ້ນ ເຖິງວ່າພວກເຂົາມີການແປກຕ່າງກັນອັນໃດອັນໜຶ່ງກໍ່ຕາມທາດແທ້, ສິດປະໂຫຍດກໍ່ແມ່ນນອນຢູ່ຊົນຊັ້ນອັນດຽວກັນ.ຕົວຢ່າງ;ຊາວນາຜູ້ອອກແຮງງານທັງຫລາຍເຖິງວ່າຈະຢູ່ໃນຖານະ ແລະ ຈຸດພິເສດຕ່າງກັນກໍ່ຕາມທາດແທ້ແລະ ສິດປະໂຫຍດຂອງຊາວນາກໍ່ແມ່ນອັນດຽວກັນເພາະເຂົາລ້ວນແຕ່ຢູ່ໃນຊົນຊັ້ນຖືກຂູດຮີດ ອັນດຽວກັນ. ພວກສັກດີນາ, ນາຍທຶນນັ້ນເຖິງວ່າເຂົາຈະຢູ່ໃນຊົນຊັ້ນຕ່າງກັນກໍ່ຕາມ, ທາດແທ້ແລະສິດຜົນປະໂຫຍດຂອງເຂົາກໍ່ແມ່ນຂູດຮີດກິນແຮງງານຂອງຜູ້ອື່ນຄືກັນ.ເມື່ອເບິ່ງໃນດ້ານທາດແທ້ ແລ້ວມັນແມ່ນສັງຄົມໄດ້ແບ່ງອອກເປັນສອງຊົນຊັ້ນປໍລະປັກກັນຄື ຊົນຊັ້ນຂູດຮີດ ແລະ ຊົນຊັ້ນທີ່ຖືກຂູດຮີດ.ເພາະສະນັ້ນເລນິນຈຶ່ງເວົ້າວ່າ "ບ່ອນໃດມີການກົດຂີ່ຂູດຮີດ ທາງຊົນຊັ້ນ ບ່ອນນັ້ນກໍ່ມີການຕໍ່ສູ້ ທາງຊົນຊັ້ນ" ເປັນຫຼັງຈຶ່ງເປັນແນວນັ້ນ?ມັນເປັນແນວນັ້ນກໍ່ຍ້ອນ

ວ່າ ໃນສັງຄົມທີ່ມີຊົນຊັ້ນປົລະປັກກັນນັ້ນ ຖານະ ແລະສິດ ປະໂຫຍດມັນຂັດແຍ້ງກັນ ຢ່າງເລິກເຊິ່ງ ຫມາຍຄວາມວ່າ ຂັດແຍ້ງກັນຢ່າງບໍ່ປານິປານອມໄດ້, ຈໍາເປັນຕ້ອງມີການ ຕໍ່ສູ້ເຖິງຂັ້ນແຕກຫັກ ເພື່ອແກ້ໄຂ. ຜົນປະໂຫຍດຂອງຊົນ ຊັ້ນບໍ່ແມ່ນເກີດຂຶ້ນຍ້ອນຄວາມມັກຂອງຄົນຢູ່ໃນຊົນຊັ້ນ,ມັນ ແມ່ນ ເກີດຂຶ້ນຍ້ອນຖານະຂອງແຕ່ລະຊົນຊັ້ນ ເປັນອັນກົດ ສືນ. ຕົວຢ່າງ:ສັງຄົມສັກດີນາແມ່ນຊົນຊັ້ນສັກດີນາເປັນຜູ້ ປົກຄອງສັງຄົມຖານະອັນນັ້ນ ເປັນອັນຕັດສິນຜົນປະໂຫຍດ ດ້ວຍການຂູດຮີດ ແບບສັກດີນາສ່ວນຊາວໄຮ່ນານັ້ນ ແມ່ນ ຢູ່ໃນຖານະຖືກປົກຄອງແລະຖືກການກົດຂີ່ຂູດຮີດ, ເພາະ ສະນັ້ນ ຜົນປະໂຫຍດຂອງຊາວໄຮ່ນາຈຶ່ງແມ່ນເຮັດແນວໃດ ໃຫ້ພົ້ນອອກຈາກການຂູດຮີດໃຫ້ໄດ້, ໃຫ້ມີດິນນາເຮັດກິນ ແລະມີງົວຄວາຍເພື່ອໃຊ້ສ້າງຢູ່ທໍາກິນໃຫ້ອີ່ມໜໍາສໍາລານ.

ມັນເປັນອັນຈະແຈ້ງແລ້ວວ່າຂໍ້ຂັດແຍ້ງ ທາງຊົນຊັ້ນ ດ້ານສິດຜົນປະໂຫຍດແມ່ນຂໍ້ຂັດແຍ້ງພື້ນຖານຂອງສັງຄົມ ສະນັ້ນການຕໍ່ສູ້ຊົນຊັ້ນຈຶ່ງແມ່ນກົດເກນອັນຈໍາເປັນ ໃນສັງ ຄົມທີ່ມີຊົນຊັ້ນປົລະປັກ;ເພາະຖານະແລະສິດຜົນປະໂຫຍດ ຂອງຊົນຊັ້ນແມ່ນບັນຫາພື້ນຖານເພື່ອຍືນຍົງຄົງຕົວຂອງ

ແຕ່ລະຊົນຊັ້ນ. ມັນເປັນບັນຫາຕັດສິນທ່າທີຂອງຊົນຊັ້ນກ່ຽວກັບທຸກບັນຫາຢູ່ໃນສັງຄົມ.

ຕົວຢ່າງ: ທ່າທີຂອງຊົນຊັ້ນກຳມະກອນຕໍ່ພວກເຈົ້າທຶນແມ່ນຈະຕ້ອງໂຄ່ນລົ້ມຊົນຊັ້ນຂູດຣີດອັນນີ້ ເພາະວ່າລະບອບຂອງມັນຊົ່ວຊ້າປ່າເຖື່ອນ ແຕ່ຊົນຊັ້ນນາຍທຶນຊ້ຳພັດຖືວ່າລະບອບຂອງມັນດີງາມກ່ວາໝູ່ ແລະ ຕ້ອງຮັກສາໄວ້ຕະຫລອດການ. ຈາກທ່າທີດັ່ງກ່າວນັ້ນແຕ່ລະຊົນຊັ້ນຈຶ່ງວາງແນວທາງນະໂຍບາຍ ຂອງຕົນ ອອກເພື່ອນຳເອົາສິດຜົນປະໂຫຍດມາໃຫ້ຊົນຊັ້ນຂອງຕົນ.

ດັ່ງນັ້ນການຕໍ່ສູ້ລະຫວ່າງຊົນຊັ້ນ ຈຶ່ງແມ່ນການຕໍ່ສູ້ເອົາເປັນເອົາຕາຍ, ບໍ່ມີການຜ່ອນສັ້ນຜ່ອນຍາວແລະປານີປານອມກັນໄດ້. ເຖິງວ່າຄວາມເວົ້າຂອງເຂົາວ່າຈະຊ່ວຍເຫລືອເບິ່ງແຍງຊົນຊັ້ນທຸກຍາກກໍແມ່ນພຽງແຕ່ເປັນການຫລອກລວງຕົວະຍົວະເທົ່ານັ້ນ. ຕົວຢ່າງ: ຈັກກະພັດອາເມລິການຸກຮານປະເທດເຮົາ ແຕ່ພວກມັນພັດຮ້ອງໂຮ່ວ່າອາເມລິກາມີໜ້າທີ່ຊ່ວຍເຫລືອລາວ, ວ່າອາເມລິກາກໍ່ມັກສັນຕິພາບ, ນັ້ນແມ່ນຄວາມເວົ້າຫລອກລວງຂອງຊົນຊັ້ນຂູດຣີດເພື່ອຈະປົດບັງໃບໜ້າຮຸກຮານອັນເປື້ອນເລືອດຂອງ

ພວກມັນ. ບັນດາຊົນຊັ້ນຂູດຣີດບໍ່ມີຈັກເທື່ອທີ່ຈະຍອມປະລະຜົນປະໂຫຍດທາງຊົນຊັ້ນຂອງພວກມັນ, ໝາຍຄວາມວ່າບັນດາຊົນຊັ້ນຂູດຣີດບໍ່ມີຈັກເທື່ອ ທີ່ຈະປ່ຽນແປງທາດແທ້ຂູດຣີດຂອງມັນໄດ້, ມີແຕ່ຕໍ່ສູ້ຊົນຊັ້ນອັນແຂັ້ມແຂງ ແລະ ເປັນທຳຂອງມະຫາຊົນທີ່ຖືກກົດຂີ່ຂູດຣີດ, ເຮັດໃຫ້ພວກມັນປະລາໄຊພວກມັນຈຶ່ງຈະບໍ່ຂູດຣີດໄດ້. ສົມທຽບໃສ່ການຕໍ່ສູ້ຕ້ານອາເມລິກາຂອງພວກເຮົາປະຈຸບັນນີ້ພວກເຮົາກໍຈະເຫັນແຈ້ງທີ່ສຸດກ່ຽວກັບທາດແທ້ ຂອງຊົນຊັ້ນນີ້.

ລວມຄວາມວ່າການຕໍ່ສູ້ ຊົນຊັ້ນແມ່ນກົດເກນ ອັນຈຳເປັນຂອງສັງຄົມທີ່ມີຊົນຊັ້ນປໍລະປັກ, ແມ່ນເສັ້ນທາງອັນດຽວທີ່ຖືກຕ້ອງຂອງມະຫາຊົນຜູ້ຖືກຂູດຣີດ ແລະອັນນັ້ນກໍແມ່ນສະແດງເຖິງຫັດສະນະພື້ນຖານຂອງບັນດານັກປະຕິວັດພວກເຮົາ.

2. ລັກສະນະ ແລະ ຮູບການຕໍ່ສູ້ຊົນຊັ້ນມີຫຍັງແດ່?

ກ). ລັກສະນະຂອງການຕໍ່ສູ້ຊົນຊັ້ນ. ການຕໍ່ສູ້ຊົນຊັ້ນເກີດມາຈາກຂໍ້ຂັດແຍ້ງລະຫວ່າງ ຊົນຊັ້ນເຊິ່ງເປັນຂໍ້ຂັດແຍ້ງທີ່ບໍ່ກົມກຽວກັນໄດ້; ທ່າທີຂອງແຕ່ລະຊົນຊັ້ນແມ່ນຜີປອງນຳເອົາສິດຜົນປະໂຫຍດ ມາໃຫ້ແກ່ຊົນຊັ້ນ ຂອງຕົນ.

ລັກສະນະຂອງການຕໍ່ສູ້ຊົນຊັ້ນ ມັນສະແດງອອກດັ່ງລຸ່ມນີ້:

– ການຕໍ່ສູ້ຊົນຊັ້ນແມ່ນການຕໍ່ສູ້ທີ່ບໍ່ກົມກຽວປານີປານອມກັນໄດ້, ແມ່ນການຕໍ່ສູ້ເອົາເປັນເອົາຕາຍ, ເພາະສະນັ້ນກະໂຕມັນເອງກໍ່ໄດ້ມີລັກສະນະເຖິງກົກເຖິງປາຍຢູ່ແລ້ວ ການຕໍ່ສູ້ຊົນຊັ້ນ ອັນສຸດຂີດນັ້ນເວລາໃດ ກໍ່ແມ່ນຢຸດຕິລົງດ້ວຍການປະລາໄຊຂອງຊົນຊັ້ນຂູດຮີດຢ່າງສິ້ນເຊີງ ແລະ ການຕໍ່ສູ້ຂອງປະຊາຊົນ ຜູ້ຖືກກົດຂີ່ຂູດຮີດເວລາໃດກໍ່ໄດ້ໄຊຊະນະ, ໄດ້ສ້າງຕັ້ງອຳນາດການປົກຄອງຂອງຕົນຂຶ້ນຢ່າງແທ້ຈິງ ແລະ ໄດ້ຍຶດຖືອຸປະກອນການຜະລິດເປັນເຈົ້າຂອງສັງຄົມອັນແນ່ນອນ. ເພາະວ່າອະທຳເວລາໃດກໍ່ບໍ່ຊະນະສົບທຳ, ລັກສະນະນີ້ມັນສະແດງເຖິງແນວຄິດແລະ ຫລັກໝັ້ນຊົນຊັ້ນອັນເດັດຂາດຂອງນັກປະຕິວັດຢູ່ທຸກເວລາ.

– ການຕໍ່ສູ້ຊົນຊັ້ນຕ້ອງມີລັກສະນະຍາວນານ, ຫຍຸ້ງຍາກລຳບາກແລະສັບສົນ. ເປັນຫຍັງຈຶ່ງເປັນແນວນັ້ນ? ມັນເປັນແນວນັ້ນ ກໍ່ເພາະວ່າການຕໍ່ສູ້ຊົນຊັ້ນ ມັນບໍ່ແມ່ນຈະຕ້ານແຕ່ຈຳພວກທີ່ກຳສິດອຳນາດ ການປົກຄອງຢູ່ໃນຊົນຊັ້ນຂູດຮີດເທົ່ານັ້ນ, ແຕ່ຍັງແມ່ນຕ້ານຊົນຊັ້ນຂອງພວກມັນທັງຫມົດອີກດ້ວຍ; ຢູ່ໃນກຳມືຂອງຊົນຊັ້ນຊ້າພັດມີຕຳ

ຫລວດ, ທະຫານ ແລະເສດຖະກິດເປັນກຳລັງຂອງພວກນັ້ນ, ຫມາຍຄວາມວ່າພວກມັນມີກົງຈັກແຫ່ງຄວາມຮຸນແຮງ ແລະບົດຮຽນປົກຄອງສັງຄົມຕັ້ງຫລາຍເຊັ່ນມາແລ້ວ, ດ້ານໜຶ່ງອີກພວກມັນ ຍັງສົມຮູ້ຮ່ວມຄິດກັບບັນດາກຳລັງປະຕິການອື່ນໆ ທາງພາຍນອກອີກ.

ປື້ນປູ່ໃນດ້ານທາດແທ້ກໍໄດ້ເວົ້າມາຂ້າງເທິງນັ້ນສັດຕູຂອງຊົນຊັ້ນບໍ່ມີຈັກເທື່ອຈະຍອມປະລະຜົນປະໂຫຍດຂອງພວກມັນຢ່າງງ່າຍດາຍ. ຈົນຮອດມື້ໃກ້ຈະຕາຍພວກມັນກໍ່ຍັງດື້ດ້ານເລວຊາມປູ່ສະເຫມີ. ດ້ານໜຶ່ງອີກຊົນຊັ້ນທີ່ຖືກກົດຂີ່ຂູດຮີດ ກໍບໍ່ແມ່ນ ຈະຕື່ນຕົວທາງດ້ານ ຜົນປະໂຫຍດທາງຊົນຊັ້ນ ຂອງຕົນໃນຄາວໜຶ່ງຄາວດຽວໄດ້, ມັນຕ້ອງຜ່ານ ບົດຮຽນ ຕົວຈິງຂອງຕົນ ເອງສົມທົບກັບການ ສຶກສາອົບຮົມແລະຈັດຕັ້ງນຳພາເຂົາເຈົ້າອີກດ້ວຍ.

ເພາະສະນັ້ນການຕໍ່ສູ້ຊົນຊັ້ນຂອງມະຫາຊົນ ນັ້ນ ຕ້ອງໄປແຕ່ຕ່ຳເຖິງສູງ ແຕ່ນ້ອຍເຖິງໃຫຍ່ ແຕ່ອ່ອນ ເຖິງແຂງແຕ່ພາກສ່ວນ ກະຈັດກະຈາຍເຖິງເປັນ ຂະບວນ ຟົດເດືອດໂດຍມີມະຫາຊົນ ສ່ວນ ຫລວງຫລາຍເຂົ້າຮ່ວມ. ເປັນຫຍັງການຕໍ່ສູ້ຊົນຊັ້ນຈຶ່ງຫຍຸ້ງຍາກສັບສົນແລະດຸເດືອດ? ປາກຕິເອົາ

ຊະນະສັດຕູທາງຊົນຊັ້ນນັ້ນຕ້ອງມີກຳລັງອັນແທ້ຈິງຂອງຕົນເອງ, ກຳລັງແຮງນັ້ນປະກອບດ້ວຍກຳລັງການເມືອງ, ແລະກຳລັງປະກອບອາວຸດ. ເພາະວ່າສັດຕູຂອງຊົນຊັ້ນນັ້ນ, ຕົ້ນຕໍແມ່ນມັນໃຊ້ກົງຈັກຄວາມຮຸນແຮງເພື່ອປົກຄອງປາບປາມປະຊາຊົນ, ເຮັດໃຫ້ຄວາມຄຽດແຄ້ນຂອງປະຊາຊົນນັບມື້ນັບເລິກເຊິ່ງ. ພ້ອມກັບນັ້ນພວກມັນກໍຍັງໃຊ້ເລ່ກົນຕົວະຍົວະຫລອກລວງມະຫາຊົນຕື່ມອີກ.

ນັກປະຕິວັດແມ່ນບໍ່ຢາກເສຍເລືອດເນື້ອ, ແຕ່ຕົວຈິງການຕໍ່ສູ້ຊົນຊັ້ນ ນັ້ນແມ່ນການຕໍ່ສູ້ດ້ວຍເລືອດເນື້ອເຫື່ອໄຄ, ຖ້າພວກເຮົາຢ້ານເສຍເລືອດເນື້ອ ກໍໝາຍຄວາມວ່າຍອມຈຳນົນຕໍ່ສັດຕູເທົ່ານັ້ນ.ນອກຈາກສອງຊົນຊັ້ນພື້ນຖານແລ້ວຍັງມີຫລາຍຊົນຊັ້ນວັນນະ, ຫລາຍພາກສ່ວນທີ່ມີທ່າອ່ຽງແລະທ່າທີແປກຕ່າງກັນ ທີ່ພວມສະແດງອອກ ຢູ່ຕໍ່ໜ້າພວກເຮົາ; ດັ່ງນັ້ນການຕໍ່ສູ້ຊົນຊັ້ນຕ້ອງເຕົ້າໂຮມໃຫ້ໄດ້ທຸກກຳລັງປະຕິວັດ ນັບມື້ນັບຫລາຍເຂົ້າຢູ່ໃນແນວໂຮມອັນດຽວເພື່ອສຸມປາຍຫອກໃສ່ສັດຕູຕົວຕົ້ນ ເພາະວ່າການຕໍ່ສູ້ຊົນຊັ້ນບໍ່ແມ່ນຈະກ້າວໄປຢ່າງຊື່ກົງໄດ້. ທຳມະດາມັນເຄີຍສະແດງອອກຢ່າງລະອິດລະອ່ຽວກ້ຽວສອດສັບສົນ, ບາງເທື່ອ

ມັນເປັນຂະບວນຟົດເດືອດຂຶ້ນ, ບາງເທື່ອມັນພັດຖືກບຸບລົງຊົ່ວຄາວ.

ສະນັ້ນຈຶ່ງລວມຄວາມວ່າການຕໍ່ສູ້ຊົນຊັ້ນມັນຕ້ອງຍາວນານລຳບາກຫຍຸ້ງຍາກສັບສົນ, ແຕ່ສຸດທ້າຍກໍໄດ້ຮັບໄຊຊະນະຢ່າງແນ່ນອນ ພວກເຮົາຄວນເຂົ້າໃຈແຈ້ງກ່ຽວກັບລັກສະນະຍາວນານຂອງການຕໍ່ສູ້, ແຕ່ກໍຕ້ອງເຂົ້າໃຈວ່າການຍາວນານນັ້ນກໍມີຂອບເຂດ, ບໍ່ແມ່ນຄວາມມັກຂອງເຮົາ, ມັນແມ່ນຍ້ອນນັບດາເງື່ອນໄຂຕົວຈິງນອກຕົວເປັນສິ່ງຕັດສິນ.

– ການຕໍ່ສູ້ຊົນຊັ້ນຍັງຕ້ອງມີລັກສະນະປວງຊົນແລະຮອບດ້ານອີກ. ເພາະວ່າສັດຕູຊົນຊັ້ນບໍ່ແມ່ນໃຊ້ແຕ່ອາວຸດເພື່ອປາບດ້ານດຽວເທົ່ານັ້ນ, ມັນຍັງໃຊ້ເສດຖະກິດ, ວັດທະນະທຳສັງຄົມຊື້ຈ້າງຈອບຍອງອີກ, ອັນເຮັດໃຫ້ມະຫາຊົນຫລົງເຊື່ອຕາງໃຈຍອມໃຫ້ພວກມັນຂູດຮີດ, ແຕ່ໃນເມື່ອມະຫາຊົນໄດ້ຮູ້ສຶກຕື່ນຕົວດ້ານສິດປະໂຫຍດແລ້ວຈຳເປັນກຳລັງແຮງຕໍ່ສູ້ຊົນຊັ້ນຢ່າງບໍ່ມີຂອບເຂດ ແລະຫ້າວຫັນລຸກຂຶ້ນເຮັດການປະຕິວັດ; ເຖິງວ່າຊົນຊັ້ນທີ່ປລະປັກກັບເຂົານັ້ນຈະດື້ດ້ານຈອງຫອງຍຽງໃດ ກໍບໍ່ອາດຈະແກ້ດຶງ

ການປິ່ນປົວຄົງຕົວຂອງພວກມັນໃຫ້ຍາວໄດ້; ພວກມັນເດັດຂາດຈະຕ້ອງຖືກໂຄ່ນລົ້ມ.

ໃນປະຫວັດສາດຂອງສັງຄົມມະນຸດກໍໄດ້ປັ້ງປີ່ນເລື່ອງນີ້ໃຫ້ພວກເຮົາເຫັນແຈ້ງທີ່ສຸດ, ເປັນຕົ້ນແມ່ນນັບຕັ້ງແຕ່ການປະຕິວັດເດືອນ 10 ປີ 1917 ຂອງໂຊວຽດ ມາເຖິງປະຈຸບັນນີ້; ການປະຕິວັດເດືອນ 10 ສຳເລັດຜົນນັ້ນຍັງສະແດງໃຫ້ພວກເຮົາເຫັນຢ່າງຄັກແນ່ ກ່ຽວກັບບັນຫາໂຄ່ນລົ້ມຊົນຊັ້ນ.

ຂ) ຮູບ ການ ຕໍ່ສູ້ຊົນຊັ້ນ : ດັ່ງພວກເຮົາໄດ້ກ່າວມາຂ້າງເທິງນັ້ນການຕໍ່ສູ້ຊົນຊັ້ນຂອງມະຫາຊົນ ທີ່ຖືກຂູດຮີດເວລາໃດກໍໄປແຕ່ຕ່ຳເຖິງສູງ. ມື້ທຳອິດມະຫາຊົນຍັງບໍ່ທັນຮູ້ບໍ່ເກີດຂອງການກົດຂີ່ຂູດຮີດ, ເຂົາມີແຕ່ດຳເນີນການຕໍ່ສູ້ຕ້ານບຸກຄົນນີ້ບຸກຄົນນັ້ນຢູ່ໃນຊົນຊັ້ນຂູດຮີດດ້ວຍຮູບການຕໍ່ສູ້ດ້ານເສດຖະກິດເພື່ອດັດແປງເງື່ອນໄຂ ທຳມາຫາກິນປະຈຳວັນເທົ່ານັ້ນ; ຄືປູ້ບັນດາໂຮງຈັກຂອງນາງທຶນ, ອ້າງນ້ອງກຳມະກອນຕໍ່ສູ້ທວງໃຫ້ເພີ່ມເງິນເດືອນ, ລົດຜ່ອນເວລາເຮັດວຽກ, ດັດແປງລະບອບອອກແຮງງານອື່ນໆ ; ຊາວນາ ກໍ ມີ ແຕ່ຕໍ່ສູ້ຮ້ອງຂໍໃຫ້ລົດຜ່ອນຄ່າເຊົ່າດອກເບ້ຽ ແລະ

ດ້ານການເກັບເກນອື່ນໆ ເພື່ອແກ້ໄຂຊີວິດປະຈຳວັນເທົ່ານັ້ນ. ດັ່ງນັ້ນການຕໍ່ສູ້ຊົນຊັ້ນຈຶ່ງຕ້ອງໄດ້ໃຊ້ບັນດາຮູບການລະອຽດດັ່ງລຸ່ມນີ້ :

1. ຮູບການຕໍ່ສູ້ທາງດ້ານເສດຖະກິດ ຮູບນີ້ແມ່ນຕ່ຳທີ່ສຸດມັນບໍ່ສາມາດຈະປົດປ່ຽນຕົນເອງໄດ້. ເພາະວ່າກົງຈັກປົກຄອງຂອງຊົນຊັ້ນບໍ່ທັນຖືກທັບມ້າງ, ຊົນຊັ້ນປະດິການພຽງແຕ່ທັນປ່ຽນຮູບການຂູດຮີດເທົ່ານັ້ນ. ດັ່ງນັ້ນການຕໍ່ສູ້ຊົນຊັ້ນເວລາໃດກໍຕ້ອງໄປເຖິງຮູບທີ່ 2 ອັນແມ່ນຮູບການຕໍ່ສູ້ທາງ ດ້ານ ການ ເມືອງ : ເພື່ອ ຍາດ ເອົາອຳນາດການປົກຄອງຂອງຊົນຊັ້ນ. ແຕ່ການຕໍ່ສູ້ດ້ານການເມືອງນີ້ແມ່ນຮູບການຕໍ່ສູ້ອັນສູງສຸດກ່ວາເພິ່ນ ແລະ ກໍມີລັກສະນະດຸເດືອດກ່ວາເພິ່ນຫມົດ. ຍ້ອນວ່າການຕໍ່ສູ້ດ້ານການເມືອງແມ່ນແນ່ໃສ່ໂຄ່ນລົ້ມຊົນຊັ້ນປົກຄອງແລະ ຍາດເອົາອຳນາດການປົກຄອງ ມາສູ່ກຳມືຂອງຕົນ. ການຕໍ່ສູ້ດ້ານການເມືອງບໍ່ພຽງແຕ່ມີການແຫ່ຂະບວນ, ລວມມິດຕິງ, ຫວ່ານໃບປິວ. ຕໍ່ສູ້ຖືກກົດຫມາຍຫລືຜິດກົດຫມາຍເທົ່ານັ້ນແຕ່ຍັງຕ້ອງໄດ້ໃຊ້ກຳລັງປະກອບອາວຸດ ແລະ ເຄິ່ງປະກອບອາວຸດ ເພື່ອໃຊ້ຄວາມຮຸນແຮງປະຕິວັດເພື່ອດັບສູນຊົນຊັ້ນປໍລະປັກແລ້ວ

ຈິງຍາດເອົາອຳນາດການປົກຄອງໄດ້. ແຕ່ຄວາມຮຸນແຮງນັ້ນບໍ່ຫມາຍເຖິງແຕ່ກຳລັງປະກອບອາວຸດເທົ່ານັ້ນ, ຍັງມີກຳລັງລຸກຮືຂຶ້ນຂອງມະຫາຊົນ ຜູ້ປະ ຕິ ວັດ ສ່ວນ ຫລວງຫລາຍອີກດ້ວຍ.

ພວກເຮົາຄວນຈົດຈຳຄຳສັ່ງສອນຂອງທ່ານເລນິນທີ່ວ່າ " ບັນຫາຍາດເອົາອຳນາດການປົກຄອງ ແມ່ນບັນຫາພື້ນຖານຂອງການປະຕິວັດ " ແຕ່ໃນການຕໍ່ສູ້ຊົນຊັ້ນນັ້ນຍັງມີອີກດ້ານຫນຶ່ງທີ່ບໍ່ຄວນເບິ່ງເບົາຄື: ຮູບການທີ 3 ເຊິ່ງແມ່ນຮູບການຕໍ່ສູ້ດ້ານແນວຄິດ : ຈຸດປະສົງຂອງການຕໍ່ສູ້ດ້ານແນວ ຄິດ ແມ່ນ ບຸກ ຕີ ທຸກຢ່າງທຳນອງຊວນເຊື່ອຂອງສັດຕູແລະທຸກແນວຄິດປະຕິການຂອງບັນດາຊົນ ຊັ້ນ ປໍ ລະ ປັກກັນ, ນຳເອົາແນວຄິດປະຕິວັດແລະແນວທາງຕໍ່ສູ້ຊົນຊັ້ນມາເຮັດໃຫ້ເຊື່ອມຊຶມເຂົ້າໃນຫມູ່ມະຫາຊົນ ເພື່ອຊີ້ນຳການກະທຳຕົວຈິງ.

ການຕໍ່ສູ້ດ້ານແນວຄິດແມ່ນ ການ ຕໍ່ ສູ້ ຍາວ ນານ ຕະຫລອດໄລຍະຂະບວນການປະຕິວັດ ແລະ ກ່ອນຈະເຂົ້າເຮັດການປະຕິວັດ, ແຕ່ເມື່ອໃດການປະຕິວັດ ສຳເລັດຜົນແລ້ວກໍ່ຍັງຕ້ອງຫມູນໃຊ້ທຸກຮູບການ, ທຸກພາຫານະແລະລະດົມ

ທຸກກຳລັງຕີສັດຕູໃນທຸກສະຫນາມຮົບດ້ານແນວຄິດອີກ.

ຄືພວກເຮົາໄດ້ຮູ້ນຳ ກັນ ມາ ແລ້ວ, ໃນການຕໍ່ສູ້ກູ້ຊາດ ຕ້ານອາເມລິກາຂອງພວກເຮົານີ້ ຈັກກະພັດອາເມລິກາໄດ້ ໃຊ້ສົງຄາມຈິດຕະສາດຕີພວກເຮົາທາງດ້ານແນວຄິດຄືຖຸ້ມ ລະເບີດບົງທຳລາຍ, ໃຊ້ບົດສັກຊື້ຈ້າງຕີເຂົ້າຈິດຕະສາດ ທັງຫມົດຊາດພວກເຮົາສົງຄາມຈິດຕະສາດຂອງພວກມັນ ແມ່ນອາວຸດທີ່ເປັນອັນຕະລາຍທີ່ສຸດທີ່ຕີ ເຂົ້າພາຍໃນຂອງ ພວກເຮົາ. ດ້ວຍເຫດນັ້ນການຕໍ່ສູ້ດ້ານແນວຄິດຈຶ່ງແມ່ນຮູບ ການອັນຫນຶ່ງຂອງ ການຕໍ່ສູ້ຊົນຊັ້ນຫຍຸ້ງຍາກສັບສົນ ແລະ ຍາວນານທີ່ສຸດ.

ລວມຄວາມວ່າການຕໍ່ສູ້ຊົນຊັ້ນ ແມ່ນການສົມທົບທັງ ສາມຮູບການຄື : ເສດຖະກິດ, ການເມືອງແລະແນວຄິດ. ບັນດາຮູບການນັ້ນແມ່ນຕິດພັນກັນຢ່າງແຫນ້ນຫນາ, ແຕ່ ຕ້ອງເອົາຮູບການຕໍ່ສູ້ດ້ານການເມືອງເປັນກົກ, ເພາະວ່າ ການທະຫານກໍແມ່ນນອນຢູ່ນຳກັນເທັ້ນ.

**ປ. ພະນັກງານ ແລະ ພາລະກອນປະຕິວັດ ຕ້ອງມີການເຝິກ ຝົນຕົນເອງໃຫ້ມີທັດສະນະ ແລະ ຫລັກຫມັ້ນຊົນຊັ້ນແນວໃດ ?**

ເວົ້າເຖິງການຕໍ່ສູ້ຊົນຊັ້ນກໍຫມາຍຄວາມວ່າ ເວົ້າເຖິງ

ການຕໍ່ສູ້ຂອງມະຫາຊົນຜູ້ທີ່ຖືກກົດຂີ່ຂູດຮີດ, ຕ້ານກັບຊົນຊັ້ນຂູດຮີດ. ບໍ່ມີຈັກເທື່ອທີ່ຈະໂຄ່ນລົ້ມສັດຕູ ຂອງຊົນຊັ້ນລົງ ໄດ້ງ່າຍດາຍຖ້າບໍ່ມີກະແສຟອງ ແຫ່ງການຕໍ່ສູ້ອັນດຸເດືອດຂອງປວງຊົນສ່ວນຫລວງຫລາຍ. ເມື່ອເວົ້າເຖິງປວງຊົນສ່ວນຫລວງຫລາຍ, ໃນນັ້ນກໍມີຊົນຊັ້ນທີ່ຍັງຫລ້າຫລັງ ແລະ ກໍ່ມີຊົນຊັ້ນທີ່ກ້າວຫນ້າທັນສະໄຫມກວ່າຫມູ່ຄື: ຊົນຊັ້ນກຳມະກອນສະໄຫມປະຈຸບັນ ທີ່ເປັນເຈົ້າຂອງປະຫວັດສາດຂອງສັງຄົມ ມະນຸດ ແລະ ມີຄວາມສາມາດເປັນແນວຫນ້ານຳພາການປະຕິວັດ ໄປເຖິງກົກເຖິງປາຍໄດ້. ເພາະສິດປະໂຫຍດ ຂອງຊົນຊັ້ນນີ້ບໍ່ມີຫຍັງ ຈະຂັດແຍ້ງກັບສິດປະໂຫຍດຂອງປວງຊົນຜູ້ທີ່ອອກແຮງງານ.

ສະນັ້ນພະນັກງານ ແລະ ພາລະກອນປະຕິວັດຂອງພວກ ເຮົາ ຈຶ່ງຕ້ອງເຝິກຝົນຕົນເອງໃຫ້ມີທັດສະນະ ແລະ ຈຸດພິເສດຂອງຊົນຊັ້ນກຳມະກອນດັ່ງລຸ່ມນີ້ :

໑. ຕ້ອງເຝິກຝົນຕົນເອງໃຫ້ມີນ້ຳໃຈຕໍ່ສູ້ເດັດດ່ຽວກ້າຫານຍອມເສຍສະຫລະ ທຸກສິ່ງທຸກຢ່າງເພື່ອຊົນຊັ້ນ.

ຕ້ອງຮູ້ສຶກຕົວວ່າເຮົາເອງ ເປັນຊົນຊັ້ນທີ່ຖືກຂູດຮີດມີແຕ່ສອງມືເປົ່າ, ປາກມີຊີວິດຢູ່ໄດ້ຕ້ອງອອກແຮງຕໍ່ສູ້

ກັບທຳມະຊາດບັງຄັບ ໃຫ້ທຳມະຊາດມາຮັບໃຊ້ຊີວິດຂອງຕົນ ໂດຍບໍ່ນັ່ງລໍຖ້າກິນແຮງງານຂອງຜູ້ອື່ນ ; ປາກມີສິດເສລີພາບປະຊາທິປະໄຕ, ຕ້ອງຕໍ່ສູ້ກັບສັດຕູຊົນຊັ້ນໂຄ່ນລົ້ມຊົນຊັ້ນ, ເຮັດໃຫ້ທຸກຄົນຮັບໃຊ້ຊີວິດຂອງຕົນໂດຍບໍ່ນັ່ງລໍຖ້າກິນແຮງງານຂອງຜູ້ອື່ນ; ປາກມີສິດເສລີພາບປະຊາທິປະໄຕ, ຕ້ອງຕໍ່ສູ້ກັບສັດຕູຊົນຊັ້ນໂຄ່ນລົ້ມຊົນຊັ້ນ, ເຮັດໃຫ້ທຸກສິດອຳນາດມາຕົກຢູ່ໃນກຳມືຂອງຕົນເອງ ແລະ ເອົາການຕໍ່ສູ້ນັ້ນເປັນການດຳລົງຊີວິດຂອງຕົນເອງຢູ່ທຸກເວລາ, ນີ້ແມ່ນລັກສະນະອັນພື້ນຖານຂອງຊົນຊັ້ນກຳມະກອນ ແລະ ກໍແມ່ນທີ່ຕັ້ງບ່ອນຢືນຂອງພວກເຮົາ ເພື່ອເຮັດການປະຕິວັດພວກເຮົາຄວນເຝິກຝົນຫລໍ່ຫລອມຕົນເອງ ຈົນໃຫ້ມີນ້ຳໃຈຕໍ່ສູ້ເດັດດ່ຽວດັ່ງກ່າວຂ້າງບົນນີ້.

໖. ຕ້ອງເຝິກຝົນຕົນເອງໃຫ້ມີການອອກແຮງງານດ້ວຍກາຍ ແລະ ມັນສະຫມອງເພື່ອຂະຫຍາຍຫົວຄິດປະດິດສ້າງຂອງຕົນ ໃຫ້ນັບມື້ນັບສູງຂຶ້ນ.

ເພື່ອຕອບສະຫນອງ ຄວາມຮຽກຮ້ອງຕ້ອງການ ຂອງສັງຄົມແລະທັງເຮັດໃຫ້ຄວາມຮູ້ຂອງຕົນເອງຮອບດ້ານຄື : ດ້ານວິທະຍາສາດທຳມະຊາດແລະວິທະຍາສາດທາງສັງຄົມ, ເຮັດໃຫ້ຄວາມຮູ້ຂອງເຮົາກ້າວ ຂຶ້ນທັນສະໄຫມຄືກັບ

ກັບຊົນ ຊັ້ນ ກຳ ມະ ກອນ ທີ່ ຢູ່ໃກ້ຊິດອຸປະກອນ ຜະລິດອັນ ກ້າວຫນ້າ, ເວລາໃດຊົນຊັ້ນກຳມະກອນກໍໃຊ້ຫົວຄິດປະດິດ ສ້າງຂອງຕົນເພື່ອດັດແປງອັນເກົ່າທີ່ຫລ້າຫລັງແລະສ້າງ ອັນໃຫມ່ທີ່ກ້າວຫນ້າທັນສະໄຫມຂຶ້ນຢູ່ເລື້ອຍໆ.

ນັ້ນແມ່ນລັກສະນະທີ່ທັນສະໄຫມ ຂອງຊົນຊັ້ນກຳມະ ກອນທີ່ພວກເຮົາຄວນຝຶກຝົນໃຫ້ໄດ້.

ມ. ຕ້ອງຝຶກຝົນຕົນເອງໃຫ້ມີສະຕິນັບຖືການຈັດຕັ້ງ ແລະ ລະ ບຽບວິໄນຢ່າງເຄັ່ງຄັດ:

ອັນນີ້ມັນແມ່ນກຳລັງແຮງ ທີ່ຊະນະເລີດ ຂອງຊົນຊັ້ນ ກຳ ມະ ກອນ ບໍ່ ວ່າໃນການຕໍ່ສູ້ສັດຕູຊົນຊັ້ນຫລືໃນການຜະ ລິດອັນທັນສະໄຫມ ມັນບໍ່ແມ່ນແຕ່ໃຊ້ກຳລັງແຮງດ້ານພາ ທາ ນະ ເທົ່າ ນັ້ນ ແຕ່ ຍັງໃຊ້ກຳລັງແຮງທີ່ເປັນເອກະພາບ ຂອງຄົນອີກດ້ວຍ.ດັ່ງນັ້ນພວກເຮົາເຮັດການປະຕິວັດຕໍ່ສູ້ຊົນ ຊັ້ນຄືດັ່ງຊູ່ມື້ນີ້, ຖ້າພວກເຮົາບໍ່ມີການຈັດຕັ້ງແຫນ້ນຫນາ ບໍ່ ມີ ລະ ບຽບ ວິໄນເຂັ້ມງວດອາດຈະບໍ່ເອົາຊະນະສັດຕູໄດ້. ເພາະ ວ່າ ພາ ທາ ນະ ແລະ ອາວຸດຂອງພວກເຂົາດີກ່ວາ ພວກເຮົາຫລາຍເທົ່າ, ສະນັ້ນພວກເຮົາເປັນພະນັກງານ ແລະ ພາລະກອນປະຕິວັດຍິ່ງຕ້ອງການໃຫ້ມີສະຕິຕໍ່ການ

ຈັດຕັ້ງ, ຕໍ່ລະບຽບວິໄນຢ່າງເຄັ່ງຄັດຈຶ່ງເປັນກຳລັງຣຸນແຮງຂອງການປະຕິວັດໄດ້.

໔. ຕ້ອງສ້າງຄວາມສາມັກຄີພາງໃນໃຫ້ແໜ້ນໜາ ແລະສ້າງສະຕິສາກົນກຳມະຊີບໃຫ້ກວ້າງຂວາງ :

ເພາະວ່າ ການຕໍ່ສູ້ຊົນຊັ້ນແມ່ນວຽກໃຫຍ່ງານໜັກຖ້າມີແຕ່ຊົນຊັ້ນໃດຊົນຊັ້ນໜຶ່ງ ຕໍ່ສູ້ແມ່ນບໍ່ໄປເຖິງຜົນສຳເລັດ, ມັນຈຶ່ງຈຳເປັນຕ້ອງເຕົ້າໂຮມທຸກຊົນຊັ້ນວັນນະແລະຊົນຄົນທີ່ຮັກຊາດ ແລະ ກ້າວໜ້າເຂົ້າຮ່ວມນຳຈຶ່ງຈະຊະນະໄດ້.

ແຕ່ຢາກເຕົ້າໂຮມທຸກຊົນວັນນະໄດ້, ຄວາມສາມັກຄີພາງໃນຕ້ອງແໜ້ນ, ສະຕິສາກົນຕ້ອງກ້ວາງຂວາງຈຶ່ງຍາດໄດ້ທາງສຽງສະໜັບສະໜູນແລະ ຄວາມຮ່ວມໄມ້ຮ່ວມ ມື ຂອງ ທຸກຊົນຄົນ ຈຶ່ງເຮັດຫລ້ອນໜ້າທີ່ອັນໜັກໜ່ວງນັ້ນໄດ້.

ໃນ 4 ບັນຫາດັ່ງກ່າວຂ້າງເທິງນີ້ ມັນແມ່ນລັກສະນະແລະ ຈຸດພິເສດຂອງຊົນຊັ້ນກຳມະກອນ ທີ່ແປກຕ່າງກັບຊົນຊັ້ນອື່ນໆ. ພວກເຮົາສ້າງຕົນເອງໄດ້ຕາມ 4 ບັນຫານີ້ແມ່ນພວກເຮົາມີທັດສະນະຊົນຊັ້ນອັນຖືກຕ້ອງ, ຈາກນັ້ນພວກເຮົາ ຈຶ່ງມີບ່ອນຢືນ ເພື່ອສັງເກດຕີລາຄາ ສະພາບ

ການທີ່ເກີດຂຶ້ນ ໃນສັງຄົມໃຫ້ຖືກຕ້ອງ ແລະ ເຫມາະສົມໄດ້.

ສະຫລຸບຄວາມວ່າບັນດາບັນຫາທິດສະດີກ່ຽວກັບຊົນຊັ້ນແລະການຕໍ່ສູ້ຊົນຊັ້ນນັ້ນເປັນພື້ນຖານຊ່ວຍໃຫ້ພວກເຮົາຮັບຮູ້ຢ່າງຈະແຈ້ງທາດແທ້ ແລະ ບໍ່ເກີດຂອງການກົດຂີ່ຂູດຮີດທາງຊົນຊັ້ນ ; ພ້ອມກັບນັ້ນມັນກໍ່ຊ່ວຍໃຫ້ເຫັນແຈ້ງຕົ້ນຈຸດຫມາຍ ແລະ ອຸດົມຄະຕິຕໍ່ສູ້ຊົນຊັ້ນແລະເສັ້ນທາງເດີນເພື່ອໄປເຖິງສັງຄົມທີ່ບໍ່ມີຊົນຊັ້ນ, ບໍ່ມີຄົນຂູດຮີດຄົນເຊິ່ງແມ່ນຄວາມປາຖະຫນາອັນສູງສົ່ງຂອງພວກເຮົາ ເພາະວ່າປະຈຸບັນນີ້ການປະຕິວັດຂອງພວກເຮົາພວມຢູ່ໃນໄລຍະເຣັດການປະຕິວັດຊາດປະຊາທິປະໄຕຫນ້າທີ່ອັນຕົ້ນຕໍ ສະເພາະຫນ້າຂອງພວກເຮົາ ແມ່ນຕີເອົາຊະນະຈັກກະພັດອາເມລິກາຜູ້ຮຸກຮານ. ບັນດາບັນຫາທິດສະດີດັ່ງກ່າວນັ້ນມັນໄດ້ເບີກທາງອັນສະຫວ່າງແຈ້ງ ໃຫ້ພວກເຮົາ ຮັບຮູ້ເນື້ອແທ້ຂອງການຕໍ່ສູ້ຕ້ານອາເມລິກາ ແລະລູກມືໃນປະຈຸບັນນີ້.

ຄວາມຮັບຮູ້ນັ້ນມັນຈະຊ່ວຍໃຫ້ພວກເຮົາເຝິກຝົນ ທັດສະນະຫລັກຫມັ້ນຂອງຊົນຊັ້ນກຳມະກອນໄດ້ດີກວ່າເກົ່າ.

ຕອນທີ່ ໓

## ທັດສະນະມະຫາຊົນ

ພວກເຮົາຮັບຮູ້ບົດບາດຂອງແຮງງານ; ຮັບຮູ້ບໍ່ເກີດຂອງຊົນຊັ້ນແລະການຕໍ່ສູ້ຊົນຊັ້ນແລ້ວ, ພວກເຮົາຍັງຕ້ອງຮັບຮູ້ບົດບາດຂອງມະຫາຊົນໃນປະຫວັດສາດອີກ ເພື່ອວາງທັດສະນະຂອງເຮົາຕໍ່ມະຫາຊົນໃຫ້ຖືກຕ້ອງ, ແລະພ້ອມກັນນັ້ນກໍເພື່ອຮັບຮູ້ໃຫ້ຖືກຕ້ອງກ່ຽວກັບບົດບາດຂອງບຸກຄົນຂອງວິລະຊົນແລະຂອງຜູ້ນຳທີ່ດີ, ມີປັນຍາສາມາດປະກອບສ່ວນເຂົ້າໃນການສ້າງປະຫວັດສາດຂອງສັງຄົມ.

### ໑. ມະຫາຊົນແມ່ນໃຜ ແລະມີບົດບາດສຳຄັນຄືແນວໃດ?

1. ມະຫາຊົນແມ່ນມີໃຜແດ່?

ມະຫາຊົນແມ່ນປະກອບດ້ວຍຫລາຍຊົນຊັ້ນແລະຊັ້ນຄົນທີ່ຖືກກົດຂີ່ຂູດຮີດ, ບໍ່ມີຖານະແລະສິດສຽງຢູ່ໃນການປົກຄອງ ສັງຄົມເປັນຕົ້ນແມ່ນປວງຊົນຜູ້ອອກແຮງງານບັນດາ

ຊົນຊາດ. ມະຫາຊົນໃນແຕ່ລະໄລຍະປະຫວັດສາດມີການແປກຕ່າງກັນຄື:

– ໃນສັງຄົມຂ້າທາດ, ມະຫາຊົນແມ່ນຈຳນວນຄົນຫລວງຫລາຍທີ່ເປັນຂ້າທາດ.ໃນສັງຄົມສັກດີນາ, ມະຫາຊົນແມ່ນຊາວໄຮ່ນາ ແລະ ພວກວິຊາຊ່າງຫັດຖະກຳຕ່າງໆອີກ. ໃນລະບອບສັງຄົມນາຍທຶນ, ມະຫາຊົນແມ່ນຊົນຊັ້ນກຳມະກອນຊາວໄຮ່ນາ ແລະ ຜູ້ອອກແຮງດ້ວຍການ ແລະ ມັນສະໝອງອື່ນໆທີ່ຖືກກົດຂີ່ຂູດຮີດ.

ສະນັ້ນ, ໃນສັງຄົມທີ່ມີຊົນຊັ້ນປໍລະປັກກັນນັ້ນມະຫາຊົນແມ່ນຈຳນວນຫລວງຫລາຍ ແຕ່ສ່ວນມາກແມ່ນກຳລັງພື້ນຖານຂອງການຜະລິດທີ່ລ້ຽງດູສັງຄົມ ແຕ່ລະສະໄໝ: ມະຫາຊົນບໍ່ມີຄວາມໝາຍວ່າ ແມ່ນພົນລະເມືອງທົ່ວໄປ. ມະຫາຊົນສ່ວນຫລວງຫລາຍດັ່ງກ່າວນັ້ນລ້ວນແຕ່ຖືກເຈົ້າທາດ, ສັກດີນາຫລືນາຍທຶນຂູດຮີດ. ສ່ວນພວກເຈົ້າທາດ, ສັກດີນາ, ນາຍທຶນນັ້ນບໍ່ເອີ້ນເປັນມະຫາຊົນໄດ້ເພາະແມ່ນກຳລັງທີ່ເປັນປໍລະປັກກັບມະຫາຊົນ,ຝືນຕໍ່ສິດຜົນປະໂຫຍດຂອງມະຫາຊົນ, ເປັນສັດຕູຂອງມະຫາຊົນ ຕະຫລອດການ.

- ເວົ້າສະເພາະປູ່ໃນປະເທດລາວເຮົາ ໃນປະຈຸບັນນີ້ມະຫາຊົນ ມີໃນແດ່?

ປະຈຸບັນນີ້ພວກເຮົາພວມອອກແຮງເຮັດການປະຕິວັດຊາດປະຊາທິປະໄຕ. ສັດຕູຂອງຊາດເຮົາແມ່ນຈັກກະພັດອາເມລິກາແລະພວກປະຕິການກຳອຳນາດທີ່ເປັນຕີນມືໃຫ້ຈັກກະພັດເຊິ່ງບໍ່ແມ່ນມະຫາຊົນ. ມະຫາຊົນຂອງພວກເຮົາແທ້ ແມ່ນປວງປະຊາຊົນຜູ້ທີ່ອອກແຮງງານບັນດາຊົນຊາດເວົ້າທົ່ວໄປຄື : ຊາວໄຮ່ນາ, ກຳມະກອນແລະຜູ້ອອກແຮງງານດ້ວຍກາຍແລະມັນສະໝອງອື່ນໆ; ແຕ່ໃນນັ້ນຜູ້ທີ່ເປັນຫລັກແຫລ່ງໃຫ້ແກ່ມະຫາຊົນແມ່ນຊາວໄຮ່ນາ, ກຳມະກອນທີ່ເປັນກຳລັງຫລວງໃຫ້ແກ່ການປະຕິວັດ.

ແຕ່ເວລານີ້ ພວກເຮົາພວມຕໍ່ສູ້ ເພື່ອສັນຕິພາບເປັນກາງອັນແນໃສ່ເພີ່ມມິດ. ລົດຜ່ອນສັດຕູໃຫ້ມະຫາຊົນພື້ນຖານຂອງພວກເຮົາ, ແນວລາວຮັກຊາດຈຶ່ງໄດ້ມີນະໂຍບາຍເປີດກ້ວາງວົງສາມັກຄີເຕົ້າໂຮມທຸກກຳລັງ, ທຸກພັກຝ່າຍແລະບຸກຄົນທີ່ຮັກຊາດກ້າວໜ້າ, ມັກສັນຕິພາບອັນແທ້ຈິງເຂົ້າປູ່ໃນແນວໂຮມເອກະພາບແຫ່ງຊາດ ເພື່ອສຸມປາຍຫອກໃສ່ຈັກກະພັດອາເມລິກາ ແລະ ຕີນມືຂອງມັນທີ່ບໍ່

ແມ່ນມະຫາຊົນຂອງຊາດ. ສະນັ້ນພວກເຮົາຈຶ່ງຕ້ອງເຂົ້າໃຈໃຫ້ຈະແຈ້ງກ່ຽວກັບບັນຫາມະຫາຊົນນັ້ນ ເພື່ອບໍ່ໃຫ້ເຂົ້າໃຈປົນເປລະຫວ່າງ ມະຫາຊົນອັນເປັນພື້ນຖານກັບພົນລະເມືອງເວົ້າທົ່ວໄປ,ພ້ອມກັນນັ້ນກໍເພື່ອຊ່ວຍໃຫ້ພວກເຮົາກຳແໜ້ນນະໂຍບາຍ· ສາມັກຄີເຕົ້າໂຮມກຳລັງມະຫາຊົນຂອງຊາດ.

2. ມະຫາຊົນມີບົດບາດສຳຄັນແນວໃດຢູ່ໃນປະຫວັດສາດ?

ເມື່ອເວົ້າເຖິງປະຫວັດສາດແມ່ນເວົ້າເຖິງບົດບາດຂອງມະຫາຊົນໃນປະຫວັດສາດນັ້ນຈຶ່ງແມ່ນທັດສະນະອັນເປັນພື້ນຖານຂອງມວນມະນຸດທີ່ຢູ່ໃນສັງຄົມຢ່າງຖືກຕ້ອງ.

ເວົ້າເຖິງທັດສະນະກ່ຽວກັບບົດບາດ ຂອງມະຫາຊົນໃນປະຫວັດສາດນັ້ນ, ແຕ່ກ່ອນມາເຖິງປະຈຸບັນນີ້ເວົ້າລວມແລ້ວແມ່ນມີສອງທັດສະນະແປກຕ່າງກັນ. ເຫດຜົນກໍຄືໃນລະບອບສັງຄົມທີ່ມີຊົນຊັ້ນນັ້ນ, ແຕ່ຊົນຊັ້ນຈະເບິ່ງແລະຕີລາຄາແນວໃດກໍຕາມ, ຄົນເຮົາເຖິງຢູ່ໃນທັດສະນະແລະສິດຜົນປະໂຫຍດຂອງຊົນຊັ້ນຕົນເພື່ອສັງເກດແລະຕີລາຄາບັນຫາ. ດັ່ງນັ້ນກ່ຽວກັບບັນຫາຮັບຮູ້ບົດບາດຂອງມະຫາຊົນນັ້ນ, ຄົນທີ່ຢູ່ໃນຊົນຊັ້ນຕ່າງກັນກໍ ມີທັດສະນະແປກຕ່າງ

ກັນ, ພິກປີ້ນກັບຄື:

– ບັນດາຊົນຊັ້ນຂູດຮີດ, ທັດສະນະຂອງພວກເຂົາ ແມ່ນດູຖູກໝິ່ນປະໝາດປຽບປ່ຳບົດບາດ ຂອງມະຫາຊົນ ລົງຢ່າງໂຫດຮ້າຍປ່າເຖື່ອນທີ່ສຸດ;ເຂົາຖືວ່າມະຫາຊົນແມ່ນ ໂງ່ຈ້າບໍ່ຮູ້ຫຍັງໝົດ ແລະ ບໍ່ມີບົດບາດຫຍັງໝົດໃນປະ ຫວັດສາດ. ສ່ວນຜູ້ທີ່ສ້າງປະຫວັດສາດນັ້ນ, ພວກເຂົາຖື ວ່າແມ່ນເຈົ້າຟ້າມະຫາກະສັດຫລືບຸກຄົນຜູ້ເກັ່ງກ້າ ແລະ ວິລະຊົນຜູ້ມີບຸນວາດສະໜາ, ບັງປູ່ເໜືອເກົ້າເໜືອກະ ນ່ອມປະຊາຊົນເປັນຜູ້ສ້າງປະຫວັດສາດ. ສ່ວນມະຫາຊົນ ຈຳນວນຫລວງຫລາຍນັ້ນ ພຽງແຕ່ເປັນຜູ້ປະຕິບັດຕາມ ເທົ່ານັ້ນ. ນອກຈາກນັ້ນພວກມັນຍັງບັງຄັບໃຫ້ມະຫາຊົນ ນົບໄຫວ້ ບອມນອບກາຍຖວາຍຊີວິດ ໃຫ້ພວກມັນກົດຂີ່ຂູດ ຮີດຕາມໃຈມັກຂອງພວກມັນ.ຄວາມຈິງແລ້ວມັນຕັ້ງແມ່ນ ຊົນຊັ້ນຂູດຮີດນັ້ນເອງ ເປັນຜູ້ຂັດຂວາງໜ່ວງໜ່ຽວຄວາມ ກ້າວໜ້າຂະຫຍາຍຕົວຂອງປະຫວັດສາດໃນສັງຄົມ.

ເປັນຫຍັງ ທັດສະນະ ບັນດາຊົນຊັ້ນຂູດຮີດຈຶ່ງເປັນຄື ແນວນັ້ນ ? ມັນເປັນແນວນັ້ນກໍຍ້ອນວ່າສິດປະໂຫຍດຂອງ ບັນດາຊົນຊັ້ນຂູດຮີດໃດໆກໍລ້ວນແຕ່ກົງກັນຂ້າມກັບສິດປະ

ໂຫຍດຂອງມະຫາຊົນ. ດັ່ງນັ້ນທັດສະນະຂອງພວກນີ້ຈຶ່ງລ້ວນແຕ່ພິກປີ້ນຄວາມຈິງໂດຍມີຈຸດປະສົງຢາກໃຫ້ມະຫາຊົນເຊື່ອຖືງົມງວາຍ ແລະປິດຫູບັງຕາມະຫາຊົນບໍ່ໃຫ້ເຫັນບົດບາດ ແລະກຳລັງແຮງອັນໃຫຍ່ຍິ່ງຂອງຕົນແລ້ວໃຫ້ມະຫາຊົນຍອມກົ້ມຫົວໃຫ້ພວກມັນຂູດຮີດຂົ່ມເຫັງ ແລະດູດກິນເລືອດເນື້ອເຫື່ອແຮງຂອງມະຫາຊົນ ເພື່ອເອົາໄປສ້າງຄວາມຮັ່ງມີລ້ຳລວຍ ຢ່າງໄຮ້ມະນຸດສະທຳ ໃຫ້ແຕ່ຊົນຊັ້ນຂອງພວກມັນ; ແນວຄິດຂອງພວກນີ້ລວມທັງໝົດແມ່ນເພື່ອສິດຜົນປະໂຫຍດສ່ວນຕົວ. ແຕ່ເບິ່ງເລິກເຂົ້າໄປແລ້ວພວກມັນກໍ່ອາດຈະຮັບຮູ້ກ່ຽວກັບບົດບາດ ຂອງມະຫາຊົນໃນປະຫວັດສາດນີ້ສ່ວນໃດສ່ວນໜຶ່ງ ແຕ່ພວກມັນຫາກບໍ່ກ້າໄຈ້ແຍກໃຫ້ຖືກຕ້ອງໄດ້, ເພາະວ່າຖ້າໄຈ້ແຍກຢ່າງຖືກຕ້ອງ ມັນຈະນຳຄວາມເສຍຫາຍ ມາໃຫ້ແກ່ສິດປະໂຫຍດຂອງພວກມັນ.

ນັກປະຕິວັດພວກເຮົາຕ້ອງວິພາກວິຈານແລະລົບລ້າງທັດສະນະຂອງພວກປະຕິການດັ່ງກ່າວນັ້ນໃຫ້ໄດ້ຢ່າງສິ້ນເຊີງ.

ທັດສະນະ ຂອງຊົນຊັ້ນກຳມະກອນກ່ຽວກັບບົດບາດ

ຂອງມະຫາຊົນ. ໂດຍເອົາລັດທິມາກ-ເລນິນເປັນພື້ນຖານແຫ່ງແນວຄິດຊົນຊັ້ນຂອງຕົນ, ໄດ້ຈຳແນກໄຈ້ແຍກຢ່າງມີວິທະຍາສາດກ່ຽວກັບບົດບາດຂອງມະຫາຊົນ ແລະ ເຫັນໄດ້ຢ່າງຈະແຈ້ງວ່າ : ມະຫາຊົນເປັນຜູ້ສ້າງປະຫວັດສາດ ແລະເປັນກຳລັງທີ່ຕັດສິນຊີ້ຂາດການຂະຫຍາຍຕົວຂອງສັງຄົມ.

ພວກເຮົາເອົາເຫດຜົນອັນໃດມາຢັ້ງຢືນ ເພື່ອໃຫ້ເຫັນຄວາມຈິງ? ບໍ່ວ່າສັງຄົມສະໄໝໃດ, ໃນຕົວຈິງແມ່ນມະຫາຊົນເປັນຜູ້ປະດິດສ້າງປະຫວັດສາດແລະຊຸກດັນໃຫ້ສັງຄົມກ້າວໜ້າຂະຫຍາຍຕົວ ຈາກລະບອບອັນຫລ້າຫລັງໄປຫາລະບອບອັນກ້າວໜ້າຈະເລີນຮຸ່ງເຮືອງ. ຫລັກຖານຕົວຈິງກໍຄື:

1. ມະຫາຊົນເປັນຜູ້ປະດິດໂດຍກົງບັນດາວັດຖຸສິ່ງຂອງທີ່ເປັນມູນຖານໃຫ້ແກ່ຊີວິດຂອງສັງຄົມ. ບໍ່ວ່າສັງຄົມໃດກໍຕາມຖ້າຢາກຢືນຍົງ ຄົງຕົວໄດ້ ກໍຕ້ອງມີວັດຖຸສິ່ງຂອງຕ່າງໆ ເຊັ່ນ: ເຂົ້າປາອາຫານ, ເຄື່ອງໃຊ້ຂອງສຽ, ຍານພາຫານະ, ສະຖານບ້ານເຮືອນ ແລະ ອື່ນໆອີກ. ທຸກຢ່າງທີ່ຄົນເຮົາໃຊ້ເຂົ້າໃນຊີວິດການເປັນຢູ່ ແລະປະກອບເຂົ້າເປັນ

ເຄື່ອງມືໃນການຜະລິດທີ່ເອີ້ນວ່າ ຜະລິດພັນຂອງສັງຄົມ
ສິ່ງເຫລົ່ານັ້ນບໍ່ວ່າຢູ່ໃນສັງຄົມໃດກໍລ້ວນແຕ່ແມ່ນ ມະຫາ
ຊົນເປັນຜູ້ປະດິດອອກ.

ຕົວຈິງຢູ່ໃນລາວເຮົາກໍບົ່ງຊີ້ໃຫ້ເຫັນແຈ້ງວ່າບັນດາວັດ
ຖຸບູຮານທີ່ມີຊື່ສຽງແລະສວຍງາມເຊັ່ນ: ( ທາດຫລວງ, ຫໍ,
ພະແກ້ວຢູ່ວຽງຈັນ ) ( ວັດພູຈຳປາສັກ, ຕະຫລອດຮອດ
ຫໍໂຮງເຈົ້າຊີວິດຢູ່ນັ້ນ) ບໍ່ແມ່ນວ່າມີຂຶ້ນຍ້ອນເຈົ້າຟ້າມະ
ຫາກະສັດຜູ້ມີລິດເດດເກັ່ງກ້າຄືຊາ ຜູ້ໃດຜູ້ໜຶ່ງເປັນຜູ້ສ້າງ
ຂຶ້ນຄືຄວາມຕົວະຍົວະຫລອກລວງຂອງຊົນຊັ້ນຂູດຮີດເວົ້າ
ມາ. ຕົວຈິງແລ້ວມັນແມ່ນ ເຫື່ອແຮງຂອງມະຫາຊົນຄົນ
ລາວນັ້ນເອງເປັນຜູ້ສ້າງຂຶ້ນ. ຖ້າຫາກບໍ່ມີມະຫາຊົນອອກ
ເຫື່ອເຫແຮງສ້າງສາ, ບັນດາວັດຖຸບູຮານເຫລົ່ານັ້ນກໍບໍ່ມີ
ຂຶ້ນໄດ້.

ບົນເສັ້ນທາງແຫ່ງການຜະລິດ, ມະຫາຊົນຍັງໄດ້ຖອດ
ບົດຮຽນໂດຍໃຊ້ຫົວຄິດປະດິດສ້າງຂອງເຂົາເຈົ້າ, ໄດ້ເຮັດ
ໃຫ້ວັດຖຸສິ່ງຂອງທີ່ຜະລິດອອກ ນັບມື້ຫລາຍ ແລະດີຂຶ້ນ
ກວ່າເກົ່າ, ທັງເຮັດໃຫ້ການຜະລິດແລະເຕັກນິກໃນການຜະ
ລິດອອກກ້າວໜ້າຂະຫຍາຍຕົວຢູ່ເລື້ອຍໆ ມາ. ເຖິງປະຈຸ

ບັດນີ້ຄົນເຮົາໄດ້ຜະລິດເຄື່ອງຈັກ ເຄື່ອງບິນຍານພາຫານະ ຮັບໃຊ້ດ້ານຕ່າງໆເຊັ່ນ: ລົດຍົນ, ກຳປັ່ນການຮັບໃຊ້ການລຳລຽງຂົນສົ່ງ, ໂທລະເລກໂທລະສັບ ເພື່ອໃຊ້ຕິດຕໍ່ທາງໄກ ແລະເຄື່ອງທີ່ທັນສະໄໝອື່ນໆ ຕະຫລອດດາວທຽມ, ຍົນເຫາະຈັກກະວານທີ່ໜ້າງຶດງໍ້ອັດສະຈັນ, ທັງໝົດເຫລົ່ານັ້ນກໍລ້ວນແຕ່ແມ່ນຜົນງານຕົວຈິງ ທີ່ອອກມາຈາກເຫື່ອແຮງຂອງມະຫາຊົນທັງໝົດ ; ເຂົາເຈົ້າໄດ້ຄົ້ນຄິດປະດິດສ້າງຂຶ້ນເພື່ອຮັບໃຊ້ຄວາມຮຽກຮ້ອງຕ້ອງການຂອງສັງຄົມນັ້ນແມ່ນເຮັດໃຫ້ປະຫວັດສາດຂະຫຍາຍຕົວ.

ນັບນີ້ເຫດຜົນອັນຈະແຈ້ງແລ້ວວ່າ: ສັງຄົມມະນຸດຍືນຍົງຄົງຕົວ ແລະ ຂະຫຍາຍຕົວໄດ້ແມ່ນຍ້ອນກຳລັງອັນມະຫາສານຂອງມະຫາຊົນເປັນອັນຕັດສິນຊີ້ຂາດ. ບັນດາຊົນຊັ້ນກົດຂີ່ຂູດຮີດພຽງແຕ່ນັ່ງລ້ານອນດາງກັ້ງງກ່ງກິນແຮງງານຂອງຜູ້ອື່ນເທົ່ານັ້ນ.

**໒. ມະຫາຊົນເປັນຜູ້ປະດິດສ້າງຊີວິດ ທາງດ້ານ ຈິດໃຈຂອງສັງຄົມມະນຸດອີກ.**

ດ້ານແນວຄິດຈິດໃຈຂອງສັງຄົມກໍ່ແມ່ນມະຫາຊົນເອງເປັນຜູ້ສ້າງຂຶ້ນຄື: ການສຶກສາວັດທະນະທຳ, ສິລະປະວັນ

ບະຄະດີກໍບັນນື້ອຸດົມສົມບູນງົດງາມ, ເຮັດໃຫ້ຊີວິດຂອງສັງຄົມບັນນື້ສົດຊື່ນ. ມາເຖິງປະຈຸບັນນີ້, ບັນດາສິລະປະວັນນະຄະດີເຊັ່ນ: ຫນັງສື, ພາສາເວົ້າ, ແບບຟ້ອນ, ກອນລຳ, ທຳນອງເພງ, ເຄື່ອງເສບ, ເຄື່ອງສາຍ, ການວາດແຕ້ມ, ລວດລິງລາຍ, ປັ້ນຫລໍ່ກໍ່ສ້າງອື່ນໆ ທີ່ດີງາມແລະມີຄຸນປະໂຫຍດອັນສູງສົ່ງສຳລັບຮັບໃຊ້ຄົນເຮົາ, ຕະຫລອດຮອດລັດທິມາກ-ເລນິນ ກໍລ້ວນແຕ່ລວບລວມເອົາມາຈາກບົດຮຽນແຫ່ງການຕໍ່ສູ້ຕົວຈິງຂອງຊົນຊັ້ນກຳມະກອນແລະມະຫາຊົນໃນທົ່ວໂລກ, ບໍ່ແມ່ນທ່ານມາກເລນິນຫາກນັ່ງຄິດເອົາຜູ້ດຽວ. ຫລືລັດທິມາກ-ເລນິນນັ້ນ ຈະມີຄຸນປະໂຫຍດອັນກວ້າງຂວາງໃນສະເພາະໜ້າ ແລະຍາວນານກໍໄດ້ຕໍ່ເມື່ອມະຫາຊົນນຳເອົາໄປປະຕິບັດໃນຕົວຈິງອີກ.

ເລື່ອງທີ່ກ່າວຂ້າງບົນນີ້ ໄດ້ປັ້ງປືນໃຫ້ເຫັນແຈ້ງບົດບາດຂອງມະຫາຊົນໃນປະຫວັດສາດ. ແຕ່ພວກຊົນຊັ້ນຂູດຮີດຊ້ຳພັດປະຕິເສດບໍ່ຮັບຮູ້ບົດບາດຂອງມະຫາຊົນໃນດ້ານນີ້. ກົງກັນຂ້າມພວກມັນຍັງສ້າງຄວາມງົມງວາຍມືດມົນ, ວັດທະນະທຳອັນໂງ່ຈ້າເບື່ອເມົາຊີວິດສັງຄົມອີກຊ້ຳ.

### ໓. ມະຫາຊົນເປັນຜູ້ຕັດສິນທຸກຂະບວນການປະຕິວັດໃນສັງຄົມ.

ມະນຸດຢູ່ໃນໂລກນີ້ໄດ້ຜ່ານຈາກຄວາມຫລ້າຫລັງກ້າວໄປຫາຄວາມຈະເລີນກ້າວໜ້າໂດຍຜ່ານມາເຖິງ 5 ລະບອບສັງຄົມນັ້ນ ກໍລ້ວນແຕ່ຕ້ອງຜ່ານການຕໍ່ສູ້ ປະຕິວັດອັນດຸເດືອດສັບສົນເຊິງແມ່ນມະຫາຊົນເປັນຜູ້ເຮັດ.

ຕົວຢ່າງ: ການປະຕິວັດເດືອນ 10 ປີ 1917 ອັນຍິ່ງໃຫ່ຍຂອງໂຊວຽດສຳເລັດຜົນນັ້ນກໍແມ່ນ ປະຊາຊົນໂຊວຽດທັງປວງເປັນຜູ້ເຮັດ; ຄ້າຍສັງຄົມນິຍົມຂະຫຍາຍຕົວກ້ວາງຂວາງກາຍເປັນລະບົບໜຶ່ງ ທີ່ເຂັ້ມແຂງຂື້ນຢ່າງວ່ອງໄວນັ້ນແຮ່ງສະແດງໃຫ້ເຫັນບົດບາດອັນສຳຄັນ ຂອງມະຫາຊົນຢ່າງຈະແຈ້ງທີ່ສຸດ. ການປະຕິວັດປົດປ່ຽຊາດຂອງບັນດາປະເທດເມືອງຂື້ນ ແລະການຕໍ່ສູ້ຂອງປະຊາຊົນຜູ້ທີ່ຖືກກົດຂີ່ຂູດຮີດ ໃນບັນດາປະເທດຈັກກະພັດ ບາງທຶນເພື່ອຍາດເອົາໄຊຊະນະມາໄດ້ຢ່າງເບື້ອງນິດນັ້ນກໍແມ່ນພວມສະແດງໃຫ້ເຫັນບົດບາດ ແລະ ກຳລັງແຮງອັນມະຫາສານຂອງມະຫາຊົນ. ດ້ວຍເຫດນັ້ນຈຶ່ງເວົ້າໄດ້ວ່າມະຫາຊົນເປັນກຳລັງທີ່ຕັດສິນຊີ້ຂາດ ທຸກຂະບວນການປະຕິວັດ ໃນສັງຄົມມະນຸດ.

໔. ບົດບາດສຳຄັນຂອງມະຫາຊົນລາວເຮົາ:

ມະຫາຊົນຢູ່ໃນປະເທດລາວເຮົາກໍມີບົດບາດ ສຳຄັນທີ່ສຸດ ຕໍ່ການປະຕິວັດລາວເຮົາຄືກັນກັບ ບົດບາດຂອງມະຫາຊົນໃນໂລກ. ປະເທດເຮົາແມ່ນປະເທດຮັ່ງມີອຸດົມສົມບູນທາງຊັບໃນດິນສິນໃນນ້ຳ, ແຕ່ຫາກຫຍຸ້ງຍາກທີ່ສຸດໃນການສ້າງສາ,ບ້ອນພວກຕ່າງດ້າວຂົ່ມຂູ່ຮຸກຮານປຸ້ນສະດົມເອົາຊັບ ພະ ຍາກອນຂອງລາວທັງບີບກິນເລືອດເນື້ອຂອງຄົນລາວ.

ແຕ່ບ້ອນມະຫາຊົນເຮົາ ໄດ້ມີການຕໍ່ສູ້ຢ່າງດຸເດືອດ ທໍລະຫົດອົດທົນກັບທ່າມະຊາດ ແລະ ຕ້ານຢັນສັດຕູຈຶ່ງເຮັດໃຫ້ປະ ເທດ ຊາດຂອງພວກເຮົາຢືນຍົງຄົງຕົວໄດ້ມາຮອດປະຈຸບັນນີ້. ແຕ່ຢູ່ພາຍໃຕ້ການປົກຄອງ ຜະເດັດການຂອງຊົນຊັ້ນຂູດຮີດໃນເມື່ອກ່ອນ ພວກມັນໄດ້ປຽບຢ່ຳຢີ, ບິດເບືອນຄວາມຈິງກ່ຽວກັບບົດບາດຂອງມະຫາຊົນລາວເຮົາ ເຮັດໃຫ້ມະຫາຊົນ ຫລົງລືມ ບໍ່ສາມາດ ເຫັນກຳລັງແຮງ ແລະຄຸນງາມຄວາມດີຂອງຕົນ ໃນການສ້າງປະຫວັດສາດຂອງຊາດຕົນ.

ມາໃນປະຈຸບັນນີ້ຢູ່ໃຕ້ແສງສະຫວ່າງຂອງລັດທິມາກ–ເລນິນ, ພັກປະຕິວັດໄດ້ເຫັນແຈ້ງບົດບາດຂອງມະຫາຊົນ

ລາວເຮົາ ແລະ ຖືວ່າການປະຕິວັດແມ່ນໜ້າທີ່ອັນໜັກ ໜ່ວງຂອງມະຫາຊົນເພື່ອປົດປ່ຽຕົນເອງ, ແມ່ນບໍ່ມີສິງ ສັກສິດຫລື ວິລະຊົນຜູ້ເກັ່ງກ້າໃດໆໝົດ ຈະມີ ຄວາມສາ ມາດປົດປ່ຽມະຫາຊົນ ອອກຈາກການກົດຂີ່ຂູດຮີດໄດ້ນອກ ຈາກກຳລັງແຮງຂອງມະຫາຊົນ. ມະຫາຊົນຕ້ອງສາມັກ ຄີກັນເຂົ້າດ້ວຽຄວາມຕື່ນຕົວ, ຈັດຕັ້ງເປັນກຳລັງອັນແໜ້ນ ໜາຢູ່ໃຕ້ການນຳພາ ຂອງພັກປະຕິວັດທີ່ຖືລັດທິມາກ-ເລນິນອັນຖືກຕ້ອງຈິ່ງຈະສາມາດປົດປ່ຽຕົນເອງໄດ້.

ດັ່ງນັ້ນໃນພາກປະຕິບັດຕົວຈິງພັກໄດ້ນຳພາພວກເຮົາ ເຮັດການປະຕິວັດພາຽໃຕ້ຄຳຂວັນທີ່ວ່າ : ((ສາມັກຄີປວງ ຊົນທັງຊາດ ຕໍ່ສູ້ລຳບາກຍາວນານ ແລະ ເພິ່ງກຳລັງຕົນ ເອງ)) ເຊິ່ງພວກເຮົາໄດ້ດຳເນີນມາຕະຫລອດ 20 ກ່ວາປີ. ການ ຕໍ່ ສູ້ ຂອງ ພວກ ເຮົາ ຍາດ ເອົາ ໄດ້ ໄຊຊະນະອັນໃຫ່ຽ ຫລວງລຽນຕິດ ແລະ ພວມມີເງື່ອນໄຂເພື່ອຈະຍາດເອົາ ໄຊຊະນະອັນສຸດທ້າຽຈາກສັດຕູຢ່າງເດັດຂາດ

ສາຽເຫດອັນຕົ້ນຕໍ ທີ່ຈະເຮັດໃຫ້ການປະຕິວັດສຳເລັດ ຜົນໄດ້ກໍແມ່ນກຳລັງຕົວຈິງຂອງມະຫາຊົນທີ່ມີຄວາມຮູ້ສຶກ ຕື່ນຕົວຢູ່ໃຕ້ການຊີ້ນຳຂອງພັກ. ສະນັ້ນຖ້າຢາກມີກຳລັງ

ແຮງອັນມະຫາສານນັ້ນ ພວກເຮົາຈະຕ້ອງອີງໃສ່ມະຫາຊົນ; ກົງກັນຂ້າມຖ້າບໍ່ອີງໃສ່ກຳລັງມະຫາຊົນແລ້ວເຖິງວ່າຈະຍົກຍໍຕົນເອງຂຶ້ນວ່າເກັ່ງກ້າລືຊາປານໃດກໍຕາມ, ມັນກໍບໍ່ຕ່າງຫຍັງກັບຮູບປັ້ນສົມມຸດຂຶ້ນລ້າໆເທົ່ານັ້ນ. ເລື່ອງນີ້ໃນປະຫວັດສາດຂອງລາວເຮົາກໍໄດ້ຍົກໃຫ້ເຫັນຕົວຈິງ ຈະແຈ້ງທີ່ສຸດ.

ຕົວຢ່າງ: ສະໄຫມຈັກກະພັດຝະລັ່ງເຂົ້າມາຮຸກຮານລາວຄັ້ງທຳອິດ, ພວກກຳອຳນາດການປົກຄອງເກົ່າໄດ້ຢ້ານກົວຕໍ່ອິດທິພົນຂອງຝະລັ່ງ ແລ້ວຍອມມອບດິນອັນແສນຮັກຂອງພວກເຮົາ ໃຫ້ຝະລັ່ງປົກຄອງຕະຫລອດຮອດ 60 ກ່ວາປີຢ່າງງ່າງດາງ. ແຕ່ປະຊາຊົນລາວເຮົາອົດທົນຕໍ່ການກົດຂີ່ຂູດຮີດຂອງພວກຝະລັ່ງບໍ່ໄດ້. ເຖິງວ່າຈະມີແຕ່ສອງຝາມືເປົ່າກໍຕັດສິນໃຈ ລຸກຂຶ້ນຕໍ່ສູ້ຕ້ານພວກຝະລັ່ງ ຍາດເອົາເອກະລາດຄືນມາໄດ້. ແຕ່ບໍ່ນານເທົ່າໃດຈັກກະພັດອາເມລິກາພັດເຂົ້າມາແທນທີ່ຝະລັ່ງຮຸກຮານລາວເຮົາອີກ. ພວກກຳອຳນາດປົກຄອງວຽງຈັນພັດກົ້ມຫົວຍອມຈ່ຳນົນ ຕໍ່ຈັກກະພັດອາເມລິກາອີກ. ປະ ຊາ ຊົນ ເຮົາ ແຫ່ງ ເຫັນແຈ້ງຄວາມໂງ່ຈ້າຂອງພວກກຳອຳນາດປົກຄອງວຽງຈັນ: ແຕ່

ປະຊາຊົນບໍ່ຍອມກົ້ມຫົວບໍ່ຍອມປະຖິ້ມປະເທດຊາດ ແລະ ບໍ່ຍອມເປັນຂ້ອຍຂ້າໃຫ້ແກ່ພວກມັນ, ໄດ້ສືບຕໍ່ຂະຫຍາຍມູນເຊື້ອອົງອາດກ້າຫານ ຕັດສິນໃຈຕີອາເມລິກາຍາດເອົາໄຊຊະນະເປັນຂັ້ນໆ ມາຮອດປະຈຸບັນນີ້. ກຳລັງຂອງມະຫາຊົນນັບມື້ນັບເຂັ້ມແຂງແຮງກ້າຂຶ້ນ ແລະ ໄດ້ສ້າງຄວາມອາດສາມາດທີ່ຈະຕີໃຫ້ໄຊຊະນະສົມບູນ ຈາກອາເມລິກາ ແລະ ລູກມືເພື່ອສ້າງປະເທດໃຫ້ຮັ່ງມີເຂັ້ມແຂງ.

ໃນຂະບວນການຕໍ່ສູ້ທີ່ຍາດເອົາໄຊຊະນະມາ ໄດ້ດັ່ງກ່າວນັ້ນຕົວ ຈິງແມ່ນຍ້ອນກຳລັງຂອງມະຫາຊົນ, ພະນັກງານ, ກອງທະຫານແລະພາລະກອນທີ່ຮັບໃຊ້ໃນດ້ານຕ່າງໆທັງຫມົດເຫລົ່ານັ້ນກໍແມ່ນມາຈາກມະຫາຊົນ. ຮູບແບບຂະບວນການຕໍ່ສູ້ທາງການເມືອງ, ຍຸດທະວິທີສູ້ຮົບ ແລະການຫມູນໃຊ້ອາວຸດພື້ນເມືອງເຊັ່ນ: ຂວາກ, ຫ່າວ, ຫລາວແຫລມກໍແມ່ນມະຫາຊົນເປັນຜູ້ປະດິດສ້າງຂຶ້ນ ; ສະບຽງອາຫານ. ເຄື່ອງນຸ່ງຂອງໃຊ້ລ້ຽງດູກອງທັບ ແລະ ພະນັກງານກໍແມ່ນອອກມາຈາກມະຫາຊົນ.

ໃນການປັບປຸງກໍ່ສ້າງປະເທດຊາດເຊັ່ນ: ຂະຫຍາຍການເພີ່ມພູນຜະລິດຜົນ, ສ້າງເສດຖະກິດການເງິນ, ຂະ

ຫຍາງການສຶກສາວັດທະນະທຳລົບລ້າງຄວາມບໍ່ຮູ້ຫນັງສື, ການປັບປຸງກໍ່ສ້າງອຳນາດການປົກຄອງ ປະຊາທິປະໄຕ ແລະ ອື່ນ ໆກໍລ້ວນແຕ່ຕ້ອງອີງໃສ່ກຳລັງຂອງມະຫາຊົນ. ເລື່ອງທີ່ຍົກມາເປັນຕົວຢ່າງເຫົ່ງ ນີ້ກໍລ້ວນແຕ່ແມ່ນຕົວຈິງ ທີ່ມະຫາຊົນລາວ ເຮົາໄດ້ສ້າງຂຶ້ນ ໃນປະຫວັດສາດແຫ່ງ ຊາດ.

ລວມຄວາມວ່າ ມະ ຫາ ຊົນ ລາວ ເປັນກຳລັງມະຫາ ສານຂອງການປະຕິວັດ ແລະ ທັງ ເປັນ ບໍ່ເກີດແຫ່ງວັດຖຸ ແລະ ຈິດໃຈຂອງສັງຄົມລາວ; ພວມມີບົດບາດອັນສະ ຫງ່າອົງອາດ ປະກອບສ່ວນເຂົ້າໃນການປະຕິວັດຂອງໂລກ ແລະ ການຂະຫຍາຍຕົວຂອງສັງຄົມມະນຸດ.

### ໔. ບົດບາດຂອງບຸກຄົນໃນປະຫວັດສາດ.

໑. ພວກເຮົາຕ້ອງຮັບຮູ້ແນວໃດຈຶ່ງຈະຖືກຕ້ອງກ່ຽວກັບບົດບາດ ຂອງບຸກຄົນ ?

ໃນເມື່ອພວກເຮົາເນັ້ນຫນັກເຖິງບົດບາດຂອງມະຫາຊົນ ດັ່ງເວົ້າມາເທົ່ງ ນີ້ກໍບໍ່ແມ່ນວ່າພວກເຮົາປະຕິເສດ ແລະ ເບິ່ງເບົາບົດບາດຂອງບຸກຄົນຫລືຜູ້ນຳອັນດີເລີດ ແລະວິລະ ຊົນຜູ້ເກັ່ງກ້າ, ເຊິ່ງພວກເຮົາກໍເຄີຍເຫັນຢູ່ໃນຂະບວນມະ

ຫາຊົນຄືກັນ.

ລັດທິມາກ–ເລນິນໄດ້ປັ້ງປືນວ່າ : ມະຫາຊົນເປັນຜູ້ປະດິດສ້າງປະຫວັດສາດ. ແຕ່ພ້ອມກັນນັ້ນກໍຕ້ອງໄຈ້ແຍກບົດບາດຂອງບຸກຄົນຢ່າງມີວິທະຍາສາດຄື : ບຸກຄົນບໍ່ເປັນຜູ້ຕັດສິນປະຫວັດສາດ, ແຕ່ບຸກຄົນຜູ້ນຳດີກໍມີຄຸນຄ່າສຳຄັນໃນການຂະຫຍາຍຕົວຂອງປະຫວັດສາດ.

ກ່ອນອື່ນຫມົດແມ່ນຕ້ອງ ໃຫ້ເຫັນກຳລັງແຮງອັນໃຫ່ຍຫລວງ ຂອງມະຫາຊົນແຕ່ໃນນັ້ນກໍຕ້ອງມີບຸກຄົນທີ່ສຳຄັນເປັນຫົວຫນ້ານຳພາມະຫາຊົນ ; ບໍ່ວ່າຊາດໃດ, ປະເທດໃດທ້ອງຖິ່ນໃດຫລືຂະບວນການອັນໃດກໍຄືກັນ, ຖ້າບໍ່ມີບຸກຄົນນຳຫນ້າເປັນຕົວແທນໃຫ້ແກ່ຈິດໃຈ ແລະ ຄວາມມຸ່ງມາດປາຖະຫນາຂອງມະຫາຊົນ, ເປັນຫົວຫນ້ານຳພາມະຫາຊົນນຳພາຂະບວນການແລ້ວ, ແມ່ນຈະເຮັດໃຫ້ຂະບວນການເຄື່ອນໄຫວຂອງມະຫາຊົນ ຖືກປຸວງ ຢ່ອນງບໍ່ອາດຈະເຂັ້ມແຂງແຮງກ້າຂຶ້ນໄດ້. ເມື່ອປະຫວັດສາດປະເທດຊາດໄດ້ວາງຫນ້າທີ່ອັນໃຫ່ຍຫລວງ ສະເພາະ ຫນ້າທີ່ ຈະ ຕ້ອງໃຫ້ແກ້ໄຂແລ້ວ,ບົດບາດຂອງບຸກຄົນຍິ່ງເປັນສິ່ງຕ້ອງການ.

ແຕ່ພວກເຮົາບໍ່ຄວນຍົກບຸກຄົນຂຶ້ນຄືເຈົ້າຟ້າ ເທວະດາ

ຫລືວ່າບຸກຄົນເປັນຜູ້ຕັດສິນປະຫວັດສາດ, ຕັດສິນໂຊກຊາ ຕາຂອງຊາດໃດຊາດຫນຶ່ງ. ຄືພວກເຮົາໄດ້ໃຈ້ແຍກປູ່ຂ້າງ ເທິງນັ້ນການກ້າວຫນ້າ ຂະຫຍາຍຕົວຂອງປະຫວັດສາດບໍ່ ແມ່ນເປັນໄປຍ້ອນແນວຄິດ ແລະ ຄວາມມັກຂອງບຸກຄົນ ທີ່ເປັນວິລະຊົນຕັດສິນ, ແຕ່ມັນແມ່ນເປັນໄປຍ້ອນການຂະ ຫຍາຍຕົວຂອງການຜະລິດ ແລະ ການຕໍ່ສູ້ຊົນຊັ້ນຂອງມະ ຫາຊົນເປັນຜູ້ຕັດສິນ. ເພາະສະນັ້ນມັນຈຶ່ງແມ່ນປະຫວັດ ສາດສ້າງວິລະຊົນຂຶ້ນ ບໍ່ແມ່ນວິລະຊົນສ້າງປະຫວັດສາດ. ຖ້າພວກເຮົາໄປຮັບຮູ້ວ່າ ບຸກຄົນສ້າງປະຫວັດສາດແມ່ນບໍ່ ມີເຫດຜົນຫລືເງື່ອນໄຂຈະປັ້ງປື້ນ, ເພາະວ່າມັນແມ່ນຜ່ານ ຂະບວນການສ້າງປະຫວັດສາດຂອງມະຫາຊົນຈຶ່ງເກີດມີ ບຸກຄົນວິລະຊົນໄດ້.

ຕົວຢ່າງປູ່ໃນປະເທດລາວເຮົາ ເມື່ອກ່ອນນີ້ແມ່ນບໍ່ມີ ຜູ້ນຳ, ແລະ ບໍ່ມີວິລະຊົນຜູ້ມີຄວາມສາມາດ ອົງອາດກ້າ ຫານ. ໄລຍະທີ່ຂະບວນການປະຕິວັດໄດ້ຜ່ານ 20 ກ່ວາປີ ມານີ້ ແມ່ນໄລຍະແຫ່ງການສ້າງປະຫວັດສາດອັນຫນຶ່ງ; ໃນໄລຍະນີ້ຈຶ່ງເກີດມີຜູ້ນຳດີ ແລະ ມີວິລະຊົນຜູ້ປະເສີດຂຶ້ນ ນັບມື້ນັບຫລາຍ.

ດັ້ງນັ້ນພວກເຮົາຈິ່ງຄວນຕ້ານແນວຄິດ ເຊື່ອຖືບຸກຄົນ ຢ່າງງົມງວາຍຫລືວ່າແບບ "ເສນາຫມາກຂີ້ກາ" ພ້ອມ ກັນ ນັ້ນ ກໍ ຕ້ອງ ຕ້ານ ແນວຄິດບໍ່ນັບຖືບົດບາດຂອງຜູ້ນຳທີ່ ມີຜົນງານໃຫ້ແກ່ຊາດ ແລະ ບຸກຄົນທີ່ດີເດັ່ນກ້າວຫນ້າ ນັ້ນອີກ.

2. ແມ່ນແນວໃດຈິ່ງເອີ້ນວ່າຜູ້ນຳດີແລະວິລະຊົນຜູ້ເກັ່ງກ້າໄດ້?

ຜ່ານຂະບວນການມະຫາຊົນ ທີ່ສ້າງປະຫວັດສາດຂຶ້ນ ໃນ ສະ ໄຫມ ໃດ ສະ ໄຫມຫນຶ່ງແນ່ນອນຢູ່ແລ້ວວ່າ; ໃນຂະ ບວນມະຫາຊົນນັ້ນເປັນ ແສນເປັນລ້ານຄົນນັ້ນ ຕ້ອງມີຜູ້ດີ ເດັ່ນ, ສະຫລາດສະຫລຽວຕ່າງກັນ, ມີຄວາມສາມາດຣັກ ສາບົດບາດນຳຫນ້າແລະນຳພາມະຫາຊົນໄດ້.

ແຕ່ບຸກຄົນຜູ້ນຳດີນັ້ນ ຈະຕ້ອງແມ່ນບຸກຄົນທີ່ກຳໄດ້ກົດ ເກນຂອງປະຫວັດສາດ, ເຫັນແຈ້ງຫນ້າທີ່ອັນສຳຄັນແລະ ຣີບດ່ວນຂອງປະເທດຊາດ, ເປັນຕົວແທນໃຫ້ແກ່ສິດປະ ໂຫຍດຂອງມະຫາຊົນ. ເປັນຜູ້ເບິ່ງໄກເຫັນກ້ວາງ ແລະ ມີ ນ້ຳໃຈຣັກຫອມມະຫາຊົນອັນແທ້ຈິງ. ບຸກຄົນຜູ້ນັ້ນຈະກາຍ ເປັນຜູ້ນຳຂອງຂະບວນການຂອງປະເທດຊາດໄດ້. ຈະຊຸກ ຍູ້ໃຫ້ຂະບວນການກ້າວຂຶ້ນຢ່າງວ່ອງໄວແລະຫລີກເວັ້ນໄດ້

ຄວາມເສຍຫາຍອັນຕະລາຍທີ່ເກີດຂຶ້ນ.

ຜູ້ນຳດີ ແລະບຸກຄົນທີ່ເປັນວິລະຊົນອັນເກັ່ງກ້າໃດໆກໍດີ ນັ້ນຕ້ອງແມ່ນຜູ້ທີ່ໃກ້ຊິດຕິດແຫນ້ນກັບມະຫາຊົນຄືຊີ້ນກັບກະດູກເພື່ອອາໄສກຳລັງແຮງຂອງມະຫາຊົນ ຂະຫຍາຍບົດບາດຂອງຕົນ; ຖ້າບຸກຄົນໃດ ຕີຕົວຫ່າງອອກຈາກມະຫາຊົນເຖິງວ່າ ຈະເກັ່ງກ້າປານໃດກໍບໍ່ສາມາດຈະຂະຫຍາຍບົດບາດຂອງຕົນໄດ້ ແລະ ບໍ່ສາມາດເຮັດຫລ້ອນຫນ້າທີ່ປະຫວັດສາດຂອງຕົນໄດ້. ພວກເຮົາສົ່ງເສີມການນັບຖືບົດບາດຂອງຜູ້ນຳ ແລະບຸກຄົນທີ່ດີເດັ່ນ ເພື່ອໃຫ້ເຂົາເຈົ້າ ຂະຫຍາຍບົດບາດ ອັນສຳຄັນ ເພື່ອປະກອບ ສ່ວນເຂົ້າ ໃນຫນ້າທີ່ປະຫວັດສາດນັບມື້ຫລາຍຂຶ້ນກ່ວາເກົ່າແລະເຮັດໃຫ້ຂະບວນມະຫາຊົນອັນຍິ່ງໃຫຍ່ຂອງພວກເຮົາມີບຸກຄົນດີເດັ່ນຫລາຍຂຶ້ນ.

ກົງກັນຂ້າມ, ຖ້າ ມີ ບຸກ ຄົນ ໃດ ທາງປາກກໍເວົ້າເຖິງການປະຕິວັດ, ເວົ້າເຖິງມະຫາຊົນແລະຊາດ, ປະກາດຕົນເອງວ່າເປັນນັກວິລະຊົນ, ແຕ່ການເຄື່ອນໄຫວຂອງຜູ້ນັ້ນພັດເຮັດໃຫ້ປະຫວັດສາດຖືກຊັກຊ້າ, ກໍ່ຄວາມຫຍຸ້ງຍາກ ແລະ ເສຍຫາຍແກ່ປະເທດຊາດແກ່ມະຫາຊົນ, ບັນດາບຸກ

ຄົນດັ່ງກ່າວນັ້ນ ບໍ່ຖືເປັນນັກວິລະຊົນ ຫລືຜູ້ນຳໄດ້ແລະ ກໍບໍ່ອາດຈະເຮັດໃຫ້ປະຫວັດສາດກ້າວຫນ້າຂຶ້ນໄດ້. ມີແຕ່ຈະເຮັດໃຫ້ຊາດຖືກເສື່ອມເສັຽເທົ່ານັ້ນ ; ສຸດທ້າຍເຂົາກໍຈະຖືກປະຊາຊົນດ່າປ້ຽໂຄ່ນລົ້ມລົງເທົ່ານັ້ນ.ເຫດຜົນທີ່ພາໃຫ້ເກີດຄວາມປະລາໄຊນັ້ນ ກໍແມ່ນຍ້ອນວ່າການເຄື່ອນໄຫວຂອງເຂົາເຈົ້າກົງກັນຂ້າມກັບປະຫວັດສາດ, ຂັດແຍ້ງກັບສິດປະໂຫຍດຂອງມະຫາຊົນ ; ກະໂຕເຂົາເອງບໍ່ແມ່ນກຳເນີດມາຈາກມະຫາຊົນ, ຫາກ ແທ້ ຂອງ ເຂົາແມ່ນປະຕິການຄືລູກມືອາເມລິກາທີ່ເຮົາເຫັນຢູ່ໃນລາວປະຈຸບັນນີ້.

ລວມຄວາມວ່າ : ເຖິງແມ່ນບຸກຄົນຈະເກັ່ງກ້າສາມາດພຽງໃດກໍຕາມ, ບຸກຄົນ ແມ່ນບໍ່ຕັດສິນ ປະຫວັດສາດ ໄດ້ ແຕ່ບຸກຄົນກໍ ມີຄຸນປະໂຫຍດ ສຳຄັນ ເຖິງການກ້າວຫນ້າຂະຫຍາຍຕົວຂອງປະຫວັດສາດຖ້າວ່າບຸກຄົນຜູ້ນັ້ນ ຮັກສາບົດບາດໄດ້ດ້ວຍຄວາມຕື່ນຕົວແລະກ້າວຫນ້າ ໄປຕາມແນວທາງ ຂອງ ມະ ຫາ ຊົນ ; ເພາະ ປະຫວັດສາດເວລາໃດກໍແມ່ນມະຫາຊົນເປັນຜູ້ປະດິດສ້າງຂຶ້ນ, ການປະຕິວັດເວລາໃດກໍແມ່ນມະຫາຊົນເປັນຜູ້ເຮັດຈຶ່ງສຳເລັດໄດ້.

## ປ. ເປັນຫຍັງພວກເຮົາຈຶ່ງຕ້ອງສ້າງຕົນເອງໃຫ້ມີທັດສະນະມະຫາຊົນ?

ພວກເຮົາເຮັດການປະຕິວັດແມ່ນການຕໍ່ສູ້ຊົນຊັ້ນເພື່ອໂຄ່ນລົ້ມລະບອບສັງຄົມເກົ່າທີ່ຫລ້າຫລັງ ເພື່ອປົດປ່ອຍປະຊາຊົນຜູ້ຖືກກົດຂີ່ຂູດຮີດແລະກໍ່ສ້າງລະບອບສັງຄົມໃໝ່ທີ່ກ້າວໜ້າຈະເລີນຮຸ່ງເຮືອງ. ນັ້ນແມ່ນພາລະກິດປະຫວັດສາດຂອງຊາດເຮົາ. ພາລະກິດດັ່ງກ່າວນັ້ນມັນເປັນວຽກງານອັນຍິ່ງໃຫຍ່ແລະສັບສົນທີ່ສຸດ ແຕ່ມີກຽດສະຫງ່າງາມທີ່ສຸດ.ປາກເຮັດຫລ້ອນໜ້າທີ່ອັນມີກຽດນັ້ນພວກເຮົາຕ້ອງອີງໃສ່ກຳລັງອັນມະຫາສານຂອງມະຫາຊົນ. ປາກອີງໃສ່ກຳລັງມະຫາຊົນໄດ້ ຕ້ອງມີທັດສະນະມະຫາຊົນຢ່າງຖືກຕ້ອງ. ຍ້ອນແນວນັ້ນພວກເຮົາຈຶ່ງຈຳເປັນຕ້ອງສ້າງທັດສະນະມະຫາຊົນໃສ່ຕົນເອງ

– ສ້າງຕົນເອງໃຫ້ມີທັດສະນະມະຫາຊົນແມ່ນເຮັດແນວໃດ?

1. ຕ້ອງຈິງໃຈຮັບໃຊ້ສິດຜົນປະໂຫຍດຂອງປະຊາຊົນຢ່າງສຸດອົກສຸດໃຈ. ພວກເຮົາເຮັດການປະຕິວັດແມ່ນເພື່ອຊາດແລະເພື່ອປະຊາຊົນ. ພວກເຮົາຕ້ອງປົກສິດປະໂຫຍດ

ຂອງຊາດຂອງປະຊາຊົນໄວ້ສູງກ່ວາສິດປະໂຫຍດຂອງຕົນເອງ. ໃນເນື້ອເຣັດຫຍັງ, ເວົ້າຫຍັງກໍຕ້ອງຄິດເຖິງສິດປະໂຫຍດຂອງປະຊາຊົນ,ຕ້ອງເປັນຫ່ວງເປັນໃຍນຳປະຊາຊົນຕັ້ງໜ້າຊ່ວຍເຫລືອກໍ່ສ້າງຄວາມກ້າວໜ້າ ແລະແກ້ໄຂຊີວິດການເປັນຢູ່ໃຫ້ປະຊາຊົນ. ວຽກງານອັນໃດທີ່ຈະນຳຜົນປະໂຫຍດມາໃຫ້ແກ່ຊາດ ແລະປະຊາຊົນແລ້ວເຖິງວ່າຈະຫຍຸ້ງຍາກປານໃດກໍຕ້ອງພະຍາຍາມເຣັດໃຫ້ໄດ້. ສິ່ງໃດທີ່ຈະນຳຜົນເສຍຫາຍມາໃຫ້ມະຫາຊົນ ແມ່ນບໍ່ເຣັດເດັດຂາດເຖິງມັນຈະມີຜົນໃຫ້ແກ່ຕົນເອງ ກໍ່ຕ້ອງພະຍາຍາມຫລີກເວັ້ນໃຫ້ໄດ້.

ຕ້ອງອອກແຮງຕ້ານແນວຄິດທີ່ເຫັນແກ່ຕົວ, ປາກຂູດຮີດປະຊາຊົນ, ບໍ່ນັບຖືຮັກແພງສິດປະໂຫຍດຂອງມະຫາຊົນ. ສິ່ງສຳຄັນທີ່ສຸດແມ່ນຕ້ານສຸດຂີດແນວຄິດແລະການກະທຳທີ່ເອົາການປະຕິວັດບັງໜ້າ ເພື່ອເຄື່ອນໄຫວຫາລາງໄດ້ສ່ວນຕົວເຊັ່ນ: ຄ້າຂາຍຫາລາຍໄດ້, ບັງຄັບເກັບເກນເອົາຂອງປະຊາຊົນ ມາຮັບໃຊ້ສິດຜົນປະໂຫຍດສ່ວນຕົວ, ຕ້ອງຕ້ານແນວຄິດເມີນເສີຍບໍ່ຫ່ວງ ບໍ່ໃຍນຳຊີວິດການເປັນ

ປູ່ຂອງມະຫາຊົນ, ຖ້າຜູ້ໃດຫາກຕ້ານແນວຄິດ ແລະ ການກະທຳດັ່ງກ່າວນັ້ນບໍ່ໄດ້ກໍຈະຕ້ອງຖືກປະຫວັດສາດ ແລະ ປະຊາຊົນໂຄ່ນລົ້ມລົງຢ່າງບໍ່ຕ້ອງສົງໄສ.

2. ຕ້ອງຮັກແພງ,ນັບຖື,ເຊື່ອໝັ້ນໃນກຳລັງແລະຄວາມສາມາດຂອງປະຊາຊົນ. ຮັກແພງປະຊາຊົນແມ່ນຮັກແພງຊົນຊັ້ນຂອງຕົນ, ຄວາມຮັກແພງນັ້ນຕ້ອງສະແດງອອກທາງດ້ານການຕໍ່ສູ້ປ້ອງກັນຊີວິດອິນຊີຂອງປະຊາຊົນ, ບໍ່ຍອມປະໃຫ້ສັດຕູ ຂູດຣີດຂົ່ມເຫັງ, ພ້ອມກັນນັ້ນກໍຊ່ວຍເຫລືອສຶກສາອົບຮົມໃຫ້ປະຊາຊົນ ມີຄວາມຮູ້ສຶກຕື່ນຕົວກ້າວໜ້າ, ບໍ່ປະໃຫ້ເປັນຄົນໂງ່ຈ້າຫລ້າຫລັງແລະຕົກໃສ່ກົນອຸບາຍຫລອກລວງຂອງສັດຕູ.

– ນັບຖືປະຊາຊົນແມ່ນນັບຖືຄວາມຄິດ ຄວາມເຫັນຂອງເຂົາເຈົ້າ, ນັບຖືສິດເສລີພາບປະຊາທິປະໄຕແລະຮີດຄອງປະເພນີອັນດີງາມຂອງປະຊາຊົນເຊື່ອໝັ້ນໃນກຳລັງແລະຄວາມສາມາດຂອງປະຊາຊົນ, ເຊື່ອໝັ້ນວ່າອັນນັ້ນແມ່ນພື້ນຖານຕົວຈິງ ໃນການສ້າງຕົວ ໃຫ້ມີທັດສະນະມະຫາຊົນ; ຕ້ອງເຊື່ອວ່າມະຫາຊົນ ເປັນກຳລັງອັນຍິ່ງໃຫຍ່

ແລະເຂັ້ມແຂງກ່ວາກຳລັງໃດໝົດ; ເມື່ອມະຫາຊົນຕື່ນຕົວແລ້ວຂຸດພູຖົມທະເລກໍໄດ້, ວຽກງານອັນໜັກຫນ່ວງທຸກສິ່ງທຸກຢ່າງທີ່ພັກວາງອອກແມ່ນປະຊາຊົນເຮັດໄດ້, ເຖິງຈະແມ່ນວຽກຫຍຸ້ງຍາກສັບສົນພຽງໃດກໍຕາມ ເມື່ອພວກເຮົາມີການຈັດຕັ້ງນຳພາປະຊາຊົນ ຢ່າງແທດເຖິງແລ້ວແມ່ນບໍ່ມີວຽກອັນໃດທີ່ປະຊາຊົນຈະເຮັດບໍ່ໄດ້.

ແຕ່ປາກປະຕິບັດຂໍ້ນີ້ໃຫ້ຖືກຕ້ອງພວກເຮົາຕ້ອງເຊື່ອມຕົວເຂົ້າໃນໝູ່ປະຊາຊົນຮ່ວມກິນ, ຮ່ວມຢູ່, ຮ່ວມເຮັດແລະຮ່ວມສຶກສາອົບຮົມຮ່ຳຮຽນນຳມະຫາຊົນໃຫ້ດີ, ເພື່ອສ້າງຄວາມຮັກແພງສະໜິດສະໜົມກັບປະຊາຊົນ,ດ້ານໜຶ່ງກໍເພື່ອສືບຮູ້ຊີວິດການເປັນຢູ່, ຄວາມຂັດຂ້ອງໝອງໃຈແລະຄວາມນັກຄວາມປະສົງ ຂອງປະຊາຊົນເພື່ອມີແຜນການແກ້ໄຂໃຫ້ເຂົາເຈົ້າທັນເວລາ; ດ້ານໜຶ່ງອີກກໍເພື່ອໂຄສະນາອົບຮົມນຳພາເຂົາເຈົ້າ, ທັງຮ່ຳຮຽນເອົາບົດຮຽນຕົວຈິງ, ທັງສະຫລຸບຖອດຖອນບົດຮຽນໃຫ້ມະຫາຊົນ. ມີແຕ່ໃກ້ຊິດສະໜິດສະໜົມກົ້ງເກືອກລີ້ເລືອນຳປະຊາຊົນແນວນັ້ນຈິ່ງເຮັດໃຫ້ມະຫາຊົນຮັກແພງເຊື່ອຖືແລະນັບຖື, ເວລາ

ນັ້ນຈຶ່ງອີງໃສ່ກຳລັງຂອງມະຫາຊົນໄດ້ ເພື່ອດຳເນີນວຽກງານຕ່າງໆ ໃຫ້ສຳເລັດຜົນໄດ້ແລະກໍມີແຕ່ອີງໃສ່ກຳລັງຂອງມະຫາຊົນເທົ່ານັ້ນ ຈຶ່ງຈະເຮັດການປະຕິວັດໄປເຖິງກົກເຖິງປາຍໄດ້, ໄຊຊະນະຂອງການປະຕິວັດຈຶ່ງໄປເຖິງຂັ້ນສົມບູນໄດ້.

ແຕ່ພວກເຮົາຕ້ອງຕ້ານໃຫ້ໄດ້ແນວຄິດອາດຍາສິດຂຸນເສິກບໍ່ຮັກແພງນັບຖືປະຊາຊົນ, ຕ້ານການນາບຂູ່ແນວຄິດດູໝິ່ນປະໝາດປະຊາຊົນ, ບໍ່ເຊື່ອໝັ້ນກຳລັງມະຫາຊົນ, ອູ້ມວຽກອູ້ມງານ, ບໍ່ກ້າມອບວຽກງານໃຫ້ຜູ້ອື່ນ, ບໍ່ຟັງຄວາມຄິດຄວາມເຫັນຂອງປະຊາຊົນ, ຖືວ່າປະຊາຊົນໂງ່ຈ້າ, ຕີໂຕສູງກວ່າຜູ້ອື່ນໝົດ, ເກັ່ງກ້າກວ່າມະຫາຊົນໂດຍບໍ່ອີງໃສ່ກຳລັງມະຫາຊົນ. ບຸກຄົນໃດຫາກເປັນແນວນັ້ນແມ່ນຂາຫວິດດິນແລ້ວກໍຈະຖືກປະຫວັດສາດ ແລະປະຊາຊົນໂຄ່ນລົ້ມເທົ່ານັ້ນ.ດ້ານໜຶ່ງກໍຕ້ານແນວຄິດມັກສະຫງົບຢ້ານທຸກຍາກຢ້ານຕາຍ, ເຮັດວຽກແບບອາດຍາໃຊ້ແຕ່ຄຳສັ່ງໂດຍບໍ່ອີງໃສ່ສິດປະຊາທິປະໄຕຂອງມະຫາຊົນແລະໝູ່ຄູ່, ອັນສຳຄັນທີ່ສຸດແມ່ນຕ້ອງຕ້ານເດັດຂາດການພົວພັນ

ກັບປະຊາຊົນເພື່ອຫາຜົນປະໂຫຍດສ່ວນຕົວ. ຂູດຮີດກົນ ເຫື່ອແຮງຂອງປະຊາຊົນ ເຊິ່ງເປັນການນຳຜົນເສຍຫາຍມາ ໃຫ້ແກ່ການປະຕິວັດ.

ສະຫລຸບຄວາມວ່າ: ທັດສະນະມະຫາຊົນແມ່ນວິທີເບິ່ງ ສັງເກດຕີລາຄາບົດບາດຂອງມະຫາຊົນໃຫ້ຖືກຕ້ອງແລະ ວາງທ່າທີຂອງຕົນໃຫ້ໄປຕາມແນວທາງຂອງມະຫາຊົນ.

ພວກເຮົາ, ເຮັດການປະຕິວັດແມ່ນເຮັດໜ້າທີ່ອັນໜັກ ໜ່ວງຂອງປະຫວັດສາດແຫ່ງຊາດ ເຊິ່ງເປັນພາລະກິດ ໜ້າທີ່ລວມທົ່ວມະຫາຊົນ. ດັ່ງນັ້ນ ຈຶ່ງ ຕ້ອງ ຮູ້ ກຳ ລັງ ມະຫາສານຂອງຕົນ (ໝາຍຄວາມວ່າຮັບຮູ້ບົດບາດຂອງ ມະຫາຊົນ) ພ້ອມກັບນັ້ນກໍ່ຕ້ອງຈຳແນກທັດສະນະຂອງ ພວກປະຕິການ ແລະທັດສະນະປະຕິວັດກ່ຽວກັບມະຫາ ຊົນໃຫ້ຈະແຈ້ງ ເພື່ອໃຫ້ເຫັນວ່າກຳລັງແຮງຂອງມະຫາ ຊົນແມ່ນກຳລັງຕັດສິນຊີ້ຂາດ ການຂະຫຍາຍຕົວຂອງປະ ຫວັດສາດສັງຄົມ.

ຮັບຮູ້ຖືກຕ້ອງຄືແນວນັ້ນຈຶ່ງຈະກໍ່ ສ້າງ ຕົນ ເອງ ໃຫ້ ມີ ທັດສະນະມະຫາຊົນໄດ້ຄື: ຮູ້ຈັກໜ້າທີ່ແລະກຽດສັກສີ

ຂອງນັກປະຕິວັດ, ເວລາໃດກໍ່ຍອມເສຍສະຫລະ ສິດປະໂຫຍດສ່ວນຕົວເພື່ອຮັບໃຊ້ສິດປະໂຫຍດຂອງປະຊາຊົນຢ່າງສຸດຈິດສຸດໃຈ. ຮູ້ຈັກຮັກແພງ, ນັບຖືແລະເປັນຫ່ວງເປັນໃຍນຳປະຊາຊົນ, ເປັນຜູ້ເຊື່ອຫມັ້ນແລະຮູ້ອີງໃສ່ປະຊາຊົນເພື່ອດຳເນີນວຽກງານຂອງການປະຕິວັດ, ພ້ອມກັນນັ້ນກໍ່ເພື່ອດັດແປງບັນດາແນວຄິດ ແລະ ການກະທຳທີ່ເຄິ່ງຜິດພາດທີ່ນຳຜົນເສຍຫາຍມາໃຫ້ການປະຕິວັດ ເຊິ່ງບໍ່ໄປຕາມທັດສະນະມະຫາຊົນ. ພວກເຮົາເຮັດແນວນັ້ນກໍ່ເພື່ອພາລະກິດປະຫວັດສາດອັນຍິ່ງໃຫຍ່ຂອງຊາດເຮົາ.

ພິມທີ່ໂຮງພິມແຫ່ງຊາດ
ພິມຈຳນວນ 10.000 ຫົວ ຂະໜາດ 13×18,4
ພິມແລ້ວວັນທີ 30. 9. 78

ລາຄາ 140 ກີບ